<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>

**Copyright © 2007 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-4
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 5-7
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lessons 5-7
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 8-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8-10
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ເວລາສິ່ງທີ່ຊົ່ວຮ້າຍເກີດຂຶ້ນກັບຄົນທີ່ດີ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢບ 1:1, 1:6-2:10

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢບ 1:1-2:10

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມຈົ່ມຂອງໂຢບ ບໍ່ແມ່ນວ່າເປັນຫຍັງບັນຫາຈຶ່ງເກີດຂຶ້ນແກ່ຄົນຊອບທັມ

**ຄຳຖາມເພື່ອສຳຣວດ:** ການດຳເນີນໃນທາງຊອບທັມເປັນສິ່ງປ້ອງກັນສິ່ງທີ່ບໍ່ດີໄດ້ບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຮວບຮວມເຣື່ອງຂອງໂຢບແລະສຶກສາເບິ່ງຄຳຖາມຂອງລາວເມື່ອບັນຫາເກີດຂຶ້ນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ຢັ້ງຢືນວ່າພຣະຄັມພີມີອຳນາດ ນຳພາຊີວິດໄປສູ່ຄວາມສຸກທີ່ແທ້ຈິງໄດ້
- ແບ່ງປັນພຣະກິດຕິຄຸນຂອງພຣະເຢຊູໃຫ້ແກ່ທຸກໆຄົນ
- ຂຍາຍການເຕີບໃຫຍ່, ເຮັດໃຫ້ຄວາມເຊື່ອມີຄວາມໝາຍ

## ຄຳນຳ

ທ່ານຄົງຈະເຫັນຮູບພາບໃນຈໍໂທຣະທັດ ຫລືໃນໜ້າໜັງສືພິມເກືອບທຸກວັນ. ໜ້າຂອງເຂົາບໍ່ຍິ້ມບໍ່ຫົວ. ພວກເດັກນ້ອຍນີ້ເຂົາກຳລັງຫິວ, ບາງຄົນກໍແມ່ນເຍື່ອຂອງສົງຄາມທີ່ພວກເຂົາບໍ່ໄດ້ກໍ່ຂຶ້ນ, ບາງຄົນກໍອຶດຫິວຍ້ອນພັຍທັມຊາດທີ່ບໍ່ສາມາດຄວບຄຸມໄດ້. ພວກເຂົາຈຶ່ງພາກັນໄດ້ຮັບຄວາມຣະທົມຂົມຂື່ນ ໂສກເສົ້າ ໃນຂນະທີ່ເດັກນ້ອຍອື່ນໆ ກຳລັງມ່ວນຊື່ນຢອກລໍ້ກັນຢ່າງສນຸກສນານ. ເປັນຫຍັງຄົນດີແລະຄົນໄຮ້ດຽງສາຈຶ່ງພາກັນໄດ້ຮັບຄວາມໂສກເສົ້າ? ພວກເຮົາເຂົ້າໃຈດີວ່າຖ້າການຕິດຕາມມານຊາຕານ ຈະຕ້ອງໄດ້ຮັບການຕອບສນອງຢ່າງເໝາະສົມ. ແຕ່ນີ້ຈະອະທິບາຍຢ່າງໃດເມື່ອຄົນດີແລະຄົນຂອງພຣະເຈົ້າມີຄວາມໂສກເສົ້າ?

ຄຳຖາມນີ້ຕິດຕາມມະນຸດຊາດມາໄດ້ຫລາຍຍຸກຫລາຍສມັຍມາແລ້ວ. ບາງຄັ້ງກໍຍັງເຮັດໃຫ້ຄົນດີໆ ເລີກລົ້ມການກະທຳດີ. ບາງຄັ້ງກໍເຮັດໃຫ້ຄົນທີ່ເຊື່ອໃນພຣະເຈົ້າລະຖິ້ມຄວາມເຊື່ອແລ້ວກໍຫັນຫລັງໃຫ້ກັບພຣະອົງ. ຄົນທັງຫລາຍຈະຖາມວ່າເປັນຫຍັງທ່ານຈຶ່ງເຊື່ອໃນພຣະເຈົ້າ ທັ້ງ ໆທີ່ບັນຫາແລະຄວາມໂສກເສົ້າຍິ່ງຫລາຍກວ່າຄົນອື່ນເຂົາ.

ເຣື່ອງຂອງໂຢບເປັນເຣື່ອງທີ່ຫລາຍຄົນກຳລັງຕໍ່ສູ້ຢູ່, ຕໍ່ສູ້ກັບຄອບຄົວ, ໝູ່ຄູ່, ແລະພຣະເຈົ້າ. ໃນພຣະຄັມພີອາດຈະບໍ່ຕອບລະອຽດລະອໍໃຫ້ຖືກກັບບັນຫາທີ່ທ່ານກຳລັງພົບຢູ່. ແຕ່ເຮົາກໍຄວນຈະພິຈາຣະນາເຖິງບັນຫາໃຊ້ຄວາມເຊື່ອແລະຄວາມຫວັງຂັບໄລ່ຄວາມໂສກເສົ້າ ແລະຄວາມເຈັບປວດເຫລົ່ານັ້ນ.

**ຊາຍຄົນນຶ່ງ ຊື່ຂອງລາວວ່າ ໂຢບ (1:1)**

ໂຢບແມ່ນໃຜ? ແມ່ນຊາຍຄົນນຶ່ງທີ່ຕັ້ງຖິ່ນໃນແຜ່ນດິນ "ອູຊ" ແຜ່ນດິນ "ອູຊ" ແມ່ນກວມລວມເມືອງ ເອໂດມ ໃນພຣະຄັມພີ, ຊຶ່ງຕັ້ງຢູ່ຣະຫວ່າງກາງຂອງ ທະເລຕາຍ ແລະ ອາຣັບເບັຍ (ເບິ່ງໃນບົດເພັງຄ່ຳຄວນ 4:21).ໂຢບເປັນຄົນຮັ່ງມີ , ລາວເປັນຄົນດີຮອບຄອບ ມີສິລທັມ ແລະເປັນຄົນຮັກຄອບຄົວ ແລະຍັງເປັນຄົນຮັກຄົນໃກ້ຄຽງ ແລະຍັງເປັນຄົນຢຳເກງພຣະເຈົ້າ. ຊື່ສຽງຂອງລາວກໍໂດ່ງດັງ ແລະມີຊີວິດທີ່ອຸດົມສົມບູນຫລາຍ ໃນເຂດນັ້ນ.

ຖ້າຈະເວົ້າອີກຄວາມນຶ່ງວ່າ "ດີຈົນບໍ່ມີບ່ອນຕິໄດ້" ນີ້ລະທີ່ຈະນຳພາພວກເຮົາໄປເຖິງພຣະທັມໂຢບ. ໃນສມັຍນັ້ນກໍຍັງເຊື່ອວ່າຖ້າຜູ້ໃດຮັ່ງມີເປັນດີຜູ້ນັ້ນກໍເປັນຜູ້ທີ່ພຣະເຈົ້າອວຍພຣະພອນ ກົງກັນຂ້າມ ຖ້າຜູ້ໃດທາກທຸກຍາກຂັດສົນ ມີບັນຫາ ໂສກເສົ້າ ກໍຖືວ່າພຣະເຈົ້າຊົງລົງໂທດ ຫລືວ່າຜູ້ນັ້ນກໍຕ້ອງເປັນຄົນບາບ.

ພຣະທັມໂຢບບໍ່ໄດ້ເປີດເຜີຍຄວາມທຸກທໍຣະມານຫລາຍປານໃດ ພຽງແຕ່ເບິ່ງປະສົບການຂອງຄົນໆນຶ່ງທີ່ມີຄວາມເຊື່ອແຕ່ໄດ້ຮັບເຄາະຮ້າຍຢ່າງຮ້າຍແຮງ. ສຳລັບໂຢບແລ້ວ ສິ່ງທີ່ເກີດຂຶ້ນກັບລາວເປັນພຽງແຕ່ພາຍນອກ ແລະລາວກໍຍັງເຂົ້າໃຈວ່າສິ່ງທັງຫມົດເຫລົ່ານີ້ແມ່ນຂອງໂລກນີ້ແລະກໍເປັນພຽງຊົ່ວຄາວເທົ່ານັ້ນ. ໂຢບໄດ້ຮັບຄຳຕອບທັງຫມົດທີ່ລາວຖາມໄປຫລືບໍ່? ເປັນການຍາກ, ສິ່ງທີ່ໂຢບໄດ້ຮັບກໍຄືບົດຮຽນຕົວຈິງແຫ່ງຊີວິດ.

**ທົດລອງ, ທົດລອງ (1:6-2:10)**

ສະຖານະການຕ່າງໆ ຖ້າຈະເບິ່ງລວມແລ້ວແມ່ນມາລວມຢູ່ທີ່ອົງຜູ້ຊົງມີພຣະປີຊາສາມາດ. ລອງອ່ານເບິ່ງໃນຕອນນີ້ ພວກເຮົາຈະເຫັນ "ຮູບພາບທີ່ຈະແຈ້ງ" ເຮົາບໍ່ຈຳເປັນຕ້ອງໃຊ້ເວລາຫລາຍເກີນໄປທີ່ຈະໄປພິຈາຣະນາຫຍັງຍາກ ແລ້ວພວກເຮົາຈະຮູ້ຈັກເອງ (1ໂກຣິນໂທ 13:12). ໂຢບກຳລັງຂາດສິ່ງເຫລົ່ານີ້ ແມ່ນແຕ່ຕົວລາວເອງກໍຍັງບໍ່ຮູ້.

ວັນນຶ່ງ ບັນດາເທພບຸດ (ປຶ້ມບາງຫົວກໍບອກວ່າ ບັນດາລູກຂອງພຣະເຈົ້າ) ທັງຫລາຍເຂົ້າມາລາຍງານຕົວຕໍ່ພຣະເຈົ້າ, ຊາຕານກໍໄດ້ສວຍໂອກາດເຂົ້າມາໃນຫມູ່ພວກເຂົາດ້ວຍ. ໃນນັ້ນອົງພຣະຜູ້ເປັນເຈົ້າກໍໄດ້ຊັກໃຊ້ໄຕ່ຖາມຊາຕານແລະກໍໄດ້ກ່າວຕໍ່ມັນວ່າ" ເຈົ້າໄດ້ພິຈາຣະນາເບິ່ງ ໂຢບຜູ້ຮັບໃຊ້ຂອງເຮົາບໍ? " ລາວເປັນຄົນດີຮອບຄອບ. ຊາຕານກໍໂຕ້ຕອບພຣະເຈົ້າຄືນທັນທີວ່າ "ໂຢບຢຳເກງພຣະເຈົ້າຊື່ໆບໍ?" ເມື່ອມາວິໄຈໃນຄວາມເວົ້າຕອນນີ້ແລ້ວ ເຮົາກໍຈະເຫັນໄດ້ວ່າມີສິ່ງໃດສິ່ງນຶ່ງທີ່ບັງຄັບໃຫ້ໂຢບເຊື່ອໃນພຣະເຈົ້າບໍ?. ລາວມີຄວາມຊອບທັມກໍເພາະມີອັນໃດອັນນຶ່ງເຮັດໃຫ້ລາວຊອບທັມບໍ?.....(1:9)

ສິ່ງທີ່ກ່າວມາທັງຫມົດນັ້ນຜິດພາດໄປຫມົດ, ຊາຕານກໍເຂົ້າໃຈຜິດ ແລະມັນກໍຮູ້ດີວ່າມັນຈະເອົາຊະນະພຣະເຈົ້າບໍ່ໄດ້. ມັນຈຶ່ງພະຍາຍາມທີ່ຈະກີດກັ້ນຄວາມສັມພັນຣະວ່າງພຣະເຈົ້າກັບມະນຸດ ບໍ່ຢາກໃຫ້ມະນຸດເຫັນພຣະຄຸນຂອງພຣະເຈົ້າ, ບໍ່ຢາກໃຫ້ມະນຸດເຫັນພຣະພອນຂອງພຣະເຈົ້າ. ນີ້ລະຄືການພາດລົ້ມຂອງມະນຸດໃນປະຖົມມະການ (ປະຖົມມະການ ບົດທີ 3) ແລະກໍມາເກີດຂຶ້ນໃນສມັຍຂອງໂຢບອີກ.

ການສູນເສັຍຂອງໂຢບ: 1. ຄົນເສບາ ມາໂຈມຕີ ເອົາງົວແລະຂ້າຄົນໃຊ້ (1:14-16)
2. ຄົນເຄນເດັຍ ມາປຸ້ນເອົາອູດ ແລະຂ້າຄົນໃຊ້ (1:17)
3. ພາຍຸໃຫຍ່ ໄດ້ຂ້າລູກຊາຍຍິງ (1:18-19)

ໂຢບບໍ່ເຄີຍປ້ອຍດ່າພຣະເຈົ້າ ລາວນະມັສການພຣະເຈົ້າ ແລະຍັງຢັ້ງຢືນວ່າຂໍໃຫ້ພຣະນາມຂອງພຣະເຈົ້າເປັນທີ່ສັກກາຣະບູຊາ. (1:20-21)

ຍັງບໍ່ເປັນທີ່ພໍໃຈຂອງຊາຕານ, ວັນນຶ່ງບັນດາເທພບຸດ (ບັນດາລູກຂອງພຣະເຈົ້າ) ກໍມາລາຍງານຕົວອີກ ຊາຕານກໍທໍາຕົວເຫມືອນເດີມ ເພາະເປົ້າຫມາຍຂອງມັນແມ່ນເພື່ອຈະທໍາລາຍ ຄົນທີ່ເຊື່ອໃນພຣະເຈົ້າ. ພຣະເຈົ້າຍັງຢໍ້າຄວາມເກົ່າວ່າໂຢບເປັນຄົນດີຮອບຄອບ. ຜູ້ທີ່ມັກຫາເຣື່ອງມັນກໍຈະຊອກເຣື່ອງບໍ່ຢ່າງໃດກໍຢ່າງນຶ່ງ. (2:1-5) ແຕ່ພຣະເຈົ້າກໍຍັງຄົງຫມັ້ນໃຈໃນຄົນຂອງພຣະອົງ (2:6)

ບໍ່ແມ່ນແຕ່ໂຢບຄົນດຽວ, ພວກເຮົາກໍເຊັ່ນກັນຄວນຮັບຄວາມໂສກເສົ້າ ແລະຕຽມຕົວຮັບສິ່ງທີ່ຈະມາເຖິງຕົວເຮົາໃນພາຍຄັ້ງຫນ້າ. ແຕ່ພວກເຮົາຕ້ອງເຂົ້າໃຈວ່າ ພຣະເຈົ້າມີແຜນການດີທຸກຢ່າງຕໍ່ຄົນຂອງພຣະອົງ.

<u>ການຝຶກຝົນຕົນເອງເພື່ອຮັບສະພາບການ</u>

ຊີວິດຂອງຄຣິສຕຽນບໍ່ແມ່ນຊີວິດແບບງ່າຍໆແບບລອກໆ. ຊີວິດຄຣິສຕຽນແມ່ນຊີວິດທີ່ມີຄວາມເຂົ້າໃຈ: ເຂົ້າໃຈໃນຄອບຄົວ, ເຂົ້າໃຈໃນການດໍາເນີນຊີວິດ, ເຂົ້າໃຈພຣະຄັມພີ, ເຂົ້າໃຈໃນຣະບົບຂອງຄວາມເຊື່ອ.

ໃນກໍຣະນີຂອງໂຢບ, ລາວຮູ້ສຶກສໍາບາຍ, ລາວຄິດວ່າຈະບໍ່ມີບັນຫາອັນໃດອີກແລ້ວໃນຊີວິດຂອງລາວ. ເມື່ອບັນຫາໃຫຍ່ພັດເຂົ້າມາໃນຊີວິດຢ່າງແຮງເຊັ່ນນີ້ ກໍເຮັດໃຫ້ລາວຕ້ອງທໍ້ເຂົ່າອ່ອນ ແລະຖາມພຣະເຈົ້າຢ່າງໃຫຍ່. ຖ້າຢ່າງນັ້ນພວກເຮົາຈະເຮັດຢ່າງໃດ?

ກ. ຈົ່ງຈໍາໄວ້ວ່າ ເວລາເຮົາເຂົ້າມາເປັນຄຣິສຕຽນແລ້ວ ແມ່ນການເດີນທາງແບບໃຫມ່ຕລອດຊີວິດ
ຂ. ຈົ່ງຈໍາໄວ້ວ່າ ການຢູ່ໃນສັງຄົມແມ່ນຢູ່ຮ່ວມກັນ, ເວລາຢູ່ຮ່ວມກັນກໍຍ່ອມຈະມີຄວາມໂສກເສົ້າ, ມີບັນຫາປະປົນໄປນໍາ ບໍ່ວ່າທາງດ້ານສຸຂພາບຫລືທາງຈິດວິນຍານ.
ຄ. ຈົ່ງຈໍາໄວ້ວ່າ ບັນຫາບາງອັນກໍຮູ້ທີ່ມາຂອງມັນ, ບາງບັນຫາກໍບໍ່ຮູ້ວ່າເປັນມາໄດ້ຢ່າງໃດ
ງ. ຈົ່ງຈໍາໄວ້ວ່າ ພຣະເຈົ້າແມ່ນຜູ້ທີ່ຮູ້ທຸກຢ່າງ, ມີອໍານາດເຫນືອທຸກຢ່າງ

ຂ້າພະເຈົ້າຍັງຈໍາໄດ້ດີ ຕອນທີ່ຂ້າພະເຈົ້າ ເປັນສິດຍາພິບານທີ່ຄຣິສຕະຈັກແຫ່ງນຶ່ງ. ມີສະມາຊິກຄົນນຶ່ງຕຽມຕົວຈະເຂົ້າຫ້ອງຜ່າຕັດ. ກ່ອນຈະເຂົ້າໄປໃນຫ້ອງຂ້າພະເຈົ້າໄດ້ໄປອ້ອນວອນແລະຫນູນໃຈ. ລາວກ່າວກັບຂ້າພະເຈົ້າວ່າ: "ຊີວິດຂອງຂ້ານ້ອຍແມ່ນຢູ່ໃນອົງມືຂອງພຣະເຈົ້າ ຈະເປັນຫລືຈະຕາຍແມ່ນພຣະເຈົ້າເປັນຜູ້ຊີ້ນໍາທັງຫມົດ."

<u>ຄໍາຖາມ</u>

1. ໃນຊີວິດຂອງທ່ານ, ທ່ານເຄີຍເຫັນຜູ້ໃດແດ່ບໍ່ທີ່ເປັນຄົນດີຮອບຄອບ? ເຂົາເຮັດຢ່າງໃດແດ່?

2. ທ່ານເຄີຍເຫັນຜູ້ໃດແດ່ທີ່ດີຮອບຄອບ ແຕ່ຍັງມີບັນຫາຫລາຍ? ຖ້າເຫັນຢ່າງນັ້ນ ທ່ານມີຄວາມຄິດແນວໃດ?

3. ຊາຕານໄດ້ໂຕ້ຕອບກັບພຣະເຈົ້າ ໂດຍອີງໃສ່ວັດຖຸນອກກາຍທີ່ໂຢບໄດ້ຮັບ. ແມ່ນຫຍັງຄືປັດໃຈໃນການຮັບໃຊ້ພຣະເຈົ້າ? ທ່ານເຄີຍເຫັນການຮັບໃຊ້ໃນການເຫັນແກ່ຕົວບໍ່? ຢູ່ໃສ?

*ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 2

## ທໍຣະມານເພາະຫຍັງກັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢບ ບົດທີ 3

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢບ 2:11-3:26

**ຈຸດສຳຄັນຂອງບົດຮຽນນີ້:** ໃນຂະນະທີ່ຄົນທັງຫລາຍຍັງສົງສັຍໃນບັນຫາ, ມັນກໍເປັນການງ່າຍດາຍທີ່ສຸດທີ່ຈະນຳໄປສູ່ຄວາມຫລົ້ມເຫລວ ແລະຄຳຖາມທີ່ວ່າ "ເປັນຫຍັງ" ຈະຕິດຕາມມາຢ່າງວ່ອງໄວ.

**ຄຳຖາມເພື່ອສຳຣວດ:** ເວລາບັນຫາສຸມເຂົ້າມາໃນຊີວິດຂອງພວກເຮົາ ເຮົາຈະເຮັດຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຮົາໄດ້ເຫັນຄຸນຄ່າໃນການຕອບຮັບບັນຫາຂອງໂຢບ, ແລະຈະໄດ້ນຳໄປຫມູນໃຊ້ໃນເມື່ອຄາວຈຳເປັນ.

**ເນັ້ນຫນັກເຖິງການສຶກສາແລະການກະທຳ**

- ຢັ້ງຢືນວ່າພຣະທັມຄັມພີມີອຳນາດໃນການນຳພາຊີວິດ ແລະ ການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ຫມູນໃຈຄອບຄົວຄຣິສຕຽນໃຫ້ມີສຸຂພາບດີ

### ຄຳນຳ

ຖ້າທ່ານເຄີຍມີລູກ, ມີຫລານບໍ່? ຖ້າບໍ່ທັນມີທ່ານເຄີຍໄດ້ຫລິ້ນກັບເດັກນ້ອຍແດ່ບໍ່? ຖ້າເຄີຍມີ, ທ່ານຄົງຈະຄຸ້ນເຄີຍກັບຄຳຖາມທີ່ວ່າ: ເປັນຫຍັງ? ເວລາເຮົາເຮັດສິ່ງໃດສິ່ງນຶ່ງ ເຮົາຈະໄດ້ຄຳຖາມສະທ້ອນຄືນເລື້ອຍໆວ່າ ເປັນຫຍັງ, ເປັນຫຍັງ, ເປັນຫຍັງ..................ເປັນຫຍັງຈຶ່ງມີແດດ? ເປັນຫຍັງຝົນຈຶ່ງຕົກ? ເປັນຫຍັງທ້ອງຟ້າຈຶ່ງມີສີເຟື້ອ? ເປັນຫຍັງຫມາຈຶ່ງເຫົ່າ? ເປັນຫຍັງຂ້ອຍຈຶ່ງຕ້ອງເປັນຄົນດີ? ເຖິງແມ່ນວ່າພວກເຮົາຕອບໄປແລ້ວ ຄຳຖາມເປັນຍັງອອກມາອີກຢູ່ ບາງຄັ້ງກໍຈົນເມື່ອຍຕອບ, ບາງຄັ້ງກໍຕອບບໍ່ໄດ້.

ດ້ວຍຄຳຖາມເຫລົ່ານີ້ກໍແມ່ນຄວາມຢາກຮູ້ຢາກເຫັນຂອງພວກເຂົາ ແລະກໍເປັນປະສົບການໃຫມ່ໆທີ່ຢູ່ອ້ອມຮອບພວກເຂົາ. ເມື່ອພວກເຂົາເຕີບໂຕຂຶ້ນມາພວກເຂົາກໍຈະໄດ້ພົບກັບບັນຫາເຫມືອນກັນ. ໃຫ້ພວກເຮົາມາຄິດນຳກັນວ່າ ເວລາເຮົາມີບັນຫາຢ່າງຫນັກຫນ່ວງແມ່ນເວລາໃດ: ເວລາເກີດອຸປະຕິເຫດ, ເວລາເກີດອຸທົກກະພັຍ, ເວລາເກີດໂຣກຣະບາດ, ເວລາເກີດອັກຄີພັຍ, ເວລາເກີດການວ່າງງານ, ຂາດລາຍໄດ້, ແລະຕ່າງ ໆນາ ໆ.

ທັງຫມົດນີ້ ກໍຈະແມ່ນປະສົບການຂອງຊີວິດວ່າເຮົາຈະຕໍ່ສູ້ຢ່າງໃດ. ຖ້າບັນຫາຫາກເກີດຂຶ້ນທຸກຄົນກໍຈະວາງຄຳຖາມດຽວກັນວ່າ ເປັນຫຍັງ, ເພາະຫຍັງ..... ຕິດຕາມເຣື່ອງຂອງໂຢບຕໍ່ໄປ

**ການມາຢ້ຽມຢາມຂອງເພື່ອນຝູງ (2:11-13)**

ພວກເຮົາໄດ້ກ່າວຜ່ານມາແລ້ວວ່າ ໂຢບເປັນຄົນທີ່ຮັ່ງມີ ເປັນຄົນມີສຸຂພາບແຂງແຮງດີແລະເປັນຄົນມັກມ່ວນ. ບັດນີ້

ຜູ້ຂຽນຈະໄດ້ນຳພາທ່ານມາຫາຈຸດສຳຄັນຂອງປຶ້ມເຫລັ້ມນີ້ ຄືສະຫາຍຂອງໂຢບສາມຄົນໄດ້ມາຢ້ຽມຢາມຮ່ວມທຸກ ແລະເລົ້າໂລມໃຈ. ພວກເຂົາເຈົ້າຫວັງວ່າຈະເຫັນໂຢບເຫມັງຕຶງ, ເຄື່ອນໄຫວ, ເປັນຫົວຫນ້າຄອບຄົວ, ເປັນຜູ້ມີຮ່າງກາຍແຂງແຮງສົມບູນ ແຕ່ແລ້ວພວກເຂົາກໍຕົກຕະລຶງທີ່ເຫັນໂຢບນັ່ງເຈັບປ່ວຍ, ຫນ້າຕາມອມແມມ, ຢູ່ຜູ້ດຽວຢ່າງໂດດດ່ຽວ.

ພວກເຮົາທຸກຄົນເຄີຍມີປະສົບການໃນການຢ້ຽມຢາມ. ບາງຄັ້ງເຮົາຄາດວ່າຈະເຫັນເປັນແບບນຶ່ງແຕ່ແລ້ວກໍເຫັນໃນສະພາບອີກແບບນຶ່ງ. ໂຣກພັຍໄຂ້ເຈັບ, ອາຍຸສັງຂານ ສາມາດປ່ຽນແປງສະພາບການຂອງມະນຸດໄດ້. ເພື່ອນຂອງໂຢບ 3 ຄົນທີ່ມາຢ້ຽມຢາມ ເມື່ອຫລຽວເບິ່ງແຕ່ໄກ ພວກເຂົາກໍຈຳທ່ານບໍ່ໄດ້. ພວກເຂົາບໍ່ສາມາດເວົ້າຈາອັນໃດໄດ້ນອກຈາກຈະນັ່ງຢູ່ໃກ້ເພິ່ນ.

## ຜູ້ທີ່ມີຄວາມໂສກເສົ້າຫນັກໄດ້ຈົ່ມທຸກອອກມາ (3:1-26)

ນີ້ບໍ່ແມ່ນສຽງຂອງການຈົ່ມທຸກຂອງຄົນທັມດາສາມັນ ແຕ່ເປັນສຽງຂອງຄົນທີ່ຊອບທັມ ເປັນສຽງຂອງຄົນທີ່ຮັກພຣະເຈົ້າ ແລະເປັນສຽງຂອງຄົນທີ່ນັບຖືສາສນາຢ່າງເຄັ່ງຄັດ. ໂຢບໄດ້ເຫັນຄວາມຫມາຍຂອງຊີວິດຢ່າງຄັກແນ່ ແລະຍັງສອນໃຫ້ເຫັນຄວາມເຊື່ອຢູ່ທາງໃນ. ຄວາມເຊື່ອທີ່ສາມາດອະທິບາຍເຖິງຄວາມຣະທົມຂົມຂື່ນໃນຊີວິດໄດ້, ແລະກໍຍັງໄດ້ບອກໃຫ້ລາວຮູ້ວ່າ ການເຮັດດີ ມີກຽດ ມີຊື່ສຽງ ບໍ່ສາມາດທີ່ຈະຫລີກຈາກບັນຫາໄດ້. (1:1)

ເມື່ອເຮົາຈະກ້າວເຂົ້າສູ່ການທ້າທາຍອັນໃຫມ່ ເຮົາຕ້ອງໄດ້ສູ້ຊົນ ສູ້ກັບບັນຫາ ພົບກັບຄວາມຜ່າຍແພ້ ຫລືຈະໄດ້ຊັຍຊະນະ. ຄົນທີ່ມີຄວາມເຊື່ອຈຳເປັນຈະຕ້ອງໄດ້ຊອກສແວງຫາຄຳຕອບຕາມນ້ຳພຣະທັຍຂອງພຣະເຈົ້າ ດ້ວຍການກ້າວຫນ້າ. ໃນນີ້ປະສົບການຂອງໂຢບໄດ້ເກີດຂຶ້ນໃຫ້ເຮົາເຫັນແລ້ວ. ລາວຈຳເປັນຕ້ອງກ້າວຫນ້າໄປສູ່ລຳດັບໃຫມ່, ບາດກ້າວໃຫມ່ ລາວຈະຢູ່ແບບສຳບາຍໆ ໂດຍບໍ່ເດີນໄປສູ່ບາດກ້າວໃຫມ່ກໍບໍ່ໄດ້.

ໂຢບບົດທີ 3 ບອກວ່າໂຢບເປັນທຸກຫລາຍ. ເມື່ອຄົນໆນຶ່ງຫາກປ້ອຍດ່າວັນເກີດຂອງຕົວເອງ ກໍຫມາຍຄວາມວ່າ ທັງແນວຄິດ ທັງຄວາມຮູ້ສຶກ ແມ່ນປັ່ນປ່ວນເຫມືອນລົມພາຍຸທີ່ບໍ່ມີບ່ອນຢຸດຢັ້ງ.
ຂໍ້ 1-10 ລາວຈະເວົ້າເຣື່ອງວັນເກີດຂອງລາວເອງ
ຂໍ້ 11-19 ລາວຈະເວົ້າເຣື່ອງຊີວິດແບບບໍ່ມີຄວາມຫມາຍຫຍັງຫມົດ
ຂໍ້ 20-26 ລາວຈະເວົ້າເຣື່ອງຄວາມຫວັງທີ່ມີຫນ້ອຍເຕັມທີ

ເມື່ອເຮົາອ່ານແລ້ວເຮົາຈະເຫັນວ່າ ໂຢບຜູ້ຢູ່ໃນບົດທີ 3 ນີ້ ແມ່ນຜູ້ດຽວກັບໂຢບຜູ້ຢູ່ບົດທີ 1 ແລະບົດທີ 2 ບໍ່? ຄືງແມ່ນຜູ້ດຽວກັນ ເຮົາຮູ້ວ່າລາວຮັບການທີ່ພຣະເຈົ້າຊົງທົດສອບລາວ ເພາະການທົດສອບທຸກຢ່າງຈະຍົກລະດັບຕົວຂອງເຮົາຂຶ້ນ. ລອງສັງເກດເບິ່ງຄຣິສຕຽນທີ່ບໍ່ມີການທົດສອບຈັກເທື່ອ ບໍ່ພົບບັນຫາຈັກເທື່ອ ບໍ່ພົບກັບຄວາມໂສກເສົ້າຈັກເທື່ອ ຄຣິສຕຽນຄົນນັ້ນກໍບໍ່ຮູ້ວ່າຈະຕໍ່ສູ້ຢ່າງໃດ ແລະຄຣິສຕຽນຄົນນັ້ນກໍຈະກາຍເປັນຄຣິສຕຽນທີ່ຂີ້ຄ້ານ ມັກສຳບາຍ. ເມື່ອຈະເດີນບາດກ້າວໃຫມ່ ກໍຢ້ານຈະຕຳຕໍ, ຢ້ານຈະຫຍຸ້ງຍາກ ເລີຍບໍ່ກ້າເຮັດອັນໃດ.

ມັນບໍ່ແມ່ນຂອງງ່າຍໆ ທີ່ຈະກ້າວຫນ້າ ບາງຄັ້ງກໍຕ້ອງໃຊ້ເວລາ, ບາງຄັ້ງກໍຕ້ອງໃຊ້ເຮື່ອແຮງ, ບາງຄັ້ງກໍຕ້ອງໃຊ້ຊັບສິນເງິນຄຳ, ແລະບາງຄັ້ງກໍຕ້ອງໃຊ້ນ້ຳຕາເປັນເຄື່ອງປອບໃຈ. ແຕ່ຈົ່ງຈຳໄວ້ວ່າພຣະເຈົ້າບໍ່ປະປ່ອຍໃຫ້ເຮົາສູ້ຄົນດຽວຈັກເທື່ອ. ໂຢບອາດຈະມີຄຳຖາມ ແຕ່ລາວບໍ່ເຄີຍກ່າວຄຳຫຽາບຊ້າໃຫ້ພຣະອົງ.

## ເມື່ອຄຳວ່າ "ເປັນຫຍັງ" ມາເຖິງທີຂອງເຮົາ

ຈິ່ງມາປະເຊີນກັບມັນເຖິດ !!!!! ເມື່ອເຮົາຫາກມີຊີວິດໃນໂລກນີ້ ບາງຄັ້ງເຮົາກໍອາດຈະມີຄວາມຄິດເຫມືອນກັນກັບພໍ່ຕູ້ເຖົ້າໂຢບ. ບັນຫາບາງອັນ ພວກເຮົາກໍເຂົ້າໃຈວ່າມັນເປັນມາຢ່າງໃດ. ຄົນເຮົາຈະມີຊີວິດທີ່ຍືນຍາວມີປະສົບການເຖົ້າແກ່ ແລ້ວກໍເຈັບໄຂ້ ໃນທີ່ສຸດກໍຕາຍໄປ. ລາງຄົນກໍພະຍາຍາມບັ່ນທອນຊີວິດຂອງຕົວເອງດ້ວຍສິ່ງຕ່າງໆ ເຮັດໃຫ້ຮ່າງກາຍຊຸດໂຊມ ໃນທີ່ສຸດກໍຕາຍ ກ່ອນຈະເຖິງເວລາ.

ຢ່າງໃດກໍຕາມ, ບໍ່ຊ້າກໍໄວພວກເຮົາກໍຈະໄດ້ພົບຄວາມເຈັບປວດ, ຄວາມຣະທົມຂົມຂື່ນ, ຄວນຄາງເຫມືອນກັນກັບໂຢບ ໂດຍບໍ່ມີຜູ້ໃດສາມາດຊ່ວຍເຮົາໄດ້. ໃນເວລານັ້ນລະ ມານຊາຕານ ມັນກໍຈະຖາມພຣະເຈົ້າຂອງເຮົາເຫມືອນກັນ (1:9) ທ່ານຍັງຈະຮັບໃຊ້ພຣະເຈົ້າຢູ່ບໍ່ ໃນເມື່ອທຸກຢ່າງຫາກເລວຮ້າຍລົງ? ເພື່ອຮັກສາຊີວິດຂອງຕົນທ່ານຈຳເປັນຕ້ອງປະລະພຣະເຈົ້າຫລື? ຄຳຖາມເຫລົ່ານີ້ ບໍ່ແມ່ນຄຳຖາມທີ່ຫາຄຳຕອບໄດ້ງ່າຍປານໃດ. ການທົດລອງເບິ່ງຮາກຖານຂອງຄວາມເຊື່ອ ວ່າຈະແຫນ້ນຫນາຖາວອນຫລາຍສ່ຳໃດ. ເປັນຫຍັງພວກເຮົາຈຶ່ງຕິດຕາມເສັ້ນທາງຂອງພຣະເຈົ້າ, ໃນເມື່ອເສັ້ນທາງຫາກມີແຕ່ຄວາມຫຍຸ້ງຍາກ?

ຄຳວ່າ " ເປັນຫຍັງ " ຈະພົບໃນຄຳຖາມຂອງໂຢບໃນ 3:11 ແລະ 12. ລາວມີຄວາມອຸກອັ່ງຄັ່ງແຄ້ນຫລາຍແຕ່ຖ້າເຮົາຫາກພິຈາຣະນາໃຫ້ຖີ່ຖ້ວນແລ້ວ ຈະເຫັນໄດ້ວ່າມັນເປັນພຽງຊົ່ວຄາວ ແລະສິ່ງເຫລົ່ານັ້ນກໍຍັງເປັນປະສົບການໃຫ້ແກ່ຊີວິດຂອງເຮົາ ແລະເຮົາກໍຈະໄດ້ຮູ້ວ່າຄວາມເຊື່ອຂອງເຮົາຢູ່ໃນລະດັບໃດ.

ພຣະທັມຄັມພີເປັນສິ່ງທີ່ຊ່ວຍເຮົາໄດ້ຫລາຍ ເພາະຢັ້ງຢືນເຖິງຄວາມຫມັ້ນໃຈຂອງໂຢບ ບົດທີ 1. ເຖິງໂຢບຈະສູນເສັຍວັດຖຸສິ່ງຂອງຫລາຍປານໃດ ລາວກໍຍັງຄຸເຂົ່າລົງນະມັສການພຣະເຈົ້າ.

ຂ້າພະເຈົ້າຍັງຈຳໄດ້ ໃນຕອນນຶ່ງທີ່ກອງປະຊຸມຫລວງ. ຍິງຄົນນຶ່ງອາຍຸປະມານ 35 ປີ ໄດ້ມາເລົ່າເຣື່ອງການສູນເສັຍສາມີຂອງລາວດ້ວຍອຸປຕິເຫດ. ລາວມີຄວາມທຸກໃຈຫລາຍ, ລາວວາງຄຳຖາມອອກມາວ່າ ເປັນຫຍັງລາວຈຶ່ງຕ້ອງເສັຍຊີວິດໄວແທ້ ທັງໆທີ່ລາວຄວນຈະຢູ່ອີກ 20, 30 ຫລື 50 ປີ? ເປັນຫຍັງຂ້ານ້ອຍຈຶ່ງເປັນແມ່ຫມ້າຍໄວແທ້? ຈາກນີ້ໄປຂ້ານ້ອຍຈະເດີນທາງໄປໄດ້ຄືແນວໃດ? ຂ້າພະເຈົ້າຮູ້ວ່າບາດກ້າວຈະເດີນຕໍ່ໄປນັ້ນບໍ່ງ່າຍ ແຕ່ມັນກໍເປັນບາດກ້າວທີ່ຈະເຮັດໃຫ້ລາວກ້າວຂຶ້ນໃນຄວາມເຊື່ອ.

ພວກເຮົາເຫັນໃນບົດທີ 3 ແລ້ວ ພວກເຮົາຈະເຫັນໄດ້ວ່າ ໃຜຜູ້ໃດກໍຕາມ ເມື່ອເຂົາຫາກພົບກັບບັນຫາການສູນເສັຍ, ບັນຫາການເຈັບປ່ວຍ, ເຂົາອາດຈະມີຄຳຖາມຕໍ່ພຣະເຈົ້າວ່າ " ເປັນຫຍັງ " ແຕ່ເຂົາບໍ່ຍອມປະພຣະເຈົ້າ. ພຣະເຈົ້າຈອມຣາຊາແຫ່ງຄວາມຫວັງ ຈະນຳຄວາມຫວັງມາສູ່ເຂົາອີກ.

## ຄຳຖາມ

1. ຄວາມຣະທົມຂົມຂື່ນທີ່ທ່ານເຄີຍພົບ ຫລືທ່ານເຄີຍໄດ້ຍິນ ຈາກຄຳພະຍານຂອງຄົນອື່ນ. ໃນສ່ວນເລິກຂອງຫົວໃຈທ່ານມີຄວາມຮູ້ສຶກຢ່າງໃດ?

2. ໃນການຈົ່ມທຸກຂອງໂຢບ ທ່ານມີຄວາມຮູ້ສຶກຢ່າງໃດ?

3. ພຣະເຈົ້າເຂົ້າມາມີສ່ວນຮ່ວມຄືແນວໃດຕໍ່ຄວາມຂົມຂື່ນທີ່ເກີດຂຶ້ນກັບໂຢບ?

4. ໝູ່ຄູ່ເພື່ອນຝູງເຮົາເດ ພວກເຂົາມີຄວາມຮັບຜິດຊອບຢ່າງໃດ ເມື່ອເຮົາມີບັນຫາ? ແລະຕົວເຮົາເດ ຖ້າພວກເຂົາ ມີບັນຫາ ພວກເຮົາຈະມີຄວາມຮັບຜິດຊອບຢ່າງໃດ?

5. ເວລາທ່ານມີຄວາມເຈັບຊ້ຳ ທ່ານເວົ້າຢ່າງໃດ ເພື່ອໜູນໃຈຕົວເອງ? ທ່ານມີຂໍ້ພຣະຄັມພີ ເພື່ອໜູນໃຈບໍ່? ຫລືວ່າທ່ານຈະລໍຖ້າແຕ່ຜູ້ອື່ນມາໜູນໃຈ?

*ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 3
# ຜູ້ຊ່ວຍບໍ່ຍອມຊ່ວຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢບ 4:1-9; 8:1-6; 11:1-6, 13-15

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢບ 2:11-13; 4:1--11:20

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຊ່ວຍຍິ່ງມາເພີ້ມເຕີມຄວາມໜັກໃຈ ໃຫ້ແກ່ຜູ່ທີ່ຢູ່ໃນຄວາມໂສກເສົ້າ

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງຈະເກີດຂຶ້ນຖ້າຫາກຜູ້ທີ່ຈະມາຊ່ວຍຫາກມີແນວຄິດຕໍ່ສູ້ພຣະເຈົ້າຫລາຍກວ່າຢາກຊ່ວຍເຫລືອ

**ຈຸດປະສົງຂອງບົດຮຽນ:** ເພື່ອຈະຊີ້ໃຫ້ເຫັນຄວາມຜິດພາດຂອງສະຫາຍສາມຄົນຂອງໂຢບວ່າພວກເຂົາກຳລັງເພີ້ມຄວາມໂສກເສົ້າໃຫ້ແກ່ຜູ້ທີ່ໂສກເສົ້າ.

**ເນັ້ນໜັກເຖິງການສຶກສາແລະການກະທຳ**

- ຢັ້ງຢືນວ່າພຣະທັມຄັມພີມີອຳນາດໃນການນຳພາຊີວິດ ແລະການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ແບ່ງປັນພຣະກິດຕິຄຸນແກ່ທຸກຄົນ
- ເຊື່ອຟັງແລະຮັບໃຊ້ອົງພຣະເຢຊູ ບໍ່ວ່າຈະເປັນທາງຮ່າງກາຍ, ທາງຈິດວິນຍານ ແລະທາງຄວາມຮູ້ສຶກ
- ເສີມສ້າງທຸກຄົນໃຫ້ກາຍເປັນຜູ້ນຳທີ່ໃຊ້ການໄດ້

## ຄຳນຳ

ພັຍທັມຊາດທີ່ຮ້າຍແຮງທີ່ສຸດໃນປະເທດນີ້ແມ່ນພາຍຸ ກາຕຣີນາ ຊຶ່ງບຸກໂຈມຕີເຂົ້າອ່າວທະເລ ໃນປີ 2005, ແລະກໍຕິດຕາມມາໂດຍພາຍຸ ຣີຕ້າ. ບາງສ່ວນໃນຣັດມິດຊິດຊິບປີ້, ຣັດລຸຍຊີອານາ ແລະຣັດເທັກຊັສ ຖືກທຳລາຍຢ່າງຫລວງຫລາຍ. ບ້ານເຮືອນຫລາຍພັນຫລັງ, ທຸຣະກິດການຄ້າຖືກປິດຢ່າງສິ້ນເຊີງ, ຫລາຍແສນຄົນບໍ່ມີບ່ອນຢູ່ອາສັຍ, ຊີວິດຂອງພວກເຂົາຖືກປ່ຽນແປງໄປໃນຊົ່ວເວລາວັນດຽວ.

ເມື່ອທຸກຢ່າງສງົບງຽບລົງ, ຫລາຍຄົນກໍພາກັນເວົ້າວ່າພຣະເຈົ້າລົງໂທດ ເພາະເມືອງນີ້ຢູ່ກັນດ້ວຍຄວາມບາບໜາສາໂຫດຫລາຍ, ປະຊາຊົນດຳລົງຊີວິດແບບເປື່ອຍເຍື່ອຍ, ສ່ວນຫລາຍແລ້ວບ່ອນທີ່ຖືກທຳລາຍຫລາຍກວ່າໝູ່ຊ້ຳພັດແມ່ນບ່ອນຈຸດທີ່ມີໂບດຫລາຍ, ມີຄົນນັບຖືພຣະເຈົ້າຫລາຍ ສະພາບເຊັ່ນນີ້ເຮັດໃຫ້ພວກເຮົາຄິດເຖິງເພື່ອນຂອງໂຢບທີ່ຈະພະຍາຍາມອະທິບາຍບັນຫາຂອງລາວ ແລະກໍຕັດສິນເຖິງຄວາມເປັນມາຂອງຄວາມທຸກທໍຣະມານທັນທີ. ວັນນີ້ພວກເຮົາຈະມາຊອກຫາ ຄົ້ນຄວ້າວ່າ ເປັນມາຍ້ອນຫຍັງ.

## <u>ເພື່ອນທີ່ມີປັຊຍາສູງ</u> (2:11-13)

ບົດຮຽນຜ່ານມາ, ເພື່ອນສາມຄົນຂອງໂຢບກໍໄດ້ມາຫາໂຢບ ເມື່ອເວລາພວກເຂົາໄດ້ຍິນຂ່າວວ່າໂຢບມີບັນຫາຫລາຍ. ການມາຢ້ຽມຢາມເທື່ອນີ້ກໍແມ່ນເພື່ອທີ່ຈະແບ່ງເບົາພາຣະ ຫມູນໃຈກັນ. ຈຶ່ງເຂົ້າໃຈວ່າພວກເຂົາຕັ້ງໃຈມາແບ່ງເບົາພາຣະ. ຄິດວ່າພວກນີ້ຄົງຈະເຄີຍແກ້ໄຂບັນຫາເຫລົ່ານີ້ມາຫລາຍຄັ້ງແລ້ວ.

ໂຢບແລະສະຫາຍທັງສາມກພາກັນມີແນວຄິດໄປທາງສາສນາ ເພາະເຮົາເຫັນຈຸດຂອງພວກເຂົາທີ່ສົນທະນາກັນແມ່ນກ່ຽວກັບເຣື່ອງພຣະເຈົ້າ. ຊີ້ຈຸດຫມາຍໄປບອກວ່າໂຢບເຮັດຜິດຕໍ່ພຣະເຈົ້າຢ່າງຫນັກ, ສົມຄວນໃນການທີ່ໄດ້ຮັບໂທດເພາະຄົນທີ່ຈະໄດ້ຮັບໂທດເຊັ່ນນີ້ກໍມີແຕ່ຄົນບາບເທົ່ານັ້ນ. ຕອນນີ້ ໂຢບບໍ່ເຫັນພ້ອມ ເພາະລາວເຊື່ອຫມັ້ນໃນຕົວຂອງລາວວ່າລາວບໍ່ໄດ້ກະທຳບາບ ແລະກໍບໍ່ຄວນຈະໄດ້ຮັບການຕອບແທນຢ່າງນີ້.

ໃນການມາຢ້ຽມຢາມນີ້ແມ່ນມາຊ່ວຍເຫລືອ ແຕ່ພວກເຮົາໄດ້ເຫັນການຊ່ວຍເຫລືອອັນໃດແດ່ບໍ່? ບໍ່ມີເລີຍ. ມີແຕ່ຂຸດຄຸ້ຍຄວາມເກົ່າທີ່ບໍ່ຈຳເປັນອອກມາ. ເມື່ອເບິ່ງແລ້ວກໍຄືວ່າ ເປັນຄົນທີ່ຮຽນຮູ້, ເປັນນັກສາສນາ, ໄດ້ຮັບການສຶກສາທາງດ້ານສາສນາສາດຊັ້ນສູງຜ່ານມາ. ພວກເຂົາສວຍໂອກາດມາເທສນາໃຫ້ໂຢບຟັງ. ພວກເຂົາເຊື່ອວ່າການເວົ້າຂອງເຂົາຈະແກ້ໄຂບັນຫາໃຫ້ແກ່ເພື່ອນຂອງເຂົາໄດ້. ຢ່າງໃດກໍຕາມ ການສັນນິຖານ, ການເດົາເຫດການ, ທິສດີທີ່ພວກເຂົານຳມາໃຊ້ ແມ່ນວິທີການທີ່ພວກເຮົາຄວນຫລີກລ້ຽງທີ່ສຸດຖ້າພວກເຮົາຫາກມີຄົນຢູ່ໃນສະພາບຢ່າງນີ້ຕ້ອງການການຊ່ວຍເຫລືອ.

## <u>ບັນຫາໃນຄຳແນະນຳຂອງເພື່ອນ</u> (4:1-11:20)

ຫລັງຈາກໂຢບໄດ້ຕໍ່ສູ້ວ່າຕົນບໍ່ໄດ້ເຮັດຜິດແລະຄວາມສິ້ນຫວັງຂອງລາວໃນໂຢບບົດທີ 3 ແລ້ວ. ພວກເຮົາຈະເຫັນວ່າເພື່ອນທັງສາມຂອງໂຢບກໍພະຍາຍາມທີ່ຈະຜັດປ່ຽນກັນສອນ ແລະໂຢບກໍຮັບເອົາຈາກທຸກຄົນ. ແຕ່ລະຄົນກໍກ່າວໄປທຳນອງທາງສາສນາເຫມືອນກັນ.

ເອລີຟັດ (4:1-9)ຈະເລີ້ມຕົ້ນດ້ວຍການກ່າວວ່າບໍ່ຢາກຈະເວົ້າຮ້າຍຫລາຍ ແຕ່ອົດບໍ່ໄດ້ຈຳເປັນຕ້ອງໄດ້ເວົ້າ. ນີ້ຫມາຍຄວາມວ່າເປັນເພື່ອນກັນມາເຫິງນານຫລາຍແລ້ວຂໍເວົ້າແດ່. ລາວກ່າວວ່າໂຢບເອງກໍຄວນຈະແນະນຳຕົວເອງໄດ້ຢູ່ເພາະຜ່ານມາ ລາວກໍເຄີຍໃຫ້ຄຳແນະນຳແກ່ຜູ້ອື່ນເຫມືອນກັນ. ເອລີຟັດ ຍັງສົງສັຍອີກວ່າເປັນຫຍັງໂຢບບໍ່ໃຊ້ຄວາມຮູ້ມາເຍືອງໃສ່ວ່າຈະແກ້ໄຂສະພາບການນີ້ຢ່າງໃດ? ເອລີຟັດ ກ່າວວ່າໂຢບໄດ້ກະທຳບາບ. ເອລີຟັດຍ້ອນຄຳໃນ 4:7 ວ່າ "ຄິດເບິ່ງດູ່ວ່າ ຜູ້ທີ່ບໍ່ມີຄວາມຜິດ ເຄີຍພິນາດບໍ່? ຫລືຄົນທີ່ທ່ຽງທັມຈະຖືກຕັດອອກບໍ່?" ລາວຍັງເວົ້າໃຫ້ໂຢບອີກວ່າ "ບັນດາຜູ້ທີ່ໄຖຄວາມຜິດບາບແລະຫວ່ານຄວາມລຳບາກກໍຈະໄດ້ກ່ຽວຢ່າງນັ້ນ." (4:9) ເອລີຟັດໄດ້ສລຸບລົງດ້ວຍການກ່າວໃນ 4:12-5:27 ວ່າ ຄົນດີຍ່ອມຈະຮູ້ຈັກຕົວເອງ ແລະຮູ້ຈັກຮັບເອົາໂທດທີ່ຕົນໄດ້ກະທຳຜ່ານມາ. ແລະ ຖ້າຂ້ອຍແມ່ນໂຢບຂ້ອຍຈະເຂົ້າຫາພຣະເຈົ້າ ທູນຂໍຄວາມຊ່ວຍເຫລືອຈາກພຣະອົງ (5:8)

ບິລດັດ (8:1-6) ລາວຄິດວ່າ ໂຢບເປັນຄົນຫລົງລືມ ແລະທໍຣະຍົດຕໍ່ພຣະເຈົ້າ. ພຣະເຈົ້າຈຳເປັນຕ້ອງລົງໂທດຜູ້ທີ່ທໍຣະຍົດຕໍ່ພຣະອົງ. ໃນຄຳເວົ້າຂອງລາວໄດ້ສະແດງອອກມາວ່າ ລູກຂອງໂຢບບໍ່ດີ ພວກເຂົາເຮັດບາບ ແນ່ນອນລະສິ່ງເຫລົ່ານີ້ ພວກເຂົາຈະຕ້ອງໄດ້ມາຈາກພໍ່ຂອງເຂົາ.

ໂສຟາ ເພື່ອນຄົນທີສາມ (11:1-6, 13-15) ຄົນສຸດທ້າຍ. ທ່ານຄົນນີ້ກໍກ່າວຍືດຍາວ ແຕ່ໃນທີ່ສຸດກໍບໍ່ຮູ້ວ່າຕົວເອງ

ກຳລັງກ່າວຫຍັງ ແຕ່ພວກເຮົາມາເຫັນໃນຂໍ້ສລູບຂອງລາວໃນຂໍ້ທີ 13-15 ວ່າ "ຖ້າທ່ານຕຽມໃຈຂອງທ່ານໄວ້ ແລະທ່ານຢຽດແຂນຂອງທ່ານອອກໄປຫາພຣະອົງ ຖ້າຄວາມບາບຊົ່ວຢູ່ໃນມືຂອງທ່ານຖິ້ມໄປໃຫ້ໄກ ແລະຢ່າໃຫ້ຄວາມອະທັມອາສັຍຢູ່ໃນເຕັ້ນຂອງທ່ານ ແລ້ວແນ່ນອນລະທ່ານຈະເງີຍໜ້າຂຶ້ນໂດຍປາສຈາກຕຳນິ ທ່ານຈະປອດພັຍແລະບໍ່ຕ້ອງຢ້ານ."

ການໜູນໃຈທີ່ດີທີ່ສຸດຄືການມີສ່ວນຮ່ວມໃນເຫດການ. <u>ຖ້າພວກເຮົາຕ້ອງການຈະເປັນຜູ້ແນະນຳທີ່ດີ.</u> ຈົ່ງຮ້ອງໄຫ້ກັບຜູ້ທີ່ຮ້ອງໄຫ້ແລະຈົ່ງຍິນດີກັບຜູ້ທີ່ມີຄວາມຍິນດີ .

## <u>ແນະນຳບົດຮຽນເຂົ້າໃນຊີວິດປະຈຳວັນ:</u>

ໃນພຣະຄັມພີພວກເຮົາເຫັນການສູນເສັຍຄັ້ງຍິ່ງໃຫຍ່ໃນວັນດຽວ ຄວາມມັ່ງຄັ້ງ, ຊື່ສຽງ, ຄອບຄົວ, ເປັນສິ່ງທີ່ມະນຸດບໍ່ອາດຈະທົນທານໄດ້. ໂຢບກໍໄດ້ຮັບການຊ່ວຍເຫລືອຕ່າງ ໆທີ່ລາວຕ້ອງການ.

ພວກເຮົາເຫັນການປ່ຽນແປງໃນຊີວິດຂອງໂຢບຢ່າງຈະແຈ້ງ. ລາວກໍເກືອບທີ່ຈະອົດທົນບໍ່ໄດ້ ລາວກໍມີການສະແດງອອກຕໍ່ໝູ່ຄູ່ບາງຄັ້ງໃນບົດທີ 3. ໂຢບກັບມິດສະຫາຍເມື່ອເບິ່ງແລ້ວກໍຄືວ່າ ບໍ່ມີໃຜຟັງໃຜ, ເໝືອນກັບຫ້ອງຮຽນອັນອາທິດທີ່ສົນທະນາກັນ. ໃຜກໍຢາກຢັ້ງຢືນວ່າຂອງຕົວເອງຖືກ. ພວກມິດສະຫາຍກໍບໍ່ພໍໃຈນຳໂຢບໃນການທີ່ລາວບໍ່ຍອມຟັງ ໃນທີ່ສຸດລາວກໍອ່າຍໜ້າມາຖາມສະຫາຍວ່າ: "ທ່ານທັງຫລາຍຈະທໍຣະມານຈິດໃຈຂ້າດົນປານໃດທັງບົດຂ້າໃຫ້ມຸ່ນທະລາຍລົງດ້ວຍຖ້ອຍຄຳ."

ມິດສະຫາຍບໍ່ໄດ້ມາເພື່ອໜູນໃຈແຕ່ມາເພື່ອຫຍໍ້ຫຍັນ. ບາງຄັ້ງພວກເຮົາຄວນຣະມັດຣະວັງໃນການໄປຢ້ຽມຢາມພີ່ນ້ອງທີ່ໂຮງພະຍາບານ ແທນທີ່ພວກເຮົາຈະໄປແບ່ງເບົາພາຣະ ແຕ່ກັບໄປຊ້ຳເຕີມໃຫ້ໜັກກ່ວາເກົ່າ.

ຂ້າພະເຈົ້າຍັງຈຳໄດ້ໃນວັນນຶ່ງທີ່ຂ້າພະເຈົ້າໄປຢ້ຽມຢາມພີ່ນ້ອງທີ່ໂຮງພະຍາບານ. ບັງເອີນມີຄົນອີກຄົນນຶ່ງໄປພົບກັນທີ່ນັ້ນ ເວລາຢ້ຽມຢາມຢູ່ນັ້ນ ລາວຊ້ຳພັດໄປເລົ່າເລື້ອງລາວຊີຖືກ "ເລອອຟ" ຈາກງານຂອງລາວ ໆກ່າວວ່າຈະຈ່າຍຄ່າເຮືອນຢ່າງໃດ? ຈະຈ່າຍຄ່າຣົດຢ່າງໃດ? ແລະຈະຈ່າຍຄ່ານ້ຳຄ່າໄຟຢ່າງໃດ? ຄົນເຈັບທີ່ພວກເຮົາໄປຢ້ຽມຢາມນັ້ນລາວກໍບໍ່ຮູ້ວ່າຈະເຮັດຢ່າງໃດ.

ພວກເຮົາທຸກຄົນຕ້ອງການໜູນໃຈ ນີ້ເປັນທັມດາຂອງມະນຸດທຸກຄົນ. ຄຣິສຕະຈັກກໍເໝືອນກັນ ແຕ່ວ່າການໜູນໃຈຈະຕ້ອງແມ່ນການໜູນໃຈທີ່ຖືກຕ້ອງແລະແທ້ຈິງ.

## <u>ຄຳຖາມ:</u>

1. ສະຫາຍຂອງໂຢບມາຢ້ຽມຢາມ ເພື່ອຈະໄດ້ໜູນໃຈໂຢບ. ຄັ້ງແລກພວກເຂົາບໍ່ປາກ, (໒:13) ຖ້າເຮົາງຽບຢູ່ເຮົາຈະເປັນສະພາບຄືແນວໃດ? ທ່ານເຄີຍມີປະສົບການໃນການຮັບຄຳໜູນໃຈ ຫລື ໃຫ້ຄຳໜູນໃຈບໍ່? ລອງອະທິບາຍເບິ່ງ ທ່ານມີຄວາມຮູ້ສຶກຢ່າງໃດ?

໒. ຈົ່ງຄິດວ່າຈະໄປຊ່ວຍຄົນ ໆນຶ່ງທີ່ຜ່ານມາແລ້ວບໍ່ໄດ້ຜົນ ແມ່ນຫຍັງທີ່ເຮັດໃຫ້ເຮົາບໍ່ໄດ້ຮັບຜົນ? ທ່ານຈະແກ້ໄຂຢ່າງໃດ?

3. ຄິດເຖິງຄົນທີ່ຈະມາຊ່ວຍທ່ານໃນຍາມຂັດສົນ. ພວກເຂົາມາເຮັດຫຍັງແດ່?

4. ເພື່ອນຂອງໂຢບກ່າວວ່າ ທີ່ເປັນດັ່ງນີ້ກໍເພາະຄວາມບາບເທົ່ານັ້ນ. ທ່ານຄິດຢ່າງໃດໃນກໍຣະນີນີ້. ຈົ່ງເບິ່ງໃນຄຳສົນທະນາຂອງພວກເຂົາ.

5. ສົມທຽບການສົນທະນາຂອງສະຫາຍຂອງໂຢບ ກັບເພັງສັຣເສີນບົດທີ 8 ຫລືວ່າ ບົດທີ 23. ທ່ານເຫັນຄວາມແຕກຕ່າງຢ່າງໃດແດ່?

*ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 4
## ລໍຖ້າການຊ່ວຍເຫລືອ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຢບ 16:1-8, 18-21; 19:1-7, 23-27

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ໂຢບ 16-17; 19

**ຈຸດສໍາຄັນຂອງບົດຮຽນນີ້:** ເມື່ອມະນຸດໜູນໃຈແຕ່ກໍບໍ່ໄດ້ຜົນ, ພຣະເຈົ້າກໍຄືວ່າຢູ່ໄກແທ້ ແລະບັນຫາກໍຍັງໂໝມກະໜ່ໍາຊີວິດຂອງເຮົາຢູ່, ເຮົາຕ້ອງຕັ້ງໝັ້ນຄົງຢູ່ກັບພຣະເຈົ້າ.

**ຄໍາຖາມເພື່ອສໍາຣວດ:** ຈະເຮັດຢ່າງໃດເມື່ອຮູ້ສຶກປ່ຽວພອຍ ແລະບໍ່ມີໃຜເປັນຫ່ວງເປັນໃຍໃນບັນຫາຂອງເຮົາ

**ຈຸດປະສົງຂອງບົດຮຽນ:** ເພື່ອຈະເຮັດໃຫ້ພວກເຮົາເຂົ້າໃຈໃນປະສົບການຂອງໂຢບກັບມິດສະຫາຍຂອງລາວແລະກັບພຣະເຈົ້າ ແລະພິຈາຣະນາເຖິງຄວາມຫວັງໃນພຣະເຈົ້າ ແມ່ນວ່າເຮົາຈະຕໍ່າພຽງໃດກໍຕາມ

### ເນັ້ນໜັກເຖິງການສຶກສາແລະການກະທໍາ

- ຢັ້ງຢືນວ່າພຣະທັມຄັມພີມີອໍານາດ ໃນການນໍາພາຊີວິດ ແລະການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ

### ຄໍານໍາ

ເມື່ອມີບາງຄົນມາກ່າວຢູ່ຕໍ່ໜ້າທ່ານວ່າ ຂ້ອຍສູນເສັຍທີ່ດິນ, ຂ້ອຍສູນເສັຍເຮືອນຊານບ້ານຊ່ອງ, ຂ້ອຍສູນເສັຍວັດຖຸສິ່ງຂອງທີ່ຂ້ອຍມີຢູ່. ແຕ່ຂ້ອຍຍັງມີຄອບຄົວ ເພື່ອນສະຫາຍ ແລະສຸຂພາບຍັງດີຢູ່. ພຣະເຈົ້າມອບໃຫ້ເປັນຂອງພຣະຣາຊທານແກ່ຂ້ອຍ ແລະຂ້ອຍກໍພູມໃຈ. ໄຟ, ນໍ້າ, ພາຍຸ ແລະຂະໂມຍ ອາດຈະທໍາລາຍສິ່ງເຫລົ່ານີ້ ແຕ່ລະບົບການຄຸ້ມກັນພວກເຮົາກໍຍັງມີເຊັ່ນປະກັນພັຍ.

ສົມມຸດວ່າ ໃນຄອບຄົວເຮົາຫາກມີຄົນເສັຍຊີວິດ (ຄົນທີ່ເຮົາຮັກ) ທ່ານກໍຄົງຈະເວົ້າໄດ້ວ່າ ຂ້ອຍຍັງມີສຸຂພາບດີຂ້ອຍຍັງມີໝູ່ຄູ່ ຂອບຄຸນພຣະເຈົ້າ ທີ່ຂ້ອຍຍັງມີຊີວິດຢູ່. ທ່ານຈະເວົ້າຢ່າງນີ້ຫລື?

ມາສຶກສາຊີວິດຂອງໂຢບ ລາວຈະໃຫ້ບົດຮຽນແກ່ພວກເຮົາຢ່າງໃດ?

### ເມື່ອການຊ່ວຍເຫລືອຫາກບໍ່ເກີດຂຶ້ນແລ້ວ (16:1-8)

ໂຢບບົດທີ 16 ໄດ້ເຫັນລາວໂຕ້ຕອບຜູ້ໃຫ້ຄໍາແນະນໍາແລະຜູ້ກ່າວຫາທັງຫລາຍ. ມາພິຈາຣະນາເບິ່ງຄໍາເວົ້າຂອງລາວ. ຄໍາເວົ້າຂອງມິດສະຫາຍເຫລົ່ານັ້ນບໍ່ໄດ້ໜູນໃຈລາວແມ່ນແຕ່ໜ້ອຍ, ມີແຕ່ທັບຖົມ ຖາກຖາງດູຖູກ ໃສ່ຮ້າຍປ້າຍສີກ່າວໂທດ ພຽງແຕ່ເປັນລົມພັດຜ່ານໄປລ້າໆ ບໍ່ສາມາດບັນເທົາຄວາມເຈັບປວດເລີຍ. ຖ້າທ່ານຫາກມານັ່ງໃນທີ່ຂ້ານັ່ງໃນປັດຈຸບັນນີ້ ທ່ານຈະກະທໍາຢ່າງໃດ ຂ້າຢາກເຫັນເສັຍຈິງໆ. ໂຢບຮູ້ວ່າພວກເຂົາກໍຄົງຈະບໍ່ສາມາດບັລຍາຍໄດ້ດອກ.

ສິ່ງທີ່ຍິ່ງໃຫຍ່ທີ່ໂຢບມີກໍຄືວ່າ "ເປັນຫຍັງ" ພຣະເຈົ້າຈຶ່ງກະທຳກັບລາວຢ່າງນີ້. (16:7-8) ລາວຍັງເຊື່ອວ່າສິ່ງທີ່ລາວກຳລັງເຈັບປວດປັດຈຸບັນນີ້ແມ່ນມາຈາກພຣະເຈົ້າ ແລະກໍແມ່ນພຣະເຈົ້າທີ່ນຳລາວມາເຖິງທີ່ນີ້. *"ແນ່ນອນ ດຽວນີ້ພຣະເຈົ້າຊົງໃຫ້ຂ້າພະເຈົ້າຊຸດໂຊມລົງ ພຣະອົງຊົງກະທຳໃຫ້ພັກພວກທັງສິ້ນຂອງຂ້າພະເຈົ້າຖືກຂ້າ ແລ້ວພຣະອົງໄດ້ໃຫ້ຂ້າຫົດຫູ່ລົງ ຊຶ່ງສະພາບນີ້ເປັນພະຍານປັກປຳຂ້າພະເຈົ້າ ແລະຄວາມຜ່າຍຜອມຂອງຂ້າພເຈົ້າ ລຸກຂຶ້ນປັກປຳຂ້າພະເຈົ້າມັນເປັນພະຍານໃສ່ໜ້າຂ້າພະເຈົ້າ."*

ໃນຄວາມອ່ອນລ້າທໍ້ຖອຍນີ້ ໄດ້ໂອ່ຍຄວນອອກມາ ໂຢບກໍເວົ້າອອກໄປດ້ວຍຄວາມວ່າງເປົ່າວ່າພະຍານຂອງຂ້າພະເຈົ້າກໍຢູ່ເທິງສວັນ. (16:19) ໂຢບຈະຫັນໜ້າໄປຫາໃຜ? ເພື່ອນຝູງກໍເພິ່ງບໍ່ໄດ້, ແລະລາວກໍບໍ່ເຂົ້າໃຈວ່າພຣະເຈົ້າຈະເຮັດຢ່າງໃດກັບລາວ. ລາວຍັງຮ້ອງຫາຜູ້ທີ່ຈະຊ່ວຍລາວໄດ້ ບາງຄັ້ງໂຢບກໍຕ້ອງໄດ້ລໍຖ້າດົນນານ ເຖິງຈະດົນຈະນານປານໃດ ລາວກໍຍັງວ່າພຣະເຈົ້າຍັງຢູ່ ພຣະເຈົ້າຟັງຢູ່.

ບາງຄັ້ງລາວຍັງກ່າວວ່າ *"ຈິດວິນຍານຂອງຂ້ານ້ອຍໄດ້ແຕກດັບ ວັນເວລາຂອງຂ້ານ້ອຍກໍຈົບລົງ ຫລຸມຝັງສົບພ້ອມແລ້ວ ສຳລັບຂ້ານ້ອຍ ແນ່ນອນຄົນຜູ້ມັກເຢາະເຢີ້ຍ ກໍຢູ່ຮອບຂ້ານ້ອຍນີ້ເອງ ແລະຕາຂອງຂ້ານ້ອຍກໍຈ້ອງຢູ່ທີ່ການຍົວະເຍົ້າຂອງເຂົາ." (17:1-2)* ເມື່ອມາເຖິງຈຸດນີ້ ພວກເຮົາຈຶ່ງຮູ້ວ່າໂຢບໝົດຫວັງ ຂາດການຊ່ວຍເຫລືອ ວັນເວລາຂອງລາວສັ້ນຫລາຍ ລາວຄົງຈະບໍ່ມີຊີວິດຕໍ່ໄປອີກແລ້ວ.

## ທວນຄືນຄວາມໂສກເສົ້າ (19:1-7, 23-27)

ໃນເດືອນ ມົກກະຣາ ປີ 2006 ທົ່ວປະເທດສະຫະຣັດອະເມຣິກາ ເພັ່ງເລັງເບິ່ງການຊ່ວຍຂອງຄົນງານບໍ່ຖ່ານຫີນຣະເບີດ ທີ່ຣັດເວີຈິເນັຍຕາເວັນຕົກ ທັງໝົດມີ 13 ຄົນດ້ວຍກັນ. ຄົນທີ່ລອດມາໄດ້ມີພຽງຄົນດຽວເທົ່ານັ້ນ. ລາວໄດ້ເລົ່າສູ່ຟັງວ່າພວກທີ່ຢູ່ນຳກັນທັງໝົດ, ກ່ອນອື່ນໝົດ ແມ່ນພະຍາຍາມເຮັດໃຫ້ມີການສັນຍານເພື່ອຄົນຂ້າງນອກຈະເຫັນ. ເມື່ອບໍ່ມີການຕອບຮັບແລ້ວ ພວກເຂົາກໍພະຍາຍາມຊອກຫາທາງອອກ ໂດຍຊ່ວຍຕົວເອງ. ເມື່ອຊ່ວຍຕົວເອງບໍ່ໄດ້ແລ້ວກໍຫັນມານັ່ງລໍຄວາມຫວັງ. ເມື່ອໝົດຄວາມຫວັງແລ້ວ ກໍຂຽນຈົດໝາຍລາ ຫລືທຳສິ່ງໃດສິ່ງນຶ່ງເພື່ອໃຫ້ຄົນທີ່ຕົນຮັກຮູ້ວ່າຕົນຍັງຮັກເຂົາຢູ່.

ໂຢບ 19 ກໍຍັງເລົ່າທຸກຂອງລາວຢູ່ເຫມືອນເດີມ (19:1-4) ຄວາມວ່າງເປົ່າໃນການຊ່ວຍເຫລືອຍັງປົກຄຸມໂຢບຢູ່. ລາວກໍເລີຍຖາມພຣະເຈົ້າອີກວ່າ ເປັນຫຍັງພຣະເຈົ້າຈຶ່ງສົ່ງຄວາມທຸກທໍຣະມານ ແລະເປັນຫຍັງຈຶ່ງບໍ່ຕອບຄຳອະທິຖານ (19:5-7) ສ່ວນໃຫຍ່ໃນຕອນນີ້ ແມ່ນຄວາມເລົ່າທຸກຂອງໂຢບ ແລະກ່ຽວກັບສິ່ງພຣະເຈົ້າຊົງກະທຳຕໍ່ໂຢບ. ແລະເປັນສິ່ງທີ່ໂຢບມີຄວາມຍືນໝັ້ນໃນພຣະເຈົ້າ. ການຮ້ອງໃຫ້ຂອງໂຢບ ສ່ວນຫລາຍຈະແມ່ນຄຳອະທິຖານ.

ໂຢບລຳດັບການເສັຍຫາຍຂອງຕົນ ໃນເວລາລາມີຄວາມເຈັບປວດ. ລາວເລົ່າຄືນເຖິງເພື່ອນຝູງ ໝູ່ຄູ່ ຍາດພີ່ນ້ອງ ຊື່ສຽງແລະຊັບສົມບັດກໍສູນເສັຽໄປ. ລາວຢາກໃຫ້ຊີວິດ ຂອງລາວຫັນໄປກັບຄວາມຕາຍ.

## ຄວາມຫວັງໃນການຊົງໄຖ່ (19:23-27)

ເມື່ອພວກເຮົາເຫັນການຈົ່ມຫລາຍ ເຫັນຄວາມທຸກໂສກຫລາຍ ພວກເຮົາຈະເຫັນການຫັນກັບທີ່ແປກປລາດ ລາວກ້າວເຂົ້າສູ່ຄວາມຫວັງ "ແຕ່ສ່ວນຂ້ານ້ອຍ ຂ້ານ້ອຍຮູ້ວ່າພຣະຜູ້ໄຖ່ຂອງຂ້ານ້ອຍຊົງພຣະຊົນຢູ່" (19:25) ການຕັດສິນຂອງເພື່ອນຝູງຜ່ານມາ ລາວບໍ່ເອົາມາເປັນທີ່ຂັດຂວາງ ລາວບໍ່ເອົາເປັນສິ່ງຝັງໄວ້ໃນໃຈເລີຍ.

ເປັນການງ່າຍທີ່ຄຣິສຕຽນ ຈະອ່ານ ຫລືຈະເວົ້າຄຳວ່າ ຊີວິດທີ່ແມ່ນ ໄຖ່ຖອນ ເພາະພວກເຮົາຖືກໄຖ່ໂດຍພຣະເຢຊູ ພຣະຜູ້ເປັນເຈົ້າຂອງພວກເຮົາ. ສມັຍຂອງໂຢບ ເຮົາຕ້ອງຮູ້ວ່າ ເປັນສມັຍທີ່ມີຈິດສຳນຶກເອົາເອງ. ຄວາມເຂົ້າໃຈຂອງລາວແມ່ນສຶກສາມາຈາກສະພາບແວດລ້ອມ ແລະຮຽນຮູ້ດ້ວຍຕົວເອງ.

ຄວາມຮູ້ສຶກຂຶ້ນງລົງງຂອງໂຢບ ບາງຄັ້ງກໍຄິດຢາກຈະຕາຍ ແຕ່ບາງຄັ້ງກໍຄິດວ່າ ຖ້າຈະຕາຍກໍຂໍໃຫ້ຄົນໄດ້ເຫັນຖ້ອຍຄຳທີ່ຢາກຈະຈາລຶກໄວ້ດ້ວຍປາກກາຫລືກົ່ວ. (19:23-24) ເພື່ອໃຫ້ຄົນຍຸກຕໍ່ໄປໄດ້ອ່ານແລະໄດ້ຮູ້. ໃຜເປັນຜູ້ໄຖ່ຂອງໂຢບ? ແມ່ນຜູ້ທີ່ຍັງພຣະຊົນຢູ່. ແມ່ນຜູ້ທີ່ໂຢບເຄີຍສິນທະນານຳ. ໂຢບເຂົ້າໃຈດີວ່າມະນຸດຈະຂາດຈາກພຣະອົງບໍ່ໄດ້ຢ່າງເດັດຂາດ. ລາວຍັງມີຄວາມເຊື່ອໃນພຣະອົງຢ່າງໜັ້ນຄົງຢູ່.

ໃນໝູ່ນັກສຶກສາ ວິຊາສາສນາສາດ ໄດ້ມີການໂຕ້ຖຽງກັນຫລາຍກ່ຽວກັບໂຢບ. ເຣື່ອງທີ່ເກີດກັບໂຢບນັ້ນແມ່ນເກີດຂຶ້ນກ່ອນໂຢບຕາຍ ຫລືຫລັງຈາກຕາຍແລ້ວ. ເຖີງຈະເກີດກ່ອນຫລືຫລັງກໍຕາມ ໂຢບເຊື່ອວ່າມັນຈະເກີດຂຶ້ນຢ່າງແນ່ນອນ ພຣະເຈົ້າຈະຕອບແທນຄວາມໂສກເສົ້າຂອງໂຢບດ້ວຍຄວາມເທມາະສົມ. (19:28-29)

## ແນະນຳເຂົ້າໃນບົດຮຽນ

ຖ້າຈະສຶກສາພຣະຄັມພີທັງໝົດ 66 ເຫລັ້ມແລ້ວ ກໍເຫັນໄດ້ວ່າໂຢບເປັນຜູ້ທໄດ້ຮັບເຄາະກັມຫລາຍກວ່າໝູ່ແລະກໍເປັນບົດຮຽນສອນໃຈໄດ້ຫລາຍກວ່າໝູ່ ເພາະຊີວິດຂອງມະນຸດສ່ວນຫລາຍຈະມີບັນຫາຄວາມໂສກເສົ້າສູນເສັຍ ຈະເກີດຂຶ້ນແກ່ມະນຸດທຸກໆຄົນ. ໂຢບອະທິຖານຂໍການຊ່ວຍເຫລືອ ແຕ່ກໍບໍ່ໄດ້ຮັບຄຳຕອບຈາກມະນຸດເລີຍ. ມີພຽງພຣະເຈົ້າເທົ່ານັ້ນທີ່ຈະສາມາດເຂົ້າໃຈບັນຫາຂອງເຮົາໄດ້.

ບາງຄັ້ງມະນຸດກໍຄຽດຮ້າຍພຣະເຈົ້າ ເພາະບໍ່ໄດ້ໃຈຕົວເອງ ເບິ່ງຄືວ່າພຣະເຈົ້າຢູ່ໄກແທ້. ແຕ່ຈຸດປະສົງແລະເປົ້າໝາຍຂອງພຣະອົງບໍ່ຢູ່ໄກພວກເຮົາດອກ. ຫລາຍເທື່ອພວກເຮົາພະຍາຍາມທີ່ແລ່ນດ້ວຍຕົວເອງກໍຍິ່ງຮູ້ສຶກວ່າຕົວເອງຍິ່ງໂດດດ່ຽວຂຶ້ນ.

ເພື່ອນທີ່ແທ້ຈິງ ຄືເພື່ອນທີ່ຮັບຟັງເຮົາ, ຢືນຢູ່ຄຽງຂ້າງເຮົາ, ເຂົ້າໃຈເຮົາ, ສູ້ຊົນຮ່ວມກັບເຮົາ. ບໍ່ແມ່ນເພື່ອນທີ່ອະທິບາຍບັນຫາເກັ່ງ ບໍ່ແມ່ນເພື່ອນທີ່ຕອບຄຳຖາມເກັ່ງ,

ພຣະເຈົ້າຮັບຟັງຄຳຮ້ອງທູນຂອງພວກເຮົາ, ຮັບຟັງຄວາມໃຈຮ້າຍຂອງພວກເຮົາ, ຮັບຟັງຄວາມເຂົ້າໃຈຜິດຂອງພວກເຮົາ.

ສຳລັບພວກເຮົາແລະໂຢບ ພຣະເຈົ້າຍັງໃຫ້ຄວາມຫວັງແກ່ພວກເຮົາຕລອດໄປ.

## ຄຳຖາມ

1. ເວລາທ່ານອ່ານພຣະທັມໂຢບແລ້ວ ຄຳໜູນໃຈຂອງມິດສະຫາຍຂອງລາວເປັນຢ່າງໃດ?

2. ທ່ານຄິດວ່າໂຢບປ່ອຍໃຫ້ພຣະເຈົ້າເຂົ້າມາມີສ່ວນຮ່ວມນັ້ນ ຜິດບໍ່? ເມື່ອມີມະນຸດເປັນຜູ້ໃຫ້ຄຳແນະນຳແລ້ວ? ເປັນຫຍັງຈຶ່ງຜິດ?

3. ທ່ານເຄີຍມີປະສົບການໃນຄວາມໂສກເສົ້າຂອງຊີວິດບໍ່? ທ່ານຊອກຫາພຣະເຈົ້າເປັນຜູ້ຊ່ວຍບໍ່? ທ່ານແບ່ງປັນໃຫ້ໝູ່ຟັງແດ່ໄດ້ບໍ່?

4. ຄຳໃດທີ່ເປັນຄຳໜູນໃຈຂອງທ່ານຫລາຍກວ່າໝູ່ ໃນພຣະທັມໂຢບ? ເພາະຫຍັງ?

5. ເຣື່ອງທີ່ເກີດຂຶ້ນໃນຊີວິດຂອງໂຢບນີ້ ຈະເກີດຂຶ້ນກ່ອນຕາຍ ຫລືຫລັງຈາກຕາຍແລ້ວ?

*ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 5
## ທ່ານຄິດວ່າທ່ານແມ່ນໃຜກັນແທ້?

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢບ 38:1-21, 40:1-2

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ໂຢບ 38:1-40:2

**ຈຸດສຳຄັນຂອງບົດຮຽນນີ້:** ມະນຸດຊາດມັກໃຫ້ພຣະເຈົ້າເຮັດຕາມຄວາມນຶກຄິດຂອງຕົນ.

**ຄຳຖາມເພື່ອການສຳຣວດ:** ພວກເຮົາມີຄວາມຮູ້ ແລະຄວາມສາມາດຈຳກັດ, ເຮັດແນວໃດພວກເຮົາຈຶ່ງມີຄວາມສຳພັນກັບພຣະເຈົ້າໄດ້?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສລູບຄຳສອນຂອງພຣະເຈົ້າເຖິງເຣື່ອງສຳຄັນທີ່ສຸດ ແລະ ເອົາມາໃຊ້ໃນຊີວິດຂອງພວກເຮົາ.

### ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ ແລະໃນການຮັບໃຊ້.
- ເສີມຂຍາຍຕົວໃຫ້ໃຫຍ່ຂຶ້ນ ແລະໃຫ້ຄວາມເຊື່ອມີຊີວິດຊີວາ.

### ບົດນຳ

ໃນເມື່ອທ່ານໂຢບແລະເພື່ອນໄດ້ສົນທະນາກັນມານເຖິງການສູນເສັຽ ແລະ ຄວາມທຸກທໍຣະມານຂອງທ່ານໂຢບແລ້ວ ຕົວທ່ານໂຢບກໍຕ້ອງການໃຫ້ພຣະເຈົ້າອະທິບາຍເຖິງເຫດຜົນວ່າເປັນດ້ວຍເຫດໃດຕົນເອງຈຶ່ງໄດ້ປະເຊີນກັບພັຍວິບັດຢ່າງນີ້. ທີ່ສຸດພຣະເຈົ້າກໍໄດ້ຕອບສນອງຄຳຖາມຊຶ່ງກາຍເປັນພະລັງຄວາມຮູ້ ແລະຄວາມເຂົ້າໃຈຢ່າງອັສຈັນ.

ບົດຮຽນອັນນີ້ໄດ້ບອກສອນໃຫ້ເຫັນວ່າ ໃນທີ່ສຸດຄວາມປາຖນາຂອງທ່ານໂຢບກໍກາຍເປັນຈິງທີ່ ໄດ້ຮັບຄຳຕອບຈາກພຣະເຈົ້າຊຶ່ງເປັນຄວາມຕ້ອງການຂອງເພິ່ນມາດົນນານ ເພາະໃນເວລາມີຄວາມເຈັບປວດ ທຸກທໍຣະມານເຫັນວ່າພຣະເຈົ້າໄດ້ປະຖິ້ມ ຫລືຢູ່ຫ່າງໄກ. ທ່ານໂຢບໄດ້ປະທ້ວງຕໍ່ວ່າພຣະເຈົ້າທີ່ພຣະອົງກະທຳຕໍ່ລາວເປັນການບໍ່ທ່ຽງທັມເລີຍ. ໃນທີ່ສຸດທ່ານໂຢບກໍໄດ້ພົບແຜນການຂອງຜູ້ເປັນພຣະທີ່ມີປັນຍາເລີດ.

### 1. ການບໍ່ອົດທົນຂອງຄົນໜຸ່ມ (32:1-37:24)

ໃນບົດທີ 31 ໄດ້ຈົບລົງໂດຍການຮ້ອງຂໍໃຫ້ພຣະເຈົ້າຕອບຄຳຖາມ ແລະທ່ານໂຢບໄດ້ນຳຄະດີສຸດທ້າຍມາຫາພຣະເຈົ້າ. ມະນຸດເຮົາກໍຫວັງວ່າພຣະເຈົ້າອາດຈະຕອບຄຳຖາມເພາະມີການຮ້ອງຂໍຢ່າງເອົາຈິງເອົາຈັງນີ້. ເຫັນວ່າມັນອາດເປັນເວລາເໝາະສົມທີ່ສຸດທີ່ຈະໄດ້ຮັບຄຳຕອບຈາກພຣະເຈົ້າ ເຖິງຢ່າງໃດກໍດີຜູ້ຂຽນໄດ້ນຳເອົາສິ່ງທີ່ທ່ານໂຢບໄດ້ຄຸ້ນເຄີຍເຂົ້າມາໃຊ້ປະກອບເຖິງສາຍເຫດທີ່ລາວໄດ້ພົບກັບບັນຫາມາງປະການ. ສິ່ງນີ້ອາດເປັນສິ່ງທີ່ຖືກຄົນບັນດານ ໃຫ້ຜູ້ຂຽນໄດ້ ເວົ້າເຖິງການບໍ່ມີຄວາມອົດທົນຂອງຄົນໜຸ່ມ ຜູ້ທີ່ໄດ້ປະສົບກັບຄວາມຜິດຫວັງ, ອິດເມື່ອຍ, ທຸກທໍຣະມານ. ໃນເມື່ອພວກເຖົ້າແກ່ບອກສອນເຣື່ອງຊີວິດ ພວກໜຸ່ມນ້ອຍສ່ວນຫລາຍກໍບໍ່ຕ້ອງການຟັງຫລືຮັບ ເອົາໄດ້, ຄິດວ່າຄົນແກ່ເປັນຄົນຫົວໂບຮານ ຫລືຫລ້າສມັຍ. ເໝືອນດັ່ງເພື່ອນຜູ້ມີຊື່ວ່າ ເອເລຮູ ໄດ້ໃຫ້ຄຳແນະ ນຳຕໍ່ໂຢບວ່າຄວາມທຸກຂອງ ໂຢບນັ້ນລາວທົນເບິ່ງບໍ່ໄດ້ອີກແລ້ວ.

ເອເລຮູ ຜູ້ຂາດປະສົບການເໝືອນເພື່ອນສາມຄົນທີ່ໄດ້ພັນລະນາເຖິງຄວາມນ້ອຍເນື້ອຕ່ຳໃຈຕໍ່ທ່ານໂຢບໄປແລ້ວ ແລະທ່ານໂຢບກໍປະຕິດເສດບໍ່ຍອມເຮັດຕາມຄຳແນະນຳ. ເມື່ອເປັນດັ່ງນັ້ນ, ລາວຈຶ່ງທ້າທາຍເພື່ອນສາມຄົນ ແລະທ່ານໂຢບໂດຍຊີ້ງກ່າວວ່າ, "ບໍ່ແມ່ນຄົນອາວຸໂສເປັນຜູ້ສລາດບໍ່, ຫລືຜູ້ມີອາຍຸສູງເຂົ້າໃຈຕໍ່ຊີວິດຢ່າງຖືກຕ້ອງ." ດັ່ງນັ້ນ, ໃຫ້ຂ້ອຍບອກພວກເຈົ້າວ່າ, ຈົ່ງຟັງເຮົາ ໃຫ້ເຮົາເວົ້າໃຫ້ຟັງຕາມຄວາມຄິດຂອງເຮົາເທີ້ນ. (ໂຢບ 32:9-10) ຜູ້ເປັນນັກເທດທີ່ສລາດໄດ້ເວົ້າເຖິງ ເອເລຮູ ວ່າ "ເຂົາແນ່ໃຈໃນສິ່ງທີ່ຕົນບໍ່ຮູ້."

ແນວໃດກໍດີ ມີບາງຢ່າງເຮົາຄວນເຂົ້າໃຈວ່າ ພວກຊາວໝຸ່ມມີກຳລັງ ແຕ່ບໍ່ມີຄວາມອົດທົນ. ເອເລຮູ ແລະຄົນອື່ນບໍ່ສາມາດທີ່ຈະຢູ່ລ້າງໄດ້ເພາະເຫັນວ່າພຣະເຈົ້າໄດ້ລົງໂທດທ່ານໂຢບ ເພື່ອທ່ານໂຢບຈະໄດ້ສາຣະພາບຜິດບາບ ແລະກັບມາສ້າງຄວາມສຳພັນອັນຖືກຕ້ອງກັບພຣະເຈົ້າອີກ. (33:29-30)

ເອເລຮູ ກ້າປະກາດວ່າຕົນເອງໄດ້ເວົ້າອອກມາຢ່າງນີ້ໃນພຣະນາມຂອງພຣະເຈົ້າ (36:2) ເໝືອນກັບວ່າພຣະເຈົ້າບໍ່ສາມາດເຮັດໄດ້ໂດຍພຣະອົງເອງ. ເອເລຮູ ຮູ້ສຶກວ່າທ່ານໂຢບໄດ້ຖິ້ມໂທດໃສ່ພຣະເຈົ້າ ແລະໄດ້ເຕືອນວ່າບໍ່ໃຫ້ບີບບັງຄັບເພື່ອເອົາຄວາມຮູ້ຫລາຍກວ່າເອົາພຣະເຈົ້າ. (ເບິ່ງ 37:14)

ຄຳແນະນຳຂອງ ເອເລຮູ, ບໍ່ເປັນເໝືອນເພື່ອນທັງສາມ, ແຕ່ລາວຍັງບໍ່ໄດ້ສະແດງອອກມາເຖິງຄວາມເຫັນໃຈຕໍ່ຜູ້ທຸກທໍຣະມານ. ແຕ່ລາວອາດເວົ້າຖືກເຖິງເຣື່ອງຫລັກຄວາມເຊື່ອ, ແຕ່ບໍ່ມີຈຸດແຫ່ງຂອງຄວາມຮັກເລີຍ. ຄຳແນະຂອງເອເລຮູ ໄດ້ຊັກຊວນໃຫ້ທ່ານໂຢບເບິ່ງໄປໄກງຂ້າມຄວາມສູນເສັຽ, ຄວາມທຸກທໍຣະມານ, ເບິ່ງພຣະເຈົ້າຜູ້ປົກຄອງໂດຍຄວາມທ່ຽງທັມ. ເອເລຮູ ເປັນຄົນປອບໃຈ, ແຕ່ບໍ່ໄດ້ຊ່ອຍຫຍັງຫລາຍ.

## ຂ. <u>ທີ່ສຸດພຣະເຈົ້າໄດ້ກ່າວ</u> (38:1-21)

ທ່ານໂຢບບໍ່ໄດ້ຮ້ອງຂໍໃຫ້ພຣະເຈົ້າອະທິບາຍເພີ້ມອີກແລ້ວເຖິງຄວາມທຸກທໍຣະມານທີ່ລາວໄດ້ຮັບ. ລາວຮູ້ແລ້ວວ່າກຳລັງພາຍໃນອ່ອນເພັຽລົງ ແລະເພື່ອນທີ່ລາວມີກໍຊ່ອຍຫຍັງບໍ່ໄດ້. ສົມມຸດວ່າທ່ານໂຢບມາສາມາດເປັນທະນາຍຄວາມຂອງຕົນເອງໃນສານ ລາວອາດຈະຕໍ່ຄະດີບອກພຣະເຈົ້າວ່າລາວເອງເປັນຄົນບໍ່ມີຄວາມຜິດຫຍັງເລີຍ ແລະສົມຄວນຈະໄດ້ຮັບຄຳຕອບຈາກພຣະເຈົ້າວ່າ ເປັນດ້ວຍເຫດໃດລາວຈຶ່ງມີຄວາມທຸກທໍຣະມານເຊັ່ນນີ້. ໂຢບຖາມດ້ວຍຄວາມຢຳເກງ ແຕ່ເປັນຄວາມຫວັງອັນດຽວຂອງລາວ. (ເບິ່ງ 9:2, 13:13-15)

ເປັນໜ້າສົນໃຈຫລາຍໃນຂໍ້ນີ້ທີ່ທ່ານໂຢບຮູ້ສຶກວ່າພຣະເຈົ້າໄດ້ປະຖິ້ມໄປ ແລະລາວຍັງຊອກສະແຫວງຫາຜູ້ຊົງສ້າງ, ພຣະຄຳຂອງພຣະເຈົ້າໄດ້ບອກວ່າ ພຣະເຈົ້າໄດ້ຮູ້ຈັກເຖິງຄວາມລຳບາກຂອງຜູ້ຮັບໃຊ້ໂຢບ. ພຣະເຈົ້າເປັນຜູ້ສັກສິດ ແລະພຣະອົງໄດ້ເປີດເຜີຍວ່າພຣະອົງໄດ້ຟັງຄວາມຕໍ່ວ່າ ແລະຄວາມສັບສົນຂອງຜູ້ຮັບໃຊ້ຕລອດເວລາ. ອົງພຣະຜູ້ເປັນເຈົ້າໄດ້ເຂົ້າໃຈເຖິງຄວາມຜິດຫວັງ, ໂຫດຮ້າຍ, ໂສກເສົ້າຂອງທ່ານໂຢບຫລາຍກວ່າເພື່ອນທີ່ເອີ້ນຕົນເອງວ່າເປັນຜູ້ມີຄວາມຮູ້ສາມາດ ໃຫ້ຄວາມປຶກສາທີ່ສລາດຕໍ່ທ່ານໂຢບ.

ພຣະເຈົ້າຊົງຕັດກ່າວຈາກ "ລົມຫົວກຸດ" ຫລາຍເທື່ອເວລາພຣະເຈົ້າຕັດສັ່ງກໍອອກຈາກທັມະຊາດຢ່າງມີພະລັງ. ນີ້ໄດ້ບອກໃຫ້ຮູ້ວ່າມັນເປັນການພົບເຫັນຢ່າງໜ້າຢ້ານ, ທີ່ເຕັມໄປດ້ວຍຄວາມຍິ່ງໃຫຍ່ຂອງພຣະເຈົ້າ. ນີ້ເປັນສິ່ງທີ່ພຣະເຈົ້າຕັດສັ່ງ ແຕ່ບໍ່ໄດ້ຕອບຄຳຖາມຂອງໂຢບໂດຍກົງ. ແຕ່ຄຳຕັດສັ່ງນັ້ນ ໄດ້ບັງຄັບໃຫ້ທ່ານໂຢບຮຽນຮູ້ວ່າຕົນເອງແມ່ນໃຜ, ເປັນຄົນຜູ້ມີຂອບເຂດ ແລະມີຄວາມສາມາດບໍ່ພຽງພໍ.

ເພື່ອຈະໃຫ້ສິ່ງນັ້ນສຳເຣັດ ພຣະເຈົ້າໄດ້ຖາມທ່ານໂຢບຫລາຍໆຄຳ ເປັນຄຳຖາມງ່າຍໆ. ພຣະເຈົ້າຖາມວ່າ, ທ່ານເຄີຍສ້າງໂລກບໍ່? ຢູ່ໃນບົດ 38 ພຣະເຈົ້າໄດ້ເວົ້າເຖິງພຣະອົງເປັນພຣະຜູ້ສ້າງ (ຂໍ້ 4-7) ພຣະອົງເປັນຜູ້ຕັ້ງເຂດແດນຂອງທະເລ ຜູ້ຮູ້ຈັກຄວາມລຶກລັບທັງຫລາຍ (38:8-11, 16)

### 3. ພຣະເຈົ້າທ້າທາຍໂດຍກົງ (40:1-2)

ອົງພຣະຜູ້ເປັນເຈົ້າໄດ້ສລຸບຄຳທ້າທາຍຕໍ່ທ່ານໂຢບໂດຍກົງໃນບົດ 40:1-2. ຕລອດທັງບົດເລີຍ ທ່ານໂຢບໄດ້ທ້າທາຍອົງພຣະຜູ້ເປັນເຈົ້າໃຫ້ຕອບຕໍ່ຄຳຖາມເຖິງຄວາມເຈັບປວດ ຄວາມທໍຣະມານທີ່ລາວໄດ້ຮັບ. ທ່ານໂຢບພ້ອມດ້ວຍເພື່ອນພະຍາຍາມບອກພຣະເຈົ້າໃຫ້ກະທຳຢ່າງນັ້ນຢ່າງນີ້. ບາດນີ້ພຣະເຈົ້າໄດ້ຫັນຖາມທ່ານໂຢບຄືນວ່າ ລາວຕ້ອງການທີ່ຈະສືບຕໍ່ຄະດີກັບພຣະອົງເຈົ້າຕໍ່ໄປອີກບໍ່ ຫລືວ່າທ່ານໂຢບຈະຢຸດຟັງ ແລະຕອບຄຳຖາມຂອງອົງພຣະຜູ້ເປັນເຈົ້າ.

ຜົນສະທ້ອນທີ່ພຣະເຈົ້າໄດ້ຖາມໂຢບໄດ້ເປັນເຫດໃຫ້ລາວຍອມຟັງ. ການທີ່ເຂົ້າຮ່ວມກັບເພື່ອນຜູ້ຈອງຫອງ ແລະບໍ່ມີຄວາມອົດທົນ ເພື່ອຈະປະທ້ວງວ່າຕົນເອງເປັນຄົນບໍ່ມີຄວາມຜິດນັ້ນ ທີ່ສຸດກໍຮູ້ຕົວວ່າຕົນເອງຮູ້ຈັກທາງຂອງພຣະເຈົ້ານ້ອຍເກີນໄປ.

ນັກການເມືອງ ຫລືນັກສາສນາໄດ້ພະຍາຍາມຕອບແບບງ່າຍໆຕໍ່ບັນຫາອັນສັບສົນຂອງໂລກນີ້ເປັນປະຈຳວ່າ. ພວກເຮົາພາກັນຕອບໄປໂດຍທີ່ຕົນເອງບໍ່ມີຄວາມເຂົ້າໃຈຫຍັງເລີຍ. ຫລາຍໆເທື່ອພວກເຮົາບັງຄັບໃຫ້ພຣະເຈົ້າເຮັດອັນ ນັ້ນອັນນີ້ຕາມຄວາມເຂົ້າໃຈອີງຕາມລັກສາສນາສາດ ຫລືຫລັກທັມມະຂອງມະນຸດ.

ບົດຮຽນສຳຄັນທີ່ຈະຮຽນຈາກພຣະຄຳຂອງພຣະເຈົ້າເຣື່ອງທ່ານໂຢບນີ້ຄື-ມັນຈະມີສິ່ງເລິກລັບ ທີ່ເຮົາບໍ່ສາມາດເຂົ້າໃຈດີໄດ້ໃນຄວາມສຳພັນລະຫວ່າງພວກເຮົາກັບພຣະເຈົ້າ. ພວກເຮົາທີ່ເປັນມະນຸດນີ້ຕ້ອງຍ່າງໄປດ້ວຍຄວາມເຊື່ອບໍ່ແມ່ນດ້ວຍຕາເຫັນ. ພວກເຮົາຕ້ອງການຄຳຕອບເຖິງເຣື່ອງທີ່ເກີດຂຶ້ນໃນໂລກນີ້ຈາກພຣະເຈົ້າ ຫລາຍໆເທື່ອພວກເຮົາກໍບໍ່ໄດ້ຮັບຄຳຕອບແບບງ່າຍໆຈາກພຣະຜູ້ສ້າງເລີຍ.

ເວລາອົງພຣະເຢຊູໄດ້ຢູ່ໃນໂລກນີ້ ຮ່ວມກັບພວກຍິວຄົນຂອງພຣະອົງເອງ, ພວກເຂົາກໍພາກັນຖາມຫລາຍໆຢ່າງເຖິງສິດທິ, ອຳນາດ, ຜູ້ເປັນພໍ່, ແລະຕົວພຣະອົງເອງວ່າເປັນໃຜແທ້. ນ້ອຍເທື່ອພຣະອົງໄດ້ຕອບພວກເຂົາໂດຍກົງ. ໃຫ້ຄຶດເຖິງຍາດພີ່ນ້ອງຂອງພຣະອົງ ຄືໂຢຮັນ ບັບຕິສໂຕ. ລາວໄດ້ສັ່ງພວກສາວົກຂອງຕົນໄປຖາມພຣະເຢຊູວ່າ, "ທ່ານເປັນຜູ້ທີ່ຈະມານັ້ນຫລື ຫລືຈະຕ້ອງຄອງຖ້າຜູ້ອື່ນ." (ມັດທາຍ 11:3). ພຣະເຢຊູໄດ້ຕອບພວກເຂົາໂດຍໃຊ້ຄຳເວົ້າທີ່ຕ້ອງອາສັຍຄວາມເຊື່ອ, "ຈົ່ງໄປແຈ້ງຕໍ່ໂຢຮັນສິ່ງທີ່ທ່ານໄດ້ຍິນ ແລະໄດ້ເຫັນ. ຄືວ່າຄົນຕາບອດກໍເຫັນຮຸ່ງ ຄົນຂາເສັ້ງກໍຍາງເປັນປົກກະຕິ, ຄົນຂີ້ທູດກໍດີສະອາດ. ຄົນຫູໜວກກໍໄດ້ຍິນ. ຄົນຕາຍແລ້ວກໍຄືນມາ. ແລະຂ່າວປະເສີດກໍປະກາດແກ່ຄົນອະນາຖາ. (ມັດທາຍ 11:3-4) ມັນຂຶ້ນກັບໂຢຮັນ ບັບຕິສໂຕ ທີ່ສັງເກດເຫັນເຫດການທີ່ພຣະເຈົ້າຊົງກະທຳແລະຕັດສິນໃຈທີ່ຈະເຊື່ອ ຫລືປະຕິເສດ.

ໂຢບກໍໄດ້ຄົ້ນພົບຄວາມຈິງທີ່ເປັນອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າ. ພຣະສະຕິປັນຍາ ແລະພຣະລັງອຳນາດຂອງພຣະອົງກໍເກີນຄວາມເຂົ້າໃຈຂອງມະນຸດ. ພວກເຮົາຕ້ອງມີຊີວິດຢູ່ແຕ່ລະວັນກັບຄວາມອັສຈັນທີ່ໄດ້ເຫັນຢູ່ໃນການຊົງສ້າງຂອງພຣະເຈົ້າຢ່າງເປັນລະບົບລະບຽບດີ, ແຕ່ໃຫ້ຮູ້ວ່າພວກເຮົາຈະບໍ່ເຂົ້າໃຈລະອຽດໄດ້ເລີຍ. ພວກນັກວິທະຍາສາດອາດໄດ້ເປີດເຜີຍເຣື່ອງເລິກລັບຕ່າງໆ, ແຕ່ເຣື່ອງທີ່ພວກເຂົາໄດ້ຮູ້ນັ້ນເປັນສິ່ງເຕືອນພວກເຮົາວ່າ ຍັງມີຫລາຍຢ່າງທີ່ພວກເຮົາບໍ່ສາມາດຮູ້ໄດ້.

ພວກເຮົາຮູ້ພຣະຄຸນຂອງພຣະເຈົ້າ ທີ່ພຣະອົງໄດ້ເຕືອນພວກເຮົາໃນບົດພຣະຄໍາເຣື່ອງທ່ານໂຢບນີ້ ທີ່ບອກວ່າພຣະເຈົ້າໄດ້ຮູ້ຈັກຄວາມສຸກທຸກຂອງພວກເຮົາ. ພວກເຮົາບໍ່ໄດ້ຮັບຄວາມທຸກທໍຣະມານຄົນດຽວ. ພຣະເຈົ້າຜູ້ຍິ່ງໃຫຍ່ ຜູ້ທີ່ເຮົາສົມຄວນຍົກຍ້ອງ ແລະນະມັສການໄດ້ຮູ້ຈັກທຸກໆສິ່ງທີ່ເຮົາໄດ້ຮັບ.

<u>ຄໍາຖາມ:</u>

1. ມີເວລາໃດບໍ່ທີ່ທ່ານຄິດວ່າພຣະເຈົ້າມິດສງັດໃນຊີວິດຂອງທ່ານ? ແມ່ນຫຍັງເກີດຂຶ້ນກັບທ່ານໃນເວລານັ້ນ? ຈາກການງຽບສງັດນັ້ນ ທ່ານມີຄວາມຮູ້ສຶກຢ່າງໃດ?
2. ຄິດເຖິງປະສົບການທີ່ທ່ານໄດ້ຮຽນຮູ້ເຖິງລັກສະນະຂອງພຣະເຈົ້າ. ມີອັນໃດເປັນສິ່ງແປກໃຈໃນເມື່ອທ່ານໄດ້ເຫັນຮູບພາບນັ້ນແຈ້ງຂື້ນເພາະພຣະເຈົ້າຜູ້ທີ່ທ່ານນະມັສການໃຫ້ທ່ານໄດ້ຮູ້ໄດ້ເຫັນຄັກດີ?
3. ມີບົດຮຽນໃນຊີວິດເກີດຂື້ນບໍ່? ໃນເມື່ອທ່ານໄດ້ເຫັນ ເອເລຣູ ທ້າທາຍໂຢບແລະເພື່ອນເກົ່າຂອງລາວ? ປະສົບການເຫລົ່ານີ້ໄດ້ສອນທ່ານຫຍັງແດ່ຕໍ່ຜູ້ປະສົບກັບຄວາມລໍາບາກໃນຊີວິດ?
4. ປະວັດຫລາຍເຣື່ອງໃນພຣະຄັມພີໄດ້ບອກເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າ. ທ່ານສາມາດບອກອັນນຶ່ງໄດ້ບໍ່? ໃຫ້ທວນຄິດຄືນຫລັງເຖິງບາງຢ່າງທີ່ຊ່ອຍທ່ານໃຫ້ມອງເຫັນຄວາມຍິ່ງໃຫຍ່ຂອງອົງພຣະຜູ້ເປັນເຈົ້າ?

*ດຣ. ບຸນ ວົງສຸຣິດທ໌*

# ບົດຮຽນທີ 6
# ມີຄວາມເຊື່ອແລະຄວາມຫວັງທັງໆທີ່ເຮົາບໍ່ເຂົ້າໃຈ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຢບ 40:3-9,42:1-12

**ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້:** ໂຢບ 40:3-9,42:6

**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາຍັງມີຄວາມເຊື່ອແລະຄວາມຫວັງທັງໆທີ່ຍັງບໍ່ເຂົ້າໃຈດີເຖິງວ່າຄວາມທຸກທໍຣະມານມາຈາກໃສ.

**ຄໍາຖາມເພື່ອການສໍາຣວດ:** ອັນໃດສໍາຄັນກວ່າກັນ-ທີ່ຈະຮູ້ວ່າຄວາມທຸກມາຈາກໃສ ຫລືຮູ້ວ່າພຣະເຈົ້າຈະຫາມາໃຫ້ເຮົາ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະນໍາພາຜູ້ຮຽນໃຫ້ເອົາການຕອບສນອງຂອງທ່ານໂຢບມາໃຊ້ ແລະໃຫ້ຮູ້ວ່າພຣະເຈົ້າໄດ້ຈັດຫາມາໃຫ້ທ່ານໂຢບ.

**ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ຢືນຢັນວ່າພຣະຄັມພີເປັນພະລັງອໍານາດທີ່ຈະຊີ້ນໍາພາໃນຊີວິດ ແລະການຮັບໃຊ້.
- ເສີມຂຍາຍຕົວໃຫ້ໃຫຍ່ຂຶ້ນ ແລະໃຫ້ຄວາມເຊື່ອມີຊີວິດຊີວາ.

## ບົດນໍາ

ການທ້າທາຍຂອງພຣະເຈົ້າຕໍ່ຜູ້ຮັບໃຊ້ຜູ້ໄດ້ຮັບຄວາມທຸກທໍຣະມານຄືທ່ານໂຢບ ເປັນເຫດໃຫ້ຄົ້ນພົບເຫັນຄວາມຫວັງໃຈ, ການປິ່ນປົວໃຫ້ດີພະຍາດ, ແລະການຄືນດີກັບພຣະເຈົ້າ.

ການປະສົບການຂອງທ່ານໂຢບກັບອົງພຣະຜູ້ເປັນເຈົ້າ ໄດ້ສະແດງໃຫ້ເຫັນຄວາມແຕກຕ່າງລະຫວ່າງ ມີຄວາມຄິດເຖິງເຣື່ອງພຣະເຈົ້າ ແລະໄດ້ປະສົບການກັບອົງພຣະຜູ້ເປັນເຈົ້າດ້ວຍຕົນເອງ. ທຸກໆ ຄົນຜູ້ໄດ້ເກີດໃນຄອບຄົວທີ່ເປັນຄຣິສຕຽນ, ໄປນະມັສການທຸກໆວັນອາທິດ ພວກເຮົາໄດ້ມີທໍານຽມອັນດີທີ່ໄດ້ຕົກທອດຈາກບັນພະບຸຣຸດ, ແຕ່ຢ່າງໃດກໍຕາມການທີ່ມີທໍານຽມຢ່າງນີ້ກໍບໍ່ສາມາດເອົາມາທຽບກັບການປະສົບການກັບພຣະເຈົ້າໄດດ້ວຍຕົວເອງ ແມ່ນວ່າຈະເປັນປະສົບການກັນດີຫລືບໍ່ກໍຕາມ.

ບົດຮຽນວັນນີ້ໄດ້ບອກສອນໃຫ້ເຫັນວ່າ ການທີ່ທ່ານໂຢບໄດ້ເຂົ້າໃຈເຖິງພຣະເຈົ້າ ແລະວິທີທາງຂອງພຣະອົງໃນຖານະມຸດໄດ້ເກີດຂຶ້ນຢ່າງແຈ່ມແຈ້ງກໍເມື່ອໄດ້ປະເຊີນກັບເຫດຮ້າຍ ແລະການສູນເສັຽໃນຊີວິດ. ການປະສົບກັບຄວາມທຸກລໍາບາກເຫລົ່ານີ້ໄດ້ເຮັດໃຫ້ທ່ານໂຢບຖ່ອມຕົວ ແລະເປັນຄົນສະດັບຮັບຟັງຄໍາສັ່ງສອນຈາກພຣະເຈົ້າ. ສິ່ງເຫລົ່ານີ້ພວກເຮົາໄດ້ພົບເຫັນໃນພຣະຄໍາທີ່ພວກເຮົາຈະໄດ້ສຶກສາຮ່ວມກັນວັນນີ້. ປື້ມເພງສັຣເສີນໄດ້ເຕືອນພວກເຮົາວ່າ, "ຈົ່ງຢຸດ, ແລະຮູ້ວ່າເຮົາແມ່ນພຣະເຈົ້າ (46:10)

## 1. ການຕອບສນອງຂອງທ່ານໂຢບຕໍ່ພຣະເຈົ້າ (40:3-5)

ທ່ານໂຢບຊອກສແວງຫາຄໍາຕອບຈາກພຣະເຈົ້າ. ທ່ານໂຢບເປັນຄົນກ້າເວົ້າວ່າ, "ຂ້າຈະເວົ້າກັບພຣະເຈົ້າຜູ້ຍິ່ງໃຫຍ່, ແລະຂ້າປະສົງຢາກນໍາຄະດີມາຕໍ່ວ່າກັບພຣະເຈົ້າ." ໃນເມື່ອພຣະເຈົ້າໄດ້ໃຫ້ທ່ານໂຢບຮູ້ສຶກຕົວ ທ່ານໂຢບກໍໄດ້ປ່ຽນທິດທາງໃນການຕໍ່ວ່າພຣະເຈົ້າ.

ໃຜສາມາດອະທິບາຍໄດ້ເຖິງການປ່ຽນແປງທິດທາງຂອງທ່ານໂຢບຈາກການເກັ່ງກ້າ ສາມາດຕໍ່ວ່າພຣະເຈົ້າຈົນກາຍເປັນຄົນຜູ້ຖ່ອມຕົວລົງຂາບໄຫວ້ຕໍ່ພຣະພັກຂອງອົງພຣະຜູ້ເປັນເຈົ້າ. ເຫດການປ່ຽນແປງເກີດຂຶ້ນໄດ້ກໍເພາະພຣະເຈົ້າໄດ້ ເປັນຜູ້ກະທຳລໍ່ຫລອມໃຫ້ທ່ານໂຢບຮູ້ຈັກຄວາມແຕກຕ່າງຂອງການກະທຳອັນສັກສິດຂອງພຣະເຈົ້າ ຄືໃນການຊົງສ້າງໂລກຈັກກະວານ ແລະການກະທຳຊຶ່ງບໍ່ແມ່ນສິມີຂອງມະນຸດ.

ບາງຄົນໄດ້ກ່າວວ່າການທີ່ພຣະເຈົ້າໄດ້ປະເຊີນໜ້າກັບທ່ານໂຢບໃນບົດ 38-39 ເປັນສິ່ງໂຫດຮ້າຍເກີນໄປ, ແຕ່ວ່າຖ້າເບິ່ງຕໍ່ໄປແລ້ວ ສິ່ງທີ່ພຣະເຈົ້າປະເຊີນກັບໂຢບນັ້ນເປັນສິ່ງສຳຄັນເພື່ອໃຫ້ທ່ານໂຢບຕື່ນຕົວ ວ່າຕົນເອງເປັນໃຜ. ເຣື່ອງຂອງທ່ານໂຢບນີ້ໄດ້ເຕືອນພວກເຮົາເຖິງປະສົບການຂອງຜູ້ປະກາດພຣະທັມ ເອຊາຢາ ທີ່ທ່ານໄດ້ພົບກັບອົງພຣະຜູ້ເປັນເຈົ້າໃນພຣະວິຫານ. ເພິ່ນໄດ້ພົບເຫັນຄວາມຍິ່ງໃຫຍ່, ຄວາມບໍຣິສຸດຂອງພຣະເຈົ້າຂອງຕົນ ແລະເພິ່ນໄດ້ສາຣະພາບໂດຍເວົ້າວ່າ, "ຂ້າພະເຈົ້າໄດ້ຮັບເຄາະແລະໝົດຫວັງແລ້ວ! ຄຳເວົ້າທຸກໆຄຳທີ່ອອກຈາກປາກຂ້າພະເຈົ້າ ລ້ວນແຕ່ເປັນບາບ ຂ້າພະເຈົ້າຢູ່ນຳຊົນຊາດທີ່ເວົ້າແຕ່ບາບຫຍາບຊ້າ , ບັດນີ້ ຂ້າພະເຈົ້າໄດ້ເຫັນກະສັດຄືພຣະເຈົ້າແຫ່ງຈັກກະວານກັບຕາຂອງຕົນເອງ." (ເອຊາຢາ 6:5) ການທີ່ຮູ້ຈັກກັບຄວາມບໍຣິສຸດແລະຄວາມຍິ່ງໃຫຍ່ຂອງພຣະເຈົ້າໄດ້ເຕືອນພວກເຮົາໃຫ້ເຫັນຄວາມຜິດພາດແລະບາບກັມ. ຖ້າພວກເຮົາຕ້ອງການເຂົ້າໃຈຢ່າງຖືກຕ້ອງເຖິງຕົນເອງ, ກ່ອນອື່ນໝົດ ໃຫ້ເຮົາຮູ້ຈັກທັມມະຊາດຂອງອົງພຣະຜູ້ສ້າງ-ພຣະອົງບໍຣິສຸດ ແລະຍິ່ງໃຫຍ່ ເປັນຜູ້ຕົ້ນແລະຜູ້ປາຍ.

## ຂ. <u>ການທ້າທາຍທີ່ຢຳເກງພຣະເຈົ້າ</u> (40:6-9)

ຕໍ່ການທູນຂໍຢ່າງຖ່ອມຕົວຂອງທ່ານໂຢບ ພຣະເຈົ້າໄດ້ທ້າຍທາຍຕໍ່ທ່ານໂຢບອີກເຣື່ອງນຶ່ງຊຶ່ງຄ້າຍຄືກັບບົດ 38:1-3, ແຕ່ວ່າອັນນີ້ໄດ້ເລັງໄປຖືກບັນຫາອັນໃຫຍ່ຂອງທ່ານໂຢບ. ເພື່ອເປັນການແກ້ຕົວ ທ່ານໂຢບຍັງກ້າຖາມເຖິງຄວາມເປັນທັມຂອງພຣະເຈົ້າ. ລາວຍັງເວົ້າເຖິງຄຳແນະນຳຂອງເພື່ອນ, ແຕ່ວ່າເຮັດແນວໃດຜູ້ຕາຍເປັນຈຶ່ງຕັດສິນລັກສະນະຂອງພຣະຜູ້ສ້າງໄດ້. ມະນຸດເປັນຜູ້ທີ່ຂາດພະລັງແລະອຳນາດບໍ່ເໝືອນພຣະຜູ້ສ້າງເລີຍ. ຂໍ້ທີ 9 ໄດ້ສລູບວ່າມີຄວາມແຕກຕ່າງຫລາຍລະຫວ່າງພຣະເຈົ້າແລະມະນຸດ.

ຕໍ່ຈາກບົດ (40:10-41:34) ເປັນບົດທີ່ພຣະເຈົ້າໄດ້ເຕືອນພວກເຮົາວ່າບໍ່ເປັນການສົມຄວນທີ່ມະນຸດຈະສໍ້ຖາມວິທີທາງຂອງພຣະເຈົ້າຜູ້ປົກຄອງໂລກຈັກກະວານ. ເຖິງແມ່ນວ່າມະນຸດພະຍາຍາມປົກຄອງໂລກ (40:10-13), ພວກເຂົາກໍເຮັດບໍ່ໄດ້. ພຣະເຈົ້າໄດ້ບອກທ່ານໂຢບເຖິງສັດຮ້າຍທີ່ໜ້າຢ້ານ, "ແຮດຕົວແປກປລາດ." ເຖິງແມ່ນວ່າພວກເຮົາບໍ່ສາມາດຮູ້ໄດ້ຢ່າງແຈ່ມແຈ້ງວ່າສັດນີ້ແມ່ນຫຍັງແທ້ ແຕ່ຮູ້ວ່າເປັນສັດທີ່ມີກຳລັງໃນສັດປ່າທັງຫລາຍ.

ຄຳຖາມມີຢູ່ວ່າ ມະນຸດສາມາດບັງຄັບສັດຢ່າງນີ້ໄດ້ບໍ່? ຄຳຕອບຢ່າງງ່າຍໆກໍຄືວ່າ ເປັນໄປບໍ່ໄດ້ເລີຍ. ແຕ່ອົງພຣະຜູ້ເປັນເຈົ້າສາມາດບັງຄັບສັດຮ້າຍໃນປ່າໄດ້ຢ່າງບໍ່ມີການສົງສັຍ. ແຕ່ທ່ານໂຢບຍັງກ້າຕໍ່ວ່າກັບພຣະເຈົ້າ ອ້າງຕົນເອງຮູ້ວ່າຊີວິດຂອງຕົນຄວນຈະເປັນໄປຢ່າງນັ້ນຢ່າງນີ້ຫລາຍກວ່າພຣະເຈົ້າ.

## 3. <u>ສົມທະນາຕໍ່</u> (42:1-6)

ທ່ານໂຢບເລີ້ມທີ່ຈະເຫັນຄວາມໂງ່ຈ້າ ແລະຄວາມທະເຍີທະຍານເຖິງວິທີການຂອງພຣະເຈົ້າ. ໃນທີ່ສຸດທ່ານໂຢບໄດ້ມີຄວາມເຂົ້າໃຈເຖິງວິທີການຂອງອົງພຣະຜູ້ສ້າງ. ທ່ານໂຢບໄດ້ເວົ້າວ່າມີແຕ່ພຣະເຈົ້າເທົ່ານັ້ນສາມາດຄຸ້ມຄອງໂລກຈັກກະວານໄດ້ ແລະເປັນຈຸດປະສົງອັນສັກສິດທີ່ບໍ່ມີມະນຸດຄົນໃດເຂົ້າໃຈໄດ້ຢ່າງລະອຽດ. ຕອນນີ້ທ່ານໂຢບໄດ້ເອົາຄວາມເຂົ້າໃຈອັນຖືກຕ້ອງຂອງພຣະເຈົ້າຜູ້ຊົງຮູ້ທຸກຢ່າງເຂົ້າມາແທນຄວາມຈອງຫອງຂອງຕົນ.

ການຕອບສນອງຕໍ່ພຣະເຈົ້າ ທ່ານໂຢບໄດ້ໃຊ້ຄຳເວົ້າຂອງພຣະເຈົ້າກ່ອນ (ເບິ່ງ 38:2 ແລະ 42:3) ສອງ, (ເບິ່ງ 40:7 ແລະ 42:4) ທ່ານໂຢບຮັບຮູ້ພຣະປັນຍາຂອງພຣະເຈົ້າ ແລະເປັນການສົມຄວນທີ່ພຣະເຈົ້າໄດ້ທ້າທາຍຕໍ່ຕົນເອງ. ທ່ານໂຢບສາຣະພາບເຖິງຄວາມຜິດພາດ ແລະສະແດງຄວາມເສັຽໃຈຕໍ່ການທີ່ຕົນເອງບໍ່ມີຄວາມອົດທົນ ແລະບໍ່ເຂົ້າໃຈໃນພຣະເຈົ້າທີ່ຕົນເອງນັບຖື. ນີ້ເປັນສິ່ງທີ່ທ່ານໂຢບໄດ້ສະແດງເຖິງການຜິດພາດໂດຍເອົາກະສອບເຂົ້າມານຸ່ງ ແລະເອົາຂີ້ເຖົ່າໄຟມາໃສ່ຫົວຕົນເອງ.

ຕລອດເຣື່ອງ ທ່ານໂຢບໄດ້ໂຕ້ຖຽງກັບເພື່ອນວ່າ ຕົນເອງບໍ່ໄດ້ຜິດຫຍັງ. ລາວເຊື່ອໝັ້ນວ່າພຣະເຈົ້າຈະປະກາດຄວາມບໍ່ມີຄວາມຜິດໃຫ້ຄົນອື່ນຮູ້. ເຣື່ອງນີ້ ທ່ານໂຢບບໍ່ໄດ້ຮຽນຈາກສາສນາທີ່ໄດ້ຕົກທອດມາຈາກບັນພະບູຣຸດ ແລະຄົນອື່ນໃດ, ແຕ່ລາວໄດ້ຮຽນຮູ້ດ້ວຍຕົນເອງ ເມື່ອໄດ້ພົບເຫັນຄວາມບໍຣິສຸດແລະພະລັງອຳນາດຂອງພຣະເຈົ້າ.

ບັນຫາຂອງທ່ານໂຢບໄດ້ເລີ້ມເກີດມີໃນປື້ມນີ້ຈາກຄຳຖາມຂອງພະຍາມານ (1:9) "ຖ້າໂຢບບໍ່ໄດ້ຫຍັງລາວຈະຂາບໄຫວ້ພຣະອົງຫລື?" ການສາຣະພາບຜິດຂອງທ່ານໂຢບໃນບົດ 42:1-6. ທ່ານໂຢບໄດ້ຮຽນ ແລະມີປັນຍາທີ່ຈະໄວ້ວາງໃຈໃນພຣະເຈົ້າ, ແທນທີ່ຈະຈ້ອງມອງແຕ່ໂຊກຮ້າຍ ແລະເຣື່ອງໂຫດຮ້າຍເກີດຂຶ້ນກັບຕົນເອງ.

## 4. <u>ຂອງຂວັນອັນໃຫຍ່ກວ່າ</u> (42:7-12)

ໃນເມື່ອພວກເຮົາໄດ້ມາເຖິງຈຸດຈົບຂອງບົດ 42, ເປັນເຣື່ອງທີ່ເອົາມາຈາກ ຂໍ້ 1-2. ເປັນເຣື່ອງທີ່ເຮົາຄວນຖາມ, ຂ້າພະເຈົ້າຮູ້ວ່າເວົ້າເຖິງຫຍັງ, ແຕ່ວ່າມັນມີຄວາມໝາຍອັນໃດ? ເຣື່ອງຂອງທ່ານໂຢບບໍ່ແມ່ນເຣື່ອງຈົບລົງດ້ວຍດີ ເໝືອນ ພຣະເອກນາງເອກໄດ້ກັນໃນໜັງ. ປະສົບການອັນນີ້ໄດ້ສະແດງໃຫ້ເຫັນວ່າເປັນຄວາມເຈັບປວດແທ້ ຈຸດສຸດທ້າຍອາດຈະບໍ່ຈົບລົງຕາມຄວາມຕັ້ງໃຈຂອງພວກເຮົາໄດ້. ທ່ານໂຢບໄດ້ສອນໃຫ້ເຮົາຮູ້ວ່າພຣະເຈົ້າມີພຣະຄຸນ, ຍອມຟັງຄຳທູນຂໍ, ແລະອວຍພຣະພອນດ້ວຍຄວາມຮັກ.

ເປັນຄວາມຈິງ ເຣື່ອງຂອງທ່ານໂຢບນີ້ໄດ້ສອນໃຫ້ຮູ້ວ່າ ທີ່ສຸດຂອງຊີວິດພວກເຮົາຫວັງສເມີວ່າຈະໄດ້ຮັບຂອງຂວັນອັນໃຫຍ່. ພຣະເຈົ້າໄດ້ປະທານໃຫ້ທ່ານໂຢບກັບເພື່ອນໆໃຫ້ຮູ້ທັງສອງຢ່າງ ການຕັດສິນແລະຄວາມຫວັງໃນພຣະເຈົ້າ, ພຣະເຈົ້າປະເຊີນກັບພວກເຂົາເຖິງຄວາມຜິດແລະເປີດປະຕູໃຫ້ກັບໃຈໃໝ່. ພຣະເຈົ້າໄດ້ເພີ້ມເຕີມໃຫ້ທ່ານໂຢບມີສິ່ງຂອງແລະຄອບຄົວ, ແລະພຣະອົງຍັງເປີດໂອກາດໃຫ້ມີຄວາມສຳພັນຄືນດີກັບຜູ້ຫາເຣື່ອງໃສ່ລາວ.

<u>ຄຳຖາມ:</u>

1. ທ່ານສາມາດຄິດເຖິງປະສົບການໃນຊີວິດທີ່ຜ່ານມາ ທີ່ເຮັດໃຫ້ທ່ານຄິດທວນຄືນຫລັງເຖິງຄວາມເຂົ້າໃຈແບບເກົ່າເຖິງເຣື່ອງພຣະເຈົ້າ, ທີ່ເປັນຜົນໃຫ້ທ່ານມີຄວາມເຂົ້າໃຈດີເຖິງພຣະເຈົ້າຫລືບໍ່? ທ່ານຍິນດີບໍ່ທີ່ຈະແບ່ງປັນກັບເພື່ອນໃນຫ້ອງຮຽນ?

2. ທ່ານຮູ້ສຶກວ່າການທີ່ພຣະເຈົ້າໄດ້ປະເຊີນໜ້າກັບທ່ານໂຢບໃນບົດ 38-39 ເປັນການຂາດຄວາມສົນໃຈຂອງພຣະເຈົ້າບໍ່? ໃນທາງໃດທີ່ທ່ານໂຢບຄວນຈະໄດ້ຮັບການຊ່ວຍເຫລືອ? ທ່ານສາມາດຄິດເຖິງພຣະຄັມພີບ່ອນອື່ນໆທີ່ມີເຣື່ອງຄ້າຍຄືກັນບໍ່?

3. ປະສົບການທີ່ທ່ານມີກັບພຣະເຈົ້າ ໄດ້ເປັນຜົນດີເຮັດໃຫ້ທ່ານແປກໃຈທີ່ໄດ້ຄົ້ນພົບພຣະພອນເກີນຄວາມຫວັງທີ່ທ່ານໄດ້ຕັ້ງໃຈເອົາໄວ້ບໍ່?

4. ທ່ານຄິດວ່າເປັນຫຍັງພຣະເຈົ້າຈຶ່ງນຳພາເພື່ອນທັງສາມຄົນໄປຫາທ່ານໂຢບໃຫ້ຖວາຍບູຊາ? ທ່ານຄິດວ່າເປັນຫຍັງທ່ານໂຢບຖືກບອກໃຫ້ອ້ອນວອນເພື່ອເຂົາທັງສາມ?

*ດຣ. ບຸນ ວົງສຸຣິດທ໌*

# <u>ບົດຮຽນທີ 7</u>
# <u>ຊີວິດບໍ່ໄປເຖິງໃສ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ປັນຍາຈານ 1:1-11

**<u>ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:</u>** ປັນຍາຈານ 1:1-11

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ບາງຄັ້ງເຫັນວ່າຊີວິດບໍ່ມີຄວາມໝາຍຫຍັງເລີຍ, ບໍ່ມີຫຍັງດີຫລືຈຸດປະສົງ, ແລະບໍ່ໄປມາທາງໃດເລີຍ.

**<u>ຄໍາຖາມເພື່ອການສໍາຣວດ:</u>** ທ່ານເຄີຍມີຄວາມຮູ້ສຶກວ່າຊີວິດຂາດຄວາມໝາຍ ແລະບໍ່ໄປມາທາງໃດເລີຍ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະຄໍານວນເຖິງຄໍາສອນຂອງຄຣູທີ່ສອນວ່າ ຊີວິດນີ້ເຫັນວ່າບໍ່ໄປມາທາງໃດ ແລະເອົາປະກອບໃຊ້ໃນຊີວິດປະຈໍາວັນນີ້

**<u>ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ຢືນຢັນວ່າພຣະຄັມພີເປັນພະລັງອໍານາດທີ່ຈະຊີ້ນໍາພາໃນຊີວິດ ແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ
- ເສີມຂຍາຍຕົວໃຫ້ໃຫຍ່ຂື້ນ ແລະໃຫ້ຄວາມເຊື່ອມີຊີວິດຊີວາ.

## <u>ບົດນໍາ</u>

ເທົ່າທີ່ພວກເຮົາໄດ້ເພິ່ງພຣະເຈົ້າພວກເຮົາເຫັນວ່າຊີວິດນີ້ມີຄວາມໝາຍ. ພຣະເຈົ້າເທົ່ານັ້ນມີພະລັງອໍານາດທີ່ຈະປ່ຽນແປງສະພາບສາມັນໃຫ້ເປັນສິ່ງມະຫັສຈັນຂຶ້ນ, ມື້ທັມະດາກາຍເປັນເວລາບໍ່ສິ້ນສຸດ, ຄວາມຜິດພາດໃຫ້ກາຍເປັນການຊົງໄຊ. ຖ້າບໍ່ດັ່ງນັ້ນ, ມັນເປັນຄວາມຈິງທີ່ວ່າຊີວິດນີ້ບໍ່ມີຄວາມໝາຍເລີຍ.

ຄຣູສອນໄດ້ຂຶ້ນຕົ້ນດ້ວຍສິ່ງທີ່ຄົນທັງຫລາຍໄດ້ຮູ້ຈັກດີວ່າ, " ມັນມີເວລາສໍາລັບທຸກສິ່ງ " (ປັນຍາຈານ 3:1). ແປດຂໍ້ໃນບົດທີ 3 ນີ້ເປັນບົດທີ່ຫລາຍຄົນໄດ້ຮູ້ຈັກດີ. ເປັນໜ້າແປກປລາດທີ່ໄດ້ບັນດົນໃຈໃຫ້ຄຣູສອນໄດ້ຂຽນເຖິງ 28 ເຣື່ອງຕ່າງໆເປັນສິ່ງທ້າທາຍຕໍ່ມະນຸດເຮົາທຸກຄົນໃນຈັກກະວານນີ້ ແມ່ນບໍ່?

ການທີ່ມອງເຫັນວ່າເວລາໃດຄວນຈະເຮັດຫຍັງແດ່, ຄວນລໍຄອຍຫລືລົງມືກະທໍາອັນໃດອັນນຶ່ງ ສິ່ງນີ້ຕ້ອງອາສັຍປັນຍາຈາກປະສົບການຂອງມະນຸດ. ສິ່ງທີ່ເຮັດໃຫ້ຄຣູສອນໄດ້ຂຽນເຖິງເຣື່ອງສໍາຄັນໃນຊີວິດ ທີ່ພວກເຮົາໄດ້ອ້າງເຖິງເປັນປະຈໍາຫລັງຈາກ 3000 ປີຕໍ່ມາ. ການສຶກສາປະວັດຊີວິດຂອງຄຣູສອນໃນສາມບົດນີ້ຈະຊ່ອຍພວກເຮົາໃຫ້ເຂົ້າໃຈໃນຊີວິດຂອງເພິ່ນເຖິງຈຸດລໍາບາກ ແລະຈຸດສໍາເຣັດທີ່ເພິ່ນໄດ້ຄົ້ນພົບປັນຍາໃນການຮູ້ຈັກຈະດໍາລົງຊີວິດໃນພຣະເຈົ້າຢ່າງຖືກຕ້ອງ.

ຄຣູສອນມີບົດຮຽນດີຫລາຍ ໆຢ່າງທີ່ຈະສອນພວກເຮົາ. ເພິ່ນໄດ້ສອນພວກເຮົາເຖິງການຫລອກລວງອັນຍິ່ງໃຫຍ່ໃນຊີວິດເວລາເຮົາໄດ້ມີອາຍຸແກ່ຂຶ້ນແຕ່ລະມື້.

ຄຣູສອນຂອງປຶ້ມປັນຍາຈານ ເໝືອນທ່ານ ໂຢບ, ຮາບາກຸກ, ຫລືຜູ້ຂຽນປຶ້ມເພງຄໍາຄວນ-ພວກເຂົາໄດ້ມີຄວາມທຸກລໍາບາກ ເຖິງພວກເຂົາມີຄວາມເຊື່ອໃນພຣະເຈົ້າ. ນັ້ນເປັນເຣື່ອງທີ່ຄຣູໄດ້ປະສົບການທີ່ໄວ້ວາງໃຈໃນພຣະເຈົ້າ ແລະສິ່ງທີ່ເພິ່ນໄດ້ປະສົບການເປັນສິ່ງແຕກຕ່າງກັນຫລາຍ, ດັ່ງນັ້ນ, ເພິ່ນຈຶ່ງໄດ້ກໍ່ສ້າງຄວາມເຊື່ອຂຶ້ນອີກ. ຄຣູສອນໄດ້ເຮັດໃຫ້ເຂົ້າໃຈກັບບັນຫາລະຫວ່າງສິ່ງທີ່ເຮົາສາມາດຮູ້ ແລະບໍ່ສາມາດຮູ້ໄດ້ຈາກຄວາມເຊື່ອທີ່ປອມ.

## 1. ເບິ່ງກວ້າງໄກ (1:1-3)

"ປັນຍາຈານ" ເປັນຊື່ຂອງປຶ້ມຊຶ່ງໄດ້ເອົາອອກມາຈາກພຣະຄຳພີເດີມທີ່ແປເປັນພາສາກຣີກ. ຄຳເວົ້ານີ້ໄດ້ບອກເຖິງຄຳເວົ້າ ຄຣິສຕະຈັກ ໃນພຣະຄັມພີໃໝ່, ເອກກະຊີອາ. ຄຳເວົ້ານີ້ມີຄວາມໝາຍໃຫ້ມາເຕົ້າໂຮມກັນ.

ສາມຄຳເວົ້າເລີ້ມຕົ້ນໄດ້ເວົ້າເຖິງຜູ້ຂຽນ, ເວົ້າເຖິງຄຳຂວັນ, ແລະແບບການຂຽນຂອງປຶ້ມປັນຍາຈານ. ຜູ້ຂຽນນີ້ໄດ້ເອີ້ນວ່າ, "ຄຣູສອນ" (ປັນຍາຈານ 1:1). ຄຳຂວັນມີຢູ່ວ່າຊີວິດປາສຈາກພຣະເຈົ້າແລ້ວກໍບໍ່ມີຄວາມໝາຍຫຍັງເລີຍ. ຄຳສລູບຂອງຄຣູສອນທີ່ກ່າວເຖິງຊີວິດວ່າບໍ່ມີຄວາມໝາຍ ຖ້າບໍ່ປະຕິບັດຕາມພົນທາງຂອງພຣະເຈົ້າຊຶ່ງໄດ້ກ່າວມາແຕ່ຕົ້ນ.

### ກະສັດຊະໂລໂມນເປັນ "ຄຣູສອນ" ບໍ່?

ບົດຂຽນນີ້ໄດ້ບອກວ່າ ໂກຮີເລດ, ເປັນຜູ້ຂຽນປຶ້ມປັນຍາຈານ, ບໍ່ໄດ້ບອກອອກຊື່ແຈ້ງ. ໂກຮີເລດ ເປັນພາສາເຮີເລີ ທີ່ອ້າງເຖິງຜູ້ນຳໃນບ່ອນຊຸມນຸມ ແລະໄດ້ແປວ່າ, "ຄຣູສອນ."

ໂກຮີເລດ ຍັງເວົ້າເຖິງເໝືອນກັບ "ລູກຂອງກະສັດດາວິດ" (ປັນຍາຈານ 1:1) ຄຳເວົ້າວ່າເປັນລູກນັ້ນອາດໝາຍເຖິງເປັນລູກຕາມສາຍເລືອດ ຫລືຕາມການໃຊ້ໃນດ້ານວິນຍານຈິດ. ໂກຮີເລດ ຍັງໄດ້ໝາຍອີກວ່າເປັນກະສັດຂອງຊາດອິສຣາເອນ (1:1, 12)

ໂກຮີເລດ ໝາຍເຖິງຄູສອນໃນກຸ່ມຝູງຊົນ. ໃນບົດ 12:9-10 ໄດ້ອ້າງເຖິງເປັນຜູ້ສລາດ. ໂກຮີເລດ ເປັນຄຳເວົ້າເຖິງຜູ້ມີຄວາມສາມາດ "ມີຄວາມຮູ້ສູງໃນຝູງຄົນທັງຫລາຍ." (12:9). ເປັນຜູ້ມີສະຕິປັນຍາມາຈາກພຣະເຈົ້າ ແລະສາມາດໃນການນຳພາຄົນອື່ນເໝືອນດັ່ງຜູ້ລ້ຽງແກະ (12:9-14). ບັນພະບຸຣຸດ ແລະຜູ້ແປພຣະຄັມພີ, ເຈໂຣມ (347-420) ໄດ້ເອີ້ນຄຣູສອນນີ້ວ່າຜູ້ກ່າວໃນທີ່ຊຸມນຸມ. ໃນລະຍະການປະຕິລູບ, ຄຣູໄດ້ຖືກເອີ້ນວ່າ ຜູ້ເທສນາ.

ຕາມທຳນຽມແລ້ວ ຜູ້ຂຽນແມ່ນຊະໂລໂມນ, ແຕ່ວ່າບໍ່ໄດ້ອອກຊື່ຢ່າງແຈ່ມແຈ້ງວ່າໃຜເປັນຜູ້ຂຽນປຶ້ມປັນຍາຈານນີ້ແທ້. ຕາມອາຍຸສັງຂານແລ້ວ ຄົນສ່ວນຫລາຍໃຫ້ສິດທິແກ່ຊະໂລໂມນ-ຜູ້ມີຄວາມສາມາດກວດເບິ່ງຊີວິດ ແລະຮູ້ວ່າຕົນເອງໄດ້ເສັຽສິ່ງມີຄຸນຄ່າຂອງເວລາ, ຂອງໂອກາດ, ແລະການຮັບຜິດຊອບໃນການເປັນກະສັດຊຶ່ງກົງກັບສະພາບກັບການເປັນຄຣູ.

### ຊີວິດນີ້ບໍ່ມີຄວາມໝາຍຫຍັງ?

"ບໍ່ມີຄວາມໝາຍ" ເປັນຄຳຂວັນໃນປຶ້ມນີ້. ຄຣູສອນໄດ້ທົດສອບວັນເວລາວ່າມັນກົງກັບການສລູບຂອງຕົນເອງຫລືບໍ່? ມີຊີວິດຢູ່ຢ່າງຕື້ນໆນຳພາໄປເຖິງການຕລົກຫລືເປັນໜ້າຢາກຫົວ. ມີຊີວິດຢູ່ຢ່າງເລິກຊຶ້ງເຮັດໃຫ້ມີໂອກາດໄດ້ຮູ້ຈັກ "ສິ່ງສຸດທ້າຍຊຶ່ງເປັນການດີກວ່າການເລີ້ມຕົ້ນ." (7:8). ທີ່ນັ້ນແຫລະເຮັດໃຫ້ພວກເຮົາສາມາດພົບເຫັນ, "ຄວາມຍິ່ງໃຫຍ່ຂອງພຣະເຈົ້າ." ໃນເມື່ອມີຊີວິດທີ່ຢູ່ກັບສະພາບຂອງຄວາມຝັນແລະສິ່ງທີ່ບໍ່ມີຄວາມໝາຍ (5:7).

## 2. ທັມະຊາດໄດ້ເປີຍເຜີຍເຣື່ອງພຣະເຈົ້າ ແລະສິ່ງບໍ່ມີຄວາມໝາຍ (1:4-9)

ຜູ້ເປັນຄຣູໄດ້ສັງເກດເບິ່ງສະພາບການເປັນໄປຂອງທັມະຊາດ. ເພິ່ນໄດ້ສັງເກດເບິ່ງການເປັນຢູ່ຂອງໂລກ, ຕາເວັນຂຶ້ນຕາເວັນຕົກ, ລົມພັດໄປມາ, ຮ່ອງຫ້ວຍໄດ້ໄຫລໄປສູ່ທະເລຢ່າງບໍ່ຢຸດຢັ້ງ, ແຕ່ບໍ່ເຄີຍເຕັມຈັກ ເທື່ອ. ເພິ່ນໄດ້ພິຈາລະ

ມາເບິ່ງວ່າສາຍຕາ ແລະຫູຂອງພວກເຮົາບໍ່ສາມາດໄດ້ເຫັນ ແລະໄດ້ຍິນທຸກໆສິ່ງທີ່ ເກີດຂື້ນ.
ການສັງເກດຂອງຄຣູເປັນເຫດໃຫ້ເພິ່ນຕັ້ງຄຳຖາມຂື້ນວ່າ, ເປັນຫຍັງໂລກນີ້ຄົງທີ່ໄດ້ ແຕ່ມະນຸດ ບໍ່ສາມາດຢັ້ງຢູ່ໄດ້? ຈຸດປະສົງຂອງຕາເວັນແມ່ນຫຍັງຖ້າບໍ່ໃຊ້ໃນການປ່ຽນແປງ? ຕໍ່ຄຣູສອນແລ້ວ, ທັມ ມະຊາດໄດ້ເປີດເຜີຍການໝູນວຽນຢ່າງບໍ່ສິ້ນສຸດ ຢູ່ໃນນັ້ນເອງກໍບໍ່ໄດ້ມີອຳນາດປ່ຽນແປງຊີວິດຂອງພວກ ເຮົາຫຍັງເລີຍ.

ທັມະນຊາດເປັນສິ່ງທີ່ພວກເຮົາຮັບຄວາມອົບອຸ່ນ ແລະຮູ້ຄຸນຄ່າ. ສິ່ງຊີງສ້າງມີຄວາມໝາຍອັນເລິກເຊິ່ງພວກເຮົາມອງເບິ່ງຕາມທັສະນະຂອງພຣະເຈົ້າ. ອົງພຣະເຢຊູໄດ້ເວົ້າເຖິງຄວາມສວຍງາມຂອງດອກບົວ, "ແຕ່ເຮົາບອກທ່ານທັງຫລາຍວ່າ ເຖິງແມ່ນກະສັດຊະໂລໂມນ ເມື່ອບໍຣິບູນດ້ວຍສະງ່າຣາສີກໍບໍ່ໄດ້ຊົງເຄື່ອງງາມທໍ່ດອກໄມ້ເຫລົ່ານີ້ດອກນີ້ງ." (ມັດທາຍ 6:29). ຄວາມງົດງາມຢ່າງນີ້ຢູ່ໃນວັນນີ້ ແລະສູນ ເສັຽໄປໃນມື້ອື່ນ. ດັ່ງນັ້ນ, ໃຫ້ພວກເຮົາ "ສແວງຫາພຣະເຈົ້າກ່ອນ (ຣາຊອານາຈັກຂອງພຣະເຈົ້າ) ແລະຄວາມຊອບທັມຂອງພຣະອົງ." (ມັດທາຍ 6:33). ແລະສິ່ງທີ່ຕ້ອງການນັ້ນຈະຖືກຈັດຫາໃຫ້ຕາມ ທີຫລັງ.

### 3. ຄວາມຫວັງ ແລະຄວາມຜິດຫວັງ (1:10-11)

ຄຣູສອນໄດ້ລັງເລໃຈໃນການຊອກຫາເຫດຜົນທີ່ຈະເຊື່ອ. ເພິ່ນຊອກສແວງຫາເຫດຜົນທີ່ຈະໄວ້ວາງໃຈໃນພຣະເຈົ້າ ເພື່ອໃຫ້ຊີວິດມີຄວາມໝາຍ. ມີຄວາມໂສກເສົ້າໃນຊີວິດ, ຄຣູສອນໄດ້ຍ້ອງຍໍພວກເຮົາຜູ້ໄດ້ອ່ານເຣື່ອງທີ່ເພິ່ນໄດ້ຂຽນຂື້ນມາ ເພື່ອໃຫ້ເຮົາຮູ້ຈັກກັບສິ່ງທີ່ເພິ່ນມີຄວາມເຂົ້າໃຈ ແລະຮູ້ເຫັນດ້ວຍການພົບເຫັນເປັນປະສົບການ.

ຄຳເວົ້າໃນ 1:10-11 ໄດ້ບອກເຖິງການເສົ້າໂສກ. ໃນການຂຽນຂື້ນທັງໝົດນີ້ ພວກເຮົາຈະໄດ້ພົບເຫັນການເຈັບປວດຂອງຄົນຜູ້ຕ້ອງການໄດ້ຮັບການປິ່ນປົວ (ເບິ່ງ ປັນຍາຈານ 5:13-16). ພ້ອມກັບການເຫັນດີກັບການຂຽນຂອງຣາບາກຸກ, ແລະ ເພງຄ່ຳຄວນ ຄຣູສອນໃນປື້ມປັນຍາຈານໄດ້ມີຄວາມເສົ້າໃຈຕໍ່ຄວາມສັບສົນຂອງຊີວິດ. ຄຳສອນໃນປື້ມເຫລົ່ານີ້ແລະພ້ອມທັງຜູ້ຂຽນໄດ້ບອກວ່າ ໃຫ້ເຊື່ອໝັ້ນກັບຄຳສອນເພື່ອເຮົາຈະສາມາດປະເຊີນກັບຄວາມກະທົບຂອງຊີວິດໄດ້. ຄົນເຫລົ່ານີ້ໄດ້ມີຄວາມລຳບາກກັບຄວາມເຊື່ອ, ເຂົາຊອກສແວງຫາທາງທີ່ຈະປ່ຽນແປງໃນຊີວິດເຫມືອນພວກເຮົາທຸກມື້ນີ້.

ຄຣູສອນຄິດວ່າໃນປັນຍາຂອງເຂົາເອງ ທີ່ໄດ້ມາຈາກການສັງເກດ, ການປະພຶດ, ແລະການສະມະທິ ສາມາດເຮັດໃຫ້ມີຄວາມຍິນດີ. ແຕ່ມັນຊ່ອຍຫຍັງບໍ່ໄດ້ເລີຍ ເພິ່ນຈຶ່ງກາຍເປັນຄົນໂສກເສົ້າແສນສາຫັດ. ແຕ່ໃນຖ້າມກາງການສູນເສັຽ, ເພິ່ນເລີ້ມເບິ່ງເຫັນພຣະເຈົ້າ ເມື່ອເປັນດັ່ງນັ້ນເພິ່ນໄດ້ພົບພຣະອົງເປັນຄັ້ງທຳອິດ. ໃນທີ່ສຸດ ເພິ່ນກໍໄດ້ເຫັນພາບພົດວ່າທຸກຢ່າງຈະເຂົ້າມາໃນຊີວິດເປັນຢ່າງດີ.

**ຄຳຖາມ**

1. ມັນເປັນການເຈັບປວດສຳລັບຄຣູທີ່ຈະມອງເບິ່ງຊີວິດໃນທາງລົບ. ມີຫຍັງບໍ່ທີ່ທ່ານມອງເຫັນຊີວິດໃນທາງລົບ? ວິທີໃດຄວາມເຊື່ອຂອງທ່ານຊ່ວຍທ່ານສາມາດຕໍ່ສູ້ກັບບັນຫາຕ່າງໆ?

2. ຕາເວັນຂື້ນຈາກທິດຕາເວັນອອກແລະຕົກໃນທິດຕາເວັນຕົກທຸກໆວັນ. ລົມໄດ້ພັດຈາກທາງເໜືອໄປຫາໃຕ້ຕລອດການ. ທັມະຊາດໝູນວຽນຢ່າງນີ້ໄດ້ສອນຫຍັງແກ່ທ່ານແດ່ເຖິງພຣະເຈົ້າ ແລະຈຸດປະສົງຂອງພຣະອົງ?

3. ຄົນເຮົາບໍ່ພໍໃຈກັບສິ່ງທີ່ມີຢູ່. ໃນເມື່ອຄົນຮູ້ວ່າຕົນເອງບໍ່ມີແລະເຂົາກໍຢາກມີກັບສິ່ງທີ່ບໍ່ມີ. ການຕ້ອງການເຫລົ່ານີ້ບໍ່ເປັນການສິ້ນສຸດຈັກເທື່ອ. ຖືກບໍ່ທີ່ຄຣູສອນສຳຣວດເບິ່ງວ່າການບໍ່ພໍໃຈເປັນຕົ້ນເຫດໃຫ້ຮູ້ຈັກການບໍ່ມີຄວາມໝາຍ?

4. ແມ່ນຫຍັງເປັນສິ່ງສຳຄັນໃນການສອນຂອງຄຣູໃນບົດນີ້?   ເຮັດວິທີໃດທີ່ພວກເຮົາຈະເອົາບົດນີ້ມາໃຊ້ໃນຊີວິດ ແລະໃນໂລກນີ້? ວິທີໃດຄຳສອນຂອງພຣະເຢຊູໄດ້ສຳພັນກັບຄຳສອນນີ້?

*ດຣ. ບຸນ ວົງສຸຣິດທ໌*

# <u>ບົດຮຽນບົດທີ 8</u>
# <u>ທຸກສິ່ງລ້ວນແຕ່ອະນິຈັງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ປັນຍາຈານ 1:12--2:17, 22-23
**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** ປັນຍາຈານ 1:12--2:26
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ແມ່ນແຕ່ສິ່ງທີ່ຖືວ່າດີເລີດໃນຊີວິດມະນຸດ ກໍບໍ່ໄດ້ພຽງພໍທີ່ຈະນຳຄຸນຄ່າ ແລະຄວາມພໍໃຈມາໃຫ້ກັບຕົວເອງ.
**<u>ຄຳຖາມເພື່ອການສຳຣວດ:</u>** ທຸກຢ່າງໃນຊີວິດຈະມີຄວາມໝາຍຫຍັງ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຊີ້ໃຫ້ເຫັນວ່າຄວາມພຍາຍາມຂອງມະນຸດທີ່ຈະພົບຄວາມໝາຍໃນຊີວິດນັ້ນບໍ່ສຳເຣັດ.

### <u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## <u>ຄຳນຳ</u>

ຄຳສາຣະພາບອັນສັ້ນ ຊຶ່ງຄຣູ (ຜູ້ຂຽນປັນຍາຈານ) ໄດ້ໃຊ້ຄຳວ່າ "ຂ້າພະເຈົ້າ" ໃນຫລາຍໆບ່ອນ ໄດ້ເປີດເຜີຍເຖິງຄວາມທຸກທີ່ຊ່ອນຢູ່ໃນສ່ວນເລິກຂອງບຸກຄົນທີ່ໄດ້ສແວງຫາຊີວິດທີ່ດີຕາມຄວາມເຂົ້າໃຈຂອງຕົວເອງ. ມີແຕ່ສະຕິປັນຍາຂອງພຣະເຈົ້າຊຶ່ງຄຣູ (ກະສັດ ໂຊໂລໂມນ) ໄດ້ຮຽນຮູ້ ທີ່ສາມາດນຳຊີວິດທີ່ມີຄວາມໝາຍມາໃຫ້.

ພວກເຮົາທຸກຄົນຢາກຈະເປັນຄົນສລາດ. ຄຳຖາມຄື: ຈະເຮັດແນວໃດ? ການໃຊ້ຊີວິດທີ່ສລາດຈະນຳຜົນດີຂອງຄວາມສລາດມາໃຫ້; ການໃຊ້ຊີວິດຢ່າງໂງ່ຊ້າຈະນຳຄວາມເສື່ອມເສັຽມາສູ່ຊີວິດທີ່ເຕັມດ້ວຍຄວາມຫວັງ.ທາງຂອງພຣະເຈົ້າຄືທາງທີ່ຖືກຕ້ອງ. ເວລາພວກເຮົາອອກນອກທາງສະຕິປັນຍາຈະເຕືອນພັຍທີ່ຈະມາເຖິງ. ການກະທຳຢ່າງຖືກຕ້ອງກ່ອນຄວາມຜິດຫວັງຈະມາເຖິງຄືວິຖີຊີວິດຂອງຄົນສລາດ.

## <u>ການເປັນຕົວເຮົາເອງ</u>

ການຈະເປັນຕົນເຮົາເອງ ກໍເປັນເຣື່ອງທີ່ທ້າທາຍພໍສົມຄວນ. ແຕ່ການຈະເປັນຄົນທີ່ພຣະເຈົ້າຊົງສ້າງພວກເຮົາໃຫ້ເປັນຄືຫົນທາງທີ່ເຕັມດ້ວຍຄວາມເບີກບານສຳຣານ. ທັມມະຊາດປຽນໂຕດ້ວງໃຫ້ເປັນແມງກະເບື້ອ, ວິທີທາງຂອງຄຣິສຕຽນປ່ຽນແປງຜູ້ທີ່ເຊື່ອໃຫ້ເປັນບຸກຄົນທີ່ສວຍງາມ. ທາງຊີວິດທີ່ມະນຸດຄິດວ່າດີທີ່ສຸດບໍ່ສາມາດທີ່ຈະມາປຽບກັບທາງຂອງພຣະຄຣິດ. ພຣະອົງຊົງກ່າວວ່າ "ເຮົານີ້ແຫລະ, ເປັນທາງນັ້ນ, , ເປັນຄວາມຈິງ, ແລະເປັນຊີວິດ" (ໂຢຮັນ 14:6). ສິ່ງນຶ່ງທີ່ທ້າທາຍການຈະເປັນຕົວເຮົາເອງຄື ພຣະເຈົ້າໄດ້ຊົງໃຫ້ມະນຸດມີເສຣີໃນການເລືອກ ແລະໄດ້ຊົງປະທານພຣະຄຸນ ແລະປັນຍາໃຫ້ກັບທຸກຄົນ. ໃນຂະນະທີ່ພວກເຮົາພຍາຍາມຈະເປັນຕົວເຮົາເອງ ຫລາຍໆຢ່າງໃນໂລກກໍຈ່ອງດຶງ ພວກເຮົາໃຫ້ໄປໃນທາງອື່ນໆ; ສະນັ້ນພວກເຮົາຈະຕ້ອງມີການຕັ້ງໃຈ ແລະການອາສັຍປັນຍາເພື່ອສັງເກດຮູ້ສິ່ງທີ່ຖືກ

ເພື່ອຈະບໍ່ໄດ້ຫລົງທາງ.

ກະສັດໂຊໂລໂມນ ເປັນກະສັດອົງທີສາມຂອງອິສຣາເອັນ ແລະເປັນລູກຂອງກະສັດດາວິດ. ພຣະອົງໄດ້ປະສົບກັບສິ່ງທີ່ໃຫຍ່ກວ່າຕົວເອງ, ສິ່ງທີ່ດີທີ່ສຸດ ແລະສິ່ງທີ່ຊົ່ວທີ່ສຸດໃນຊີວິດ. ທ່ານໄດ້ອ້ອນວອນຕໍ່ພຣະເຈົ້າໃນຕອນນຶ່ງວ່າ "ຂ້າພຣະອົງຍັງໜຸ່ມແລະບໍ່ຮູ້ວ່າຈະປົກຄອງຢ່າງໃດ... ຂໍພຣະອົງໂຜດສະຕິປັນຍາແກ່ຂ້າພະອົງເພື່ອຈະປົກຄອງປະຊາຊົນຂອງພຣະອົງຢ່າງຍຸຕິທັມແລະເພື່ອຈະຮູ້ຄວາມແຕກຕ່າງຣະຫວ່າງຄວາມດີແລະຄວາມຊົ່ວ..." ພຣະເຈົ້າຊົງຕອບຄໍາອ້ອນວອນຂອງໂຊໂລໂມນ ແລະໄດ້ຊົງປະທານສະຕິປັນຍາໃຫ້. ເວລາໃດທີ່ໂຊໂລໂມນເຮັດຕາມທີ່ໄດ້ອ້ອນວອນໄວ້ທ່ານກໍມີຄວາມສໍາເຣັດ; ຄວາມຜິດພາດເກີດຂຶ້ນສເມີເວລາໂຊໂລໂມນລືມຄໍາອ້ອນວອນນີ້.

## ພາບຣວມ: ສະຕິປັນຍາຂອງການຖາມ (1:12--2:26)

ບາງເທື່ອພວກເຮົາສັງເກດໄດ້ວ່າ ການຖາມບໍ່ແມ່ນເພື່ອຈະໄດ້ຄໍາຕອບຈາກຜູ້ຟັງສເມີໄປ ແຕ່ຜູ້ຖາມມີເຈຕນາທີ່ຈະນໍາຜູ້ຟັງໄປເຖິງຄໍາຕອບທີ່ເຂົາໄດ້ຈັດຕຽມໄວ້ແລ້ວ. ພຣະທັມປັນຍາຈານ 2:2,15 ເປັນຕົວຢ່າງໃນເຣື່ອງນີ້. ໃນຂໍ້ 2 ຊຶ່ງມີຄໍາຖາມວ່າ, "ຄວາມສນຸກມີປໂຍດແນວໃດ?" ຜູ້ຂຽນມີຄວາມປະສົງທີ່ຈະບອກວ່າຄວາມສນຸກກໍບໍ່ມີຫຍັງດີ; ທ່ານໄດ້ກ່າວວ່າ "ການຫົວເລາະກໍເປັນການໂງ່ຈ້າ." ໃນຂໍ້ 15, ຜູ້ຂຽນຖາມວ່າ "ຂ້າພະເຈົ້າໄດ້ຫຍັງແດ່ ທີ່ເປັນຄົນ ມີປັນຍາທີ່ສຸດ?" ຄໍາຕອບຢູ່ໃນຂໍ້ 15-16 ກໍຄື "ທຸກສິ່ງລ້ວນແຕ່ອະນິຈັງທັງສິ້ນ... ບໍ່ມີໃຜຈື່ຈໍາຄົນມີປັນຍາ ແລະບໍ່ມີໃຜຈື່ຈໍາຄົນໂງ່ຈ້າດ້ວຍ."

ຄໍາຖາມແລະຄໍາຕອບນັ້ນເປີດເຜີຍໃຫ້ຮູ້ວ່າ ຖ້າຄວາມແນ່ນອນບໍ່ເກີດຂຶ້ນຈາກຄວາມພຍາຍາມ, ຄວາມພຍາຍາມນັ້ນກໍບໍ່ມີຄວາມໝາຍຫຍັງ. ຄຣູໄດ້ຊອກຫາຄວາມໝາຍຈາກຄວາມສນຸກ ແຕ່ຄວາມສນຸກບໍ່ໄດ້ນໍາຄວາມໝາຍມາໃຫ້. ຄຣູໄດ້ຊອກຫາຄວາມໝາຍຈາກສະຕິປັນຍາ ແຕ່ສະຕິປັນຍາກໍບໍ່ໄດ້ນໍາຊີວິດທີ່ມີຄວາມໝາຍທີ່ທ່ານໄດ້ສແວງຫາມາ ໃຫ້. ແຕ່ມີອີກທາງນຶ່ງຊຶ່ງຄຣູ (ຜູ້ຂຽນ) ໄດ້ບອກໄວ້ໃນພຣະທັມຫລາຍໆຂໍ້ ( 5:1; 8:12-13;12:1-7, 13-14). ຄຣູໄດ້ຊັກຊວນໃຫ້ເຊື່ອວາງໃຈໃນພຣະຜູ້ເປັນເຈົ້າ ເພາະພຣະອົງຜູ້ດຽວທີ່ສາມາດໃຫ້ຄວາມໝາຍໃນຊີວິດນີ້. ສະຕິປັນຍາໃນພຣະທັມໃຫ້ຄວາມເຂົ້າໃຈວິທີດໍາເນີນຊີວິດຕາມແນວທາງຂອງພຣະເຈົ້າ. ສະຕິປັນຍາບໍ່ສາມາດທົດແທນຄວາມເຊື່ອເພາະ ຄວາມເຊື່ອຊ່ວຍໃຫ້ຮູ້ວິທີທີ່ຈະເຮັດສິ່ງທີ່ພຣະເຈົ້າຊົງປະສົງໄວ້.

## ຄວາມລົ້ມເຫລວຂອງປັນຍາ (1:12-17)

ຄຣູໄດ້ເບິ່ງໂລກໃນຖານະກະສັດທີ່ຢູ່ໃນກຸງເຢຣູຊາເລັມ. ອິສຣາເອນແມ່ນຂອບເຂດຂອງພຣະອົງ. ທ່ານໄດ້ຊອກຫາສະຕິປັນຍາໂດຍການສຶກສາຄົ້ນຄວ້າ ເພາະທ່ານໄດ້ຮັບພາຣະຈາກພຣະເຈົ້າເຣື່ອງການປົກຄອງໄພ່ພົນຂອງພຣະອົງ. ທ່ານໄດ້ສລູບໃນຂໍ້ 14 ວ່າ "ສິ່ງທີ່ຄົນໄດ້ເຮັດກັນໃນໂລກນີ້ ... ລ້ວນແຕ່ອະນິຈັງທັງສິ້ນ. ເປັນດັ່ງພວມແລ່ນໄລ່ໄປຕາມລົມ." ສິ່ງທີ່ຍັງຂາດໃນຊີວິດຂອງພວກເຮົາຈະພົບຢູ່ໃນສະຕິປັນຍາຂອງພຣະເຈົ້າ.

ຄຣູໄດ້ສແວງຫາປັນຍາດ້ວຍຄວາມລໍາບາກເພື່ອຈະພົບທາງຊີວິດທີ່ດີກວ່າ; ແຕ່ພໍສລູບທຸກຢ່າງແລ້ວ, ທ່ານຍອມຮັບວ່າຕົວເອງກໍຢູ່ໃນກຸ່ມຄົນທີ່ຜິດຫວັງ. ໃນທີ່ສຸດກໍພົບວ່າປັນຍາແລະຄວາມຮູ້ແທ້ ທີ່ໄດ້ຊອກສແວງຫານັ້ນຢູ່ທີ່ພຣະຜູ້ເປັນເຈົ້າ. ຄຣູໄດ້ເວົ້າເຖິງທຸກສິ່ງທີ່ທ່ານໄດ້ສໍາເຣັດມາ (1:16-17); ຄວາມສໍາເຣັດຂອງທ່ານນັ້ນເກີນກວ່າຄົນທັງຫລາຍ; ແຕ່ເມື່ອທ່ານຮູ້ຫລາຍແລະໄດ້ຫລາຍ ທ່ານຍິ່ງຮູ້ຄວາມຜິດພາດຂອງຕົວເອງຫລາຍຂຶ້ນແລະຍັງຮູ້ວ່າບໍ່ໄດ້ມີຄວາມພໍໃຈໃນຄວາມສໍາເຣັດນັ້ນເລີຍ. ສະນັ້ນ ຄຣູຈໍາຕ້ອງສະລະທຸກສິ່ງ ກ່ອນຈະສາມາດຮັບພຣະປັນຍາ (ຟີລິບປອຍ 2:5-11).

**ຄວາມລົ້ມເຫລວຂອງຄວາມສນຸກ** (2:1-17, 22-23)

ພຣະເຈົ້າຊົງປະທານຄວາມຮູ້ສຶກຫລືສໍາຜັດທັງຫ້າໃຫ້ກັບພວກເຮົາເຊັ່ນ ເບິ່ງເຫັນ, ດົມກິ່ນ, ຊີມຣົດ,ຈັບບາຍ, ແລະຟັງສຽງ; ນອກນັ້ນພຣະອົງຊົງປະທານສະຕິຝ່າຍວິນຍານ ເພື່ອພວກເຮົາຈະສາມາດຊົມຊື່ນຍິນດີ, ເຂົ້າໃຈ, ແລະມີປະສົບການກັບໂລກທີ່ພຣະອົງໄດ້ຊົງສ້າງໄວ້. ຫລາຍຄົນໄດ້ໃຊ້ສະຕິເຫລົ່ານັ້ນໄປໃນທາງຜິດ. ໃນຖານະຂອງກະສັດ, ຄຣູກໍໄດ້ໃຊ້ສະຕິຂອງທ່ານເພື່ອຫາຄວາມສນຸກສໍາລັບຕົວເອງ.

ປັນຍາຈານ 2:4-9 ບັລຍາຍເຖິງສິ່ງຕ່າງໆທີ່ຄຣູໄດ້ເຮັດບໍ່ວ່າຈະເປັນການສະສົມສິ່ງຂອງຫລືຄົນເພື່ອຈະນໍາຄວາມສຸກມາໃຫ້ຕົວເອງ. ຄຣູໄດ້ພູມໃຈໃນຄວາມສໍາເຣັດຂອງທ່ານ; ກະສັດທົ່ວໂລກກໍອິດສາຄວາມຍິ່ງໃຫຍ່ຂອງຄຣູ; ແຕ່ພໍພິຈາຣະນາເບິ່ງແລ້ວ ທ່ານກໍໄດ້ເຫັນຢ່າງແຈ່ມແຈ້ງວ່າ "ສິ່ງນັ້ນບໍ່ມີຄວາມໝາຍຫຍັງເລີຍ" (2:11). ແມ່ນຫຍັງຄືອຸປສັກເຮັດໃຫ້ຄຣູບໍ່ມີຄວາມອີ່ມເຕັມ? ນັກປະພັນຄົນນຶ່ງໄດ້ຂຽນໄວ້ວ່າ "ເພາະການໄດ້ແລະການຈັບຈ່າຍ, ພວກເຮົາຈຶ່ງສິ້ນເປືອງກໍາລັງຂອງຕົວເອງ." ຄວາມສນຸກທີ່ແທ້ແລະຊີວິດທີ່ມີຄວາມໝາຍຈະມີຂຶ້ນໄດ້ເມື່ອພວກເຮົາເຊື່ອໃນພຣະເຈົ້າແລະໃຊ້ກໍາລັງທີ່ພຣະອົງຊົງປະທານໃຫ້ເພື່ອຮັບໃຊ້ມະນຸດຈາກວັດຖຸທີ່ມາຈາກພຣະອົງ.

**ສ້າງສະພານສໍາລັບຊ່ອງວ່າງ**

ພວກເຮົາແຕ່ລະຄົນມີຊ່ອງວ່າງທີ່ເຮັດໃຫ້ເຮົາອິດເມື່ອຍ ແລະເຮັດໃຫ້ເຮົາກະວົນກະວາຍ; ຄວາມເຕີບໃຫຍ່ຂອງພວກເຮົາຈະຂຶ້ນຢູ່ກັບການສ້າງສະພານ ຈາກ...

(1) ຊ່ອງວ່າງຣະຫວ່າງບ່ອນທີ່ພວກເຮົາຢູ່ ແລະບ່ອນທີ່ພວກເຮົາຈະຕ້ອງໄປ
(2) ຊ່ອງວ່າງຣະຫວ່າງຄວາມສາມາດເປັນໄດ້ ແລະສິ່ງທີ່ພວກເຮົາໄດ້ສໍາເຣັດແລ້ວ
(3) ຊ່ອງວ່າງຣະຫວ່າງສິ່ງທີ່ພຣະເຈົ້າຊົງປະສົງ ແລະສິ່ງທີ່ພວກເຮົາປາຖນາ
(4) ຊ່ອງວ່າງຣະຫວ່າງຣາຊອານາຈັກພຣະເຈົ້າ ແລະສະພາບຂອງໂລກໃນປັດຈຸບັນ
(5) ຊ່ອງວ່າງຣະຫວ່າງຄວາມສາມາດຂອງມະນຸດ ແລະພຣະຄໍາຂອງພຣະເຈົ້າເຣື່ອງຊີວິດນິຣັນ

ຄວາມສໍາເຣັດທີ່ຜ່ານມາໃຫ້ຄວາມໝັ້ນໃຈສໍາລັບອະນາຄົດ; ພວກເຮົາສະບາຍໃຈເພາະພວກເຮົາຮູ້ວ່າຕົວເອງຢູ່ໃສ ແຕ່ພວກເຮົາກະວົນກະວາຍເພາະບໍ່ຮູ້ອະນາຄົດ; ພວກເຮົາມີຄວາມຫວັງໃນຊີວິດທີ່ດີກວ່ານີ້ ແຕ່ພວກເຮົາຢ້ານຄວາມຜິດພາດຊຶ່ງອາດຈະຢູ່ຂ້າງໜ້າ. ທຸກຄົນກ້າວໄປເພາະຄວາມຢາກ. ບຸກຄົນທີ່ສາມາດກ້າວຕໍ່ໄປຈາກຈຸດ ກ (ບ່ອນທີ່ເຮົາກໍາລັງຢູ່ ) ໄປເຖິງຈຸດ ຂ (ບ່ອນທີ່ເຮົາຈະຕ້ອງໄປ) ກໍບໍ່ແມ່ນຄົນທີ່ວິເສດກວ່າຄົນອື່ນໆ; ແຕ່ເປັນຄົນທີ່ເຊື່ອວາງໃຈໃນພຣະເຈົ້າ ແລ້ວລົງມືທໍາຕາມ. ພວກເຮົາຈະສໍາເຣັດໃນສິ່ງທີ່ມຸ້ງຫວັງ ເວລາພວກເຮົາເຊື່ອພຣະເຈົ້າ ແລະເຊື່ອຕົວເອງ ແລ້ວໃຊ້ສະຕິປັນຍາທີ່ພຣະອົງໄດ້ຊົງໃສ່ໄວ້ໃນພວກເຮົາແຕ່ລະຄົນ.

**ຄໍາຖາມ:**

1. ເວລາໃດເປັນເວລາທີ່ທ່ານຮູ້ວ່າໄດ້ກ້າວໄປເຖິງຈຸດຈົບໃນຄວາມສາມາດຂອງຕົວເອງ? ທ່ານມີຄວາມຮູ້ສຶກຢ່າງໃດ ໃນຕອນນັ້ນ?
2. ທ່ານໄດ້ຮັບສະຕິປັນຍາແນວໃດແດ່ຈາກຄວາມຜິດພາດ?
3. ຄຣູ (ໂຊໂລໂມນ) ໄດ້ສແວງຫາຄວາມດີໂດຍຄວາມຄິດແລະວິທີຂອງຕົວເອງ. ມີຫຍັງແດ່ທີ່ຜິດ?
4. ຄຣູໄດ້ມາເຖິງຈຸດທີ່ຕ້ອງຖາມຄໍາຖາມອັນເຈັບປວດຄື: ຂ້າພະເຈົ້າຈະມີຊີວິດຢູ່ຕໍ່ໄປໄດ້ແນວໃດ ໃນເມື່ອທຸກຢ່າງບໍ່ມີປໂຍດຫຍັງເລີຍ? ມີປະສົບການແນວໃດແດ່ທີ່ໄດ້ນໍາເພິ່ນໃຫ້ມາເຖິງຈຸດທີ່ເຈັບປວດນີ້?

*ດຣ. ສີດນີ ຄານ*

## ບົດຮຽນບົດທີ 9
## ສູ່ຊີວິດທີ່ມີຄວາມໝາຍຫລາຍຂຶ້ນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປັນຍາຈານ 9:7-10; 12:1-8, 13-14
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ປັນຍາຈານ 9; 12
**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາສາມາດກ້າວໄປສູ່ຊີວິດທີ່ມີຄວາມໝາຍຫລາຍຂຶ້ນໂດຍການຍິນດີໃນພຣະພອນຊຶ່ງເປັນສັພສິ່ງຂອງທີ່ພຣະເຈົ້າຊົງປະທານ ແລະໂດຍການຮັບໃຊ້ພຣະອົງຢ່າງຊື່ສັດ.
**ຄຳຖາມເພື່ອການສຳຣວດ:** ພຣະເຈົ້າຊົງປະສົງໃຫ້ພວກເຮົາມີຄວາມຍິນດີໃນຊີວິດຫລາຍປານໃດ? ໂດຍວິທີໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮູ້ວ່າມີຫຍັງແດ່ທີ່ຂ້າພະເຈົ້າສາມາດເຮັດໄດ້ເພື່ອຈະເພີ່ມຄວາມໝາຍໃນຊີວິດ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ສົ່ງເສີມການສ້າງຄອບຄົວໃຫ້ສົມບູນ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຜູ້ມີຄວາມຕ້ອງການດ້ານວັດຖຸ, ຈິດວິນຍານ, ແລະຄວາມຮູ້ສຶກ.

### ຄຳນຳ

ຈົ່ງດຳເນີນຊີວິດໃຫ້ດີທີ່ສຸດເວລາຢູ່ໃນໂລກນີ້ ເພາະວ່າຄວາມຕາຍກຳລັງຈະມາເຖິງ (ປັນຍາຈານ 9:10). ຈົ່ງດຳເນີນຊີວິດຂອງທ່ານໂດຍການຮັກພຣະເຈົ້າ, ຍິນດີກັບສິ່ງທີ່ພຣະເຈົ້າຊົງສ້າງ, ແລະຮັບໃຊ້ຄົນອື່ນໆໂດຍການຖືຮັກສາພຣະບັນຍັດຂອງພຣະເຈົ້າ.

ທຸກສິ່ງທີ່ດີມາຈາກພຣະເຈົ້າ ແລະຂອງຂວັນອັນລ້ຳຄ່າຂອງພຣະອົງສຳລັບພວກເຮົາທຸກຄົນຄືຄວາມສຳພັນຣະຫວ່າງພວກເຮົາກັບພຣະອົງ, ກັບຄົນອື່ນ, ແລະກັບພວກເຮົາເອງ. ພວກເຮົາສາມາດມີສ່ວນໃນຂອງຂວັນເຫລົ່ານີ້ໂດຍການຮັບ ຂອງປະທານເຣື່ອງຄວາມລອດພົ້ນຈາກພຣະອົງ. ຄຣູໃນພຣະທັມປັນຍາຈານເຕືອນພວກເຮົາເຖິງຊີວິດທີ່ເປົ່າວ່າງແລະ ຊີວິດທີ່ບໍ່ມີຄວາມໝາຍຊຶ່ງກຳລັງລໍຄອຍພວກເຮົາ ຖ້າພວກເຮົາຍັງປາຖນາທີ່ຈະດຳເນີນຊີວິດຕາມວິທີທາງແລະກຳ ລັງຄວາມສາມາດຂອງພວກເຮົາເອງ.

### ການແຂ່ງຂັນບໍ່ແມ່ນຈະວ່ອງໄວສເມີໄປ (9:7-12)

ຈາກການສັງເກດຊີວິດມະນຸດ, ຄຣູໄດ້ຊີ້ໃຫ້ເຫັນສິ່ງທີ່ເຮັດໃຫ້ຄົນໄດ້ຮັບຊັຍຊະນະຫລືປຣາຊັຍໃນຊີວິດ. ຄຣູໄດ້ສລູບວ່າ "ນັກແລ່ນໄວບໍ່ແມ່ນຈະໄດ້ຊະນະການແຂ່ງຂັນສເມີໄປ" (ຂໍ້ 11). ແຕ່ຄວາມກົດດັນຣະຫວ່າງຈຸດທີ່ຄວນຈະເຖິງບໍ່ແມ່ນແຮງຜັກດັນທີ່ຄຣູກຳລັງເວົ້າຢູ່. ຈຸດສຳຄັນຄື: ຄວາມສຳເຣັດຕາມຣະບົບຂອງພຣະເຈົ້າບໍ່ໄດ້ຢູ່ທີ່ລັກສະນະຂອງມະນຸດເຊັ່ນ ຄວາມວ່ອງໄວ, ກຳລັງ, ຄວາມສລາດ, ຫລືຊັບສົມບັດ. ພຣະເຢຊູຊົງເວົ້າໃນຕອນນີ້ງວ່າ ເໝືອນດັ່ງສາຍຝົນຈະຕົກໃສ່ຄົນຊອບທັມແລະຄົນອະທັມ (ມັດທາຍ 5:45). ຄວາມຜ່າຍແພ້ຈະມາເຖິງທຸກຄົນ.

ຄວາມສຳເຣັດຕາມລະບົບຂອງພຣະເຈົ້າຄືການເປັນຜູ້ທີ່ພຣະເຈົ້າຊົງສ້າງໃຫ້ເປັນ ໂດຍເຮັດທຸກຢ່າງທີ່ພຣະເຈົ້າຊົງມີແຜນໃຫ້ເຮັດ. ເວລາພົບກັບວິຖີຊີວິດທີ່ພວກເຮົາບໍ່ໄດ້ຄາດຝັນໄວ້ ເໝືອນດັ່ງປາຖືກມອງ ຫລືນົກຖືກແຮ້ວ (9:12) ພວກເຮົາສາມາດໝັ້ນໃຈໄດ້ວ່າ ພຣະເຈົ້າຈະຊົງເປີດຫົນທາງສູ່ເສຣີພາບໃຫ້. ພຣະເຈົ້າຈະພາເຮົາໃຫ້ຊະນະຄວາມລຳບາກຂອງຊີວິດສເມີໄປ. ພຣະທັມຂໍ້ 7-9 ເຕືອນພວກເຮົາໃຫ້ຊົມຊື່ນຍິນດີກັບສິ່ງທີ່ພຣະເຈົ້າໄດ້ຊົງສ້າງໄວ້ ເພື່ອຊີວິດນີ້ຈະມີຄວາມໝາຍ. ການຊົມຊື່ນຍິນດີກັບສິ່ງທີ່ພຣະເຈົ້າຊົງປະທານຈະໃຫ້ກຳລັງສຳລັບຊີວິດ (2:24-25; 3:12-13, 22; 5:18-20;8:15).

ຈົ່ງເຮັດໃຫ້ໃຈເບີກບານແລະມີຄວາມສຸກຢູ່ສເມີ (9:8). ຈົ່ງໃຫ້ຊີວິດຂອງທ່ານສນຸກຢູ່ກັບຍິງທີ່ທ່ານຮັກ ຊຶ່ງໝາຍເຖິງພັລຍາ (9:9). ເວລາການທົດລອງເກີດຂຶ້ນຈົ່ງເບິ່ງວ່າສິ່ງນັ້ນບໍ່ມີຄວາມໝາຍຫຍັງ. ຄວາມໝາຍເກີດມາຈາກຄວາມສຳພັນອັນແທ້ຈິງຄືຄວາມສຳພັນຂອງສາມີພັລຍາ. ຈົ່ງເຮັດໃຫ້ຄວາມຮັກຂອງທ່ານມີຊີວິດຊີວາ. ສ້າງຄວາມສນິດກັບຄູ່ຄອງຂອງທ່ານ ແລະຄວາມສນິດກັບພຣະເຈົ້າ.

## <u>ຈົ່ງລະນຶກເຖິງພຣະຜູ້ສ້າງຂອງເຈົ້າເມື່ອເຈົ້າຍັງໜຸ່ມ (12:1-8)</u>

ການສ້າງທີ່ລະລຶກເປັນໂອກາດ ແລະເປັນຄວາມຮັບຜິດຊອບອັນສັກສິດໃນພຣະສັນຍາເດີມ. ຢາໂຄບສ້າງແທ່ນລະນຶກຢູ່ບ່ອນທີ່ທ່ານໄດ້ມີປະສົບການກັບພຣະເຈົ້າ (ປະຖົມການ 28 ແລະ 35) . ໂຢຊວຍສັ່ງປະຊາຊົນໃຫ້ນຳກ້ອນຫີນຈາກແມ່ນ້ຳຢໍແດນໄປວາງໄວ້ຄ້າຍເພື່ອເປັນອະນຸສອນເຖິງສິ່ງທີ່ພຣະຜູ້ເປັນເຈົ້າໄດ້ກະທຳ (ໂຢຊວຍ 3--4). ຜູ້ປະກາດພຣະທັມໃນແຕ່ລະສມັຍໄດ້ສ້າງສິ່ງຕ່າງໆໄວ້ເພື່ອເປັນອະນຸສອນ. ສະນັ້ນຄຣູຈຶ່ງຂຽນວ່າ "ຈົ່ງລະນຶກເຖິງພຣະຜູ້ສ້າງຂອງເຈົ້າໃນເມື່ອເຈົ້າຍັງໜຸ່ມຢູ່ກ່ອນນີ້ແລະປີທີ່ມືດມົວມາເຖິງ" (12:1).

ການລະນຶກເຖິງສິ່ງທີ່ພຣະເຈົ້າໄດ້ກະທຳໃນໂອກາດຜ່ານມາ ຈະຊ່ວຍຜູ້ນະມັສການພຣະເຈົ້າໃຫ້ໄດ້ຮັບກຳລັງ ເພື່ອຈະຍອມໃຫ້ພຣະຄຸນພຣະເຈົ້າໄດ້ທຳງານໃນສະຖານະການປັດຈຸບັນ. ອະນຸສອນນຳເຮົາໄປເຖິງເວລາແຫ່ງພຣະສັນຍາຂອງພຣະເຈົ້າ. ພຣະສັນຍາມີໃໝ່ສເມີ ຖ້າພວກເຮົາມອບຕົວໃຫ້ກັບພຣະປະສົງຂອງພຣະເຈົ້າ ແລະເຊື່ອວາງໃຈໃນຣິດອຳນາດຂອງພຣະອົງຊຶ່ງເກີນຄວາມຄິດ ແລະຄວາມເຂົ້າໃຈຂອງພວກເຮົາ. ການບໍ່ຈົດຈຳພຣະຜູ້ສ້າງໃນເມື່ອຍັງໜຸ່ມຈະນຳຄວາມເສັຽໃຈມາສູ່ຊີວິດ ເພາະພວກເຮົາບໍ່ໄດ້ເຮັດໃນສິ່ງທີ່ຄວນເຮັດ; ພວກເຮົາບໍ່ໄດ້ເປັນບຸກຄົນທີ່ຄວນຈະເປັນແຕ່ໄດ້ເປັນຄົນທີ່ມີລຳດັບຕ່ຳກວ່າ.

ຄຣູໄດ້ເຕືອນບໍ່ໃຫ້ພວກເຮົາສ້າງປະວັດສາດຢ່າງນັ້ນໄວ້. ພວກເຮົາສາມາດເລືອກສິ່ງທີ່ດີກວ່າ ຖ້າພວກເຮົາພຍາຍາມຫລີກເວັ້ນຊີວິດທີ່ "ບໍ່ມີຄວາມໝາຍ" ນັ້ນ (12:2; 12:8). ພວກເຮົາສາມາດດຳເນີນຊີວິດທີ່ມີຄວາມໝາຍ ຖ້າພວກເຮົາຮັກພຣະເຈົ້າ, ເຊື່ອໃນພຣະສັນຍາ, ແລະດຳເນີນຊີວິດໃນທາງຂອງພຣະອົງ. ຫລາຍຄົນຢາກດຳເນີນຊີວິດທີ່ມີຄວາມໝາຍ, ແຕ່ຫລາຍຄົນບໍ່ໄດ້ໃຊ້ສະຕິປັນຍາທີ່ມາຈາກພຣະເຈົ້າ. ພຣະເຢຊູຊົງໃຫ້ຂໍ້ສັງເກດວ່າ, "ປະຕູກໍກວ້າງແລະທາງ

ກໍກວ້າງຂວາງທີ່ນຳໄປເຖິງຄວາມຈິບຫາຍນັ້ນ ມີຫລາຍຄົນເຂົ້າໄປຕາມທາງນັ້ນ. ເພາະວ່າປະຕູທີ່ນຳໄປສູ່ຊີວິດກໍຄັບ ແລະທາງກໍຄັບ ບໍ່ມີຫລາຍຄົນພົບທາງນັ້ນ" (ມັດທາຍ 7:13-13). ພວກເຮົາຫລາຍຄົນໄດ້ເລືອກທາງກວ້າງ ແຕ່ໃນທີ່ສຸດກໍຕ້ອງຍອມຮັບວ່າ "ຂ້ອຍບໍ່ໄດ້ສນຸກເລີຍໃນຊີວິດນີ້" (12:1).

ໃນພຣະທັມ 12:2-5, ຄຣູໄດ້ບອກເຖິງຊີວິດທີ່ບໍ່ມີພຣະເຈົ້າ; ພວກເຮົາມີຕາ ແຕ່ບໍ່ສາມາດເຫັນ, ແລະພວກເຮົາມີຫູ ແຕ່ບໍ່ສາມາດໄດ້ຍິນ. ພວກເຮົາຢາກເຮັດ ແຕ່ເຮັດບໍ່ໄດ້, ແລະພວກເຮົາຢາກໄປ ແຕ່ໄປບໍ່ໄດ້. ພຣະເຈົ້າສ້າງທຸກຢ່າງຂຶ້ນມາເພື່ອໃຫ້ມະນຸດໄດ້ຊື່ນຊົມຍິນດີ ແຕ່ມະນຸດເລືອກທາງຂອງຕົວເອງຈຶ່ງບໍ່ສາມາດສຳພັດກັບສິ່ງທີ່ຢູ່ອ້ອມຮອບຕົວເອງໄດ້.

ມະນຸດແຕ່ລະຄົນເຕີບໃຫຍ່ເປັນຂັ້ນໆໄປ: (1) ວັດຖຸ (ສິ່ງທີ່ເຫັນ ແລະຈັບບາຍໄດ້), (2) ປະສົບການ (ສິ່ງທີ່ເຮັດໄດ້ ບັງຄັບໄດ້), (3) ສະຕິປັນຍາ (ສິ່ງທີ່ສາມາດຄິດ ສັງເກດໄດ້), ແລະ (4) ຄວາມພໍໃຈຝ່າຍຈິດວິນຍານ (ສິ່ງທີ່ປະສົບຈາກຂອງພຣະຣາຊທານເຣື່ອງຄວາມລອດພົ້ນ). ເວລາພວກເຮົາຍອມໃຫ້ພຣະເຈົ້າຫລໍ່ຫລອມເຮົາ, ຊີວິດແຕ່ລະຂັ້ນຕອນແມ່ນ ການຕຽມຕົວເພື່ອລຳດັບຕໍ່ໄປ ແລະແຕ່ລະຂັ້ນມີຄວາມສຳຄັນ ແລະຂາດບໍ່ໄດ້. ຄຣູເຕືອນໃຫ້ທຸກຄົນຈົດຈຳສິ່ງນີ້ກ່ອນທີ່ຈະສາຍເກີນໄປ; ຈົ່ງຮຽນຮູ້ກ່ອນທຸກຢ່າງຈະໝົດສິ້ນໄປ, "ສາຍສ້ອຍເງິນແຫ່ງຊີວິດຈະຂາດ ແລະຕະກຽງຄຳກໍຈະຕົກແລະຫັກ..." (12:6). ທຸກຢ່າງໃນໂລກຈະໝົດສິ້ນໄປຕາມຣະດູການຂອງມັນ.

"ຈົ່ງລະນຶກ" ໃນທີ່ນີ້ເຕືອນພວກເຮົາໃຫ້ຮູ້ຈັກບັງຄັບຕົວເອງ; ຈົ່ງເຮັດໃນສິ່ງທີ່ຄວນເຮັດ ແລະໃນເວລາທີ່ຈະຕ້ອງເຮັດ. ຄວາມຕາຍລໍຄອຍທຸກຄົນຢູ່. "ຮ່າງກາຍຂອງພວກເຮົາຈະກັບເປັນຂີ້ຝຸ່ນດິນອີກ ແລະລົມຫາຍໃຈຂອງພວກເຮົາຈະກັບຄືນໄປຫາພຣະເຈົ້າ ຜູ້ທີ່ໃຫ້ລົມຫາຍໃຈແກ່ມະນຸດທຸກຄົນ" (12:7). ສນັ້ນຈົ່ງລະນຶກເຖິງພຣະຜູ້ສ້າງ ໂດຍເຮັດໃນສິ່ງທີ່ສຳຄັນສຳລັບພຣະອົງ ແລ້ວພວກເຮົາຈະໄດ້ດຳເນີນຊີວິດທີ່ມີຄວາມໝາຍ. ຄວາມຫລອກລວງຂອງໂລກຈະໝົດສິ້ນໄປເພາະປັນຍາທີ່ມາຈາກຄວາມເຊື່ອໃນພຣະຜູ້ເປັນເຈົ້າ.

<u>**ໜ້າທີ່ທັງໝົດຂອງບຸກຄົນ**</u> (12:13-14)

ຄຣູໄດ້ສລຸບຄຳສັ່ງສອນໄວ້ໃນພຣະທັມສອງຂໍ້ນີ້. ຄຣູໄດ້ກ່າວວ່າ, "ໃນທີ່ສຸດນີ້ ຍັງມີພຽງສິ່ງດຽວທີ່ຈະເວົ້າ: ຈົ່ງຢຳເກງພຣະເຈົ້າ ແລະເຮັດຕາມຄຳສັ່ງຂອງພຣະອົງ..." (12:13). ການຢຳເກງພຣະເຈົ້າໝາຍເຖິງການຮັກ, ການນະມັສການ, ແລະການໂຄຣົບພຣະອົງ.

ສະຕິປັນຍາທີ່ແທ້ຈິງເກີດຈາກການຍອມໃຫ້ພຣະເຈົ້າ ເປັນພຣະເຈົ້າໃນຊີວິດຂອງພວກເຮົາ; ພວກເຮົາຮັກສາພຣະບັນຍັດເພາະພວກເຮົາເຊື່ອວາງໃຈໃນພຣະອົງ. ພວກເຮົາຢາກເຮັດໃນສິ່ງທີ່ດີເພາະພວກເຮົາຕ້ອງການແບ່ງປັນຄວາມດີຂອງພຣະເຈົ້າໃຫ້ກັບຄົນອື່ນໆ.

ພຣະທັມຂໍ້ 14 ບອກເຖິງການພິພາກສາທີ່ຈະມາເຖິງມະນຸດທຸກຄົນ. ພຣະເຈົ້າຊົງຮູ້ທຸກຢ່າງໃນຊີວິດຂອງພວກເຮົາ ບໍ່ວ່າຈະເປັນເຣື່ອງລັບລີ້ ຫລືເຣື່ອງເປີດແປນ. ພຣະເຈົ້າຈະຊົງເປັນຜູ້ຕັດສິນວຽກງານເຫລົ່ານັ້ນ; ໜ້າທີ່ທັງໝົດຂອງບຸກຄົນຄື "ຢຳເກງພຣະເຈົ້າ ແລະເຮັດຕາມຄຳສັ່ງຂອງພຣະອົງ." ທຸກຢ່າງນອກຈາກນີ້ ບໍ່ມີຄວາມໝາຍຫຍັງ.

<u>**ຄຳຖາມ**</u>:

1. ທ່ານຄິດວ່າຄຣູເປັນຄົນຜູ້ຫລິງເຫັນແຕ່ໃນແງ່ດີ, ຜູ້ມອງເຫັນແຕ່ໃນແງ່ຮ້າຍ, ຫລືຜູ້ເຫັນຕາມຄວາມເປັນຈິງໃນການເບິ່ງຊີວິດຂອງທ່ານ? ເປັນຫຍັງທ່ານຈຶ່ງຄິດຢ່າງນັ້ນ?

2. ມີວິທີໃດແດ່ທີ່ພວກເຮົາຈະຊື່ນຊົມຍິນດີໃນພຣະພອນເຣື່ອງວັດຖຸຕ່າງ ໆໃນຊີວິດ ໂດຍບໍ່ຄິດວ່ານັ້ນຄືຊີວິດ?

3. ທ່ານສາມາດເຮັດຫຍັງໄດ້ແດ່ໃນຂັ້ນນີ້ຂອງຊີວິດ ເພື່ອ "ລະນຶກເຖິງພຣະຜູ້ສ້າງຂອງທ່ານ" (12:1)?

4. ພວກເຮົາຄວນຫລີກເວັ້ນຈາກການເວົ້າເຖິງຄວາມຕາຍບໍ່ ຫລືວ່າຄວນເວົ້າເພາະເປັນສິ່ງສຳຄັນໃນການເບິ່ງຊີວິດ?

5. ພວກເຮົາຈະເຂົ້າໃຈຄຳສັ່ງສອນທີ່ວ່າ "ຈົ່ງຢຳເກງພຣະເຈົ້າ ແລະເຮັດຕາມຄຳສັ່ງຂອງພຣະອົງ" ໄດ້ວິທີໃດ, ຖ້າຈະປຽບທຽບໃສ່ຄຳສອນໃນພຣະສັນຍາໃໝ່ຊຶ່ງໃຫ້ມີຄວາມເຊື່ອໃນພຣະຄຣິດ?

*ດຣ. ສິດນີ ຄານ*

## ບົດຮຽນບົດທີ 10
## ອີກດົນປານໃດ, ພຣະຜູ້ເປັນເຈົ້າ?

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ຮາບາກຸກ 1:1--2: 4, 15-15

**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ຮາບາກຸກ 1--2

**ຈຸດສໍາຄັນຂອງບົດຮຽນນີ້:** ພຣະເຈົ້າຈະຊົງນໍາຄວາມທ່ຽງທັມມາສູ່ໂລກຂອງພວກເຮົາ, ເຖິງວ່າວິທີແລະວັນເວລານັ້ນຈະບໍ່ເປັນໄປຕາມກໍາໜົດແລະຄວາມຕ້ອງການຂອງພວກເຮົາ.

**ຄໍາຖາມເພື່ອການສໍາຣວດ:** ພວກເຮົາຈະເຊື່ອພຣະເຈົ້າໄດ້ບໍ່ວ່າພຣະອົງຈະຊົງນໍາຄວາມທ່ຽງທັມມາສູ່ໂລກຂອງເຮົາ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສລູບເບິ່ງຄໍາສົນທະນາຣະຫວ່າງຜູ້ປະກາດພຣະທັມແລະພຣະຜູ້ເປັນເຈົ້າເຣື່ອງພຣະອົງຈະນໍາຄວາມທ່ຽງທັມມາສູ່ໂລກ ແລະຄວາມໝາຍຂອງເຣື່ອງນີ້ສໍາລັບພວກເຮົາໃນສມັຍນີ້.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

### ຄໍານໍາ

ພວກເຮົາແນ່ໃຈວ່າ ວັນນຶ່ງພຣະເຈົ້າຈະນໍາຄວາມທ່ຽງທັມມາສູ່ໂລກ, ແຕ່ພວກເຮົາຈະຕ້ອງມີຄວາມອົດທົນ. ບາງເທື່ອທຸກຄົນອາດຈະເຄີຍໄດ້ຍິນຄໍາຖາມເຫລົ່ານີ້: ປານໃດຈະຮອດເວລາກິນເຂົ້າ? ປານໃດຈະຮອດບ້ານ? ຈະໃຊ້ເວລາຫລາຍປານໃດ? ປານໃດຣົດຈະເຊົາຕິດ? ພວກເຮົາອາດຈະໃຊ້ຄໍາຖາມພວກນີ້ຢູ່ສເມີ. ຄໍາຖາມຂອງພວກເຮົາເກີດມາຈາກຄວາມບໍ່ອົດທົນ ຫລືຄວາມບໍ່ສະດວກ, ແຕ່ຄໍາຖາມຂອງຮາບາກຸກເກີດມາຈາກການຄໍ່າຄວນ, "ໂອພຣະຜູ້ເປັນເຈົ້າເອີຍ ຂ້າພະອົງຈະຕ້ອງຮ້ອງຂໍໃຫ້ພຣະອົງຊ່ອຍເຫລືອດົນປານໃດ ກ່ອນພຣະອົງຈະສະດັບຮັບຟັງຂ້າພຣະອົງ?" (ຮບກ 1:2). ຄໍາຖາມນີ້ແມ່ນອອກມາຈາກໃຈຂອງບຸກຄົນທີ່ຢູ່ໃນຄວາມທຸກທໍຣະມານ.

### ການຮ້ອງທຸກເທື່ອທີນຶ່ງຂອງຮາບາກຸກ (1:2-4)

ໃນຖານະຂອງຜູ້ປະກາດພຣະທັມ, ຮາບາກຸກຄຸ້ນເຄີຍກັບການລໍຄອຍພຣະເຈົ້າ. ຜູ້ປະກາດພຣະທັມລໍຄອຍຂ່າວສານຈາກພຣະເຈົ້າ; ແລ້ວພວກເຂົາຈະນໍາຂ່າວໄປໃຫ້ປະຊາຊົນ ແລ້ວຄອຍເບິ່ງເຫດການທີ່ຈະເກີດຂຶ້ນ. ສະນັ້ນການລໍຄອຍຖ້າຈຶ່ງເປັນອຸປນິສັຍຂອງພວກຜູ້ປະກາດພຣະທັມ.

ການລໍຄອຍເປັນວິນັຍທີ່ຮຽນຍາກພໍສົມຄວນ. ຊາຣາຍລໍຄອຍພຣະສັນຍາຂອງພຣະເຈົ້າເຣື່ອງລູກຊາຍ; ເມື່ອອົດທົນບໍ່ໄຫວນາງຈຶ່ງໃຊ້ວິທີຂອງຕົນເອງເພື່ອຈະໄດ້ລູກຊາຍ; ຜົນຮັບກໍຄືບັນຫາທີ່ໜ້າເສົ້າໃຈ (ປະຖົມການ 16:1-6). ກະສັດ

ຊາອູນໝົດຄວາມອົດທົນເພາະຜູ້ປະກາດພຣະທັມຊາມູເອນມາເຖິງຊ້າເກີນກໍາໜົດ ແລະທ່ານເກີດໂມໂຫກັບພຣະເຈົ້າຈຶ່ງທໍາພິທີຖວາຍເຄື່ອງບູຊາເອງ (1 ຊາມູເອັນ 13:7-14). ຜົນຮັບອອກມາກໍຄືກະສັດໂຊນເສັຽບັນລັງ.

ການລໍຄອຍເປັນພາກສ່ວນສໍາຄັນໃນຊີວິດຂອງຜູ້ທີ່ເຊື່ອພຣະເຈົ້າ. ການລໍຄອຍສອນພວກເຮົາໃຫ້ເພິ່ງພຣະເຈົ້າ. ການລໍຄອຍແມ່ນການເຊື່ອວ່າພຣະເຈົ້າຊົງຄວບຄຸມທຸກຢ່າງ ແລະເວລາກໍເປັນຂອງພຣະອົງ. ການລໍຄອຍເປັນການສະແດງວ່າພວກເຮົາເຊື່ອວ່າພຣະເຈົ້າຊົງຮູ້ທຸກຢ່າງ, ພຣະອົງຊົງສັດຊື່, ແລະພຣະອົງຊົງຮັກເຮົາ.

ໃນຕອນນີ້ ພວກເຮົາຮູ້ວ່າ ຮາບາກຸກໄດ້ລໍຄອຍຢູ່ຢ່າງງຽບໆ ໃນຂະນະທີ່ປະຊາຊົນຢູດາໄດ້ພາກັນຫັນຫລັງໃຫ້ກັບພຣະເຈົ້າ ແຕ່ພຣະອົງບໍ່ໄດ້ຊົງເຮັດຫຍັງເລີຍ. ຮາບາກຸກບໍ່ໄດ້ຂໍການແກ້ແຄ້ນ ແຕ່ໄດ້ຂໍຄວາມຍຸດຕິທັມ. ທ່ານພຍາຍາມບໍ່ຈົ່ມບໍ່ວ່າເທົ່າທີ່ສາມາດເຮັດໄດ້, "ການທໍາລາຍແລະການທາລຸນອ້ອມຮອບຂ້າພະອົງຢູ່... ກົດໝາຍຂາດຄວາມສັກສິດ. ຄວາມຍຸດຕິທັມບໍ່ມີເລີຍ..."(1:3-4). ຜູ້ປະກາດພຣະທັມເຫລືອໃຈແລະເສົ້າໃຈເມື່ອເບິ່ງທຸກຢ່າງທີ່ກໍາລັງເກີດຂຶ້ນ. ທ່ານຢ້ານວ່າສະຖານະການຈະຮ້າຍແຮງຂຶ້ນຖ້າພຣະເຈົ້າບໍ່ເຮັດແນວໃດແນວນຶ່ງ. ໄພ່ພົນຂອງພຣະເຈົ້າບໍ່ນັບຖືພຣະບັນຍັດຂອງພຣະອົງ ແລະພຣະບັນຍັດໄດ້ກາຍເປັນເຣື່ອງບໍ່ມີຄວາມໝາຍຫຍັງໃນຊີວິດຂອງພວກເຂົາ.

ຕາມປະເພນີຂອງຊາວເຮັບເຣີ, ບັນຍັດທັງໝົດມາຈາກພຣະເຈົ້າ. ພວກເຂົາເຊື່ອວ່າພຣະເຈົ້າໄດ້ຊົງປະທານບັນຍັດທີ່ຢູ່ໃນພຣະທັມປະຖົມການຈົນເຖິງພຣະບັນຍັດທີສອງ ເພື່ອຊ່ວຍໄພ່ພົນຂອງພຣະອົງໃຫ້ເຂົ້າໃຈຄວາມສໍາພັນຣະຫວ່າງພວກເຂົາແລະພຣະເຈົ້າ ແລະຣະຫວ່າງພວກເຂົາເອງ. ກົດບັນຍັດກ່ຽວກັບການປະພຶດແລະການນັບຖືເປັນພື້ນຖານສໍາລັບຊີວິດຂອງພວກເຂົາ. ແຕ່ມາບັດນີ້ ກົດບັນຍັດແລະຄໍາສັ່ງສອນຂອງພຣະເຈົ້າບໍ່ໄດ້ເປັນສິ່ງທັກທ້ວງການປະພຶດອັນຊົ່ວຊ້າຂອງພວກເຂົາ. ຄົນສັດຊື່ໄດ້ຮັບເຄາະກັມເພາະກົດໝາຍຂາດຄວາມສັກສິດ.

**<u>ຄໍາຕອບຂອງພຣະເຈົ້າ</u>** <u>(1:5-11)</u>
ສະຖານະການທີ່ລໍາບາກຂອງຜູ້ປະກາດພຣະທັມແລະຂອງປະຊາຊົນບໍ່ແມ່ນເຣື່ອງທີ່ບໍ່ມີໃຜຮູ້. ພຣະເຈົ້າຊົງມີແຜນການຊຶ່ງເກີນຄວາມຄິດຂອງຜູ້ປະກາດພຣະທັມ. ໃນພຣະທັມຕໍ່ໄປນີ້ ພຣະເຈົ້າໄດ້ຊົງເປີດເຜີຍຄໍາພິພາກສາຂອງພຣະອົງທີ່ຈະມາເຖິງຊາວຢູດາຍ. ພຣະເຈົ້າໄດ້ຊົງຈັດຕຽມບາບີໂລນຜູ້ໂຫດຮ້າຍໄວ້ເພື່ອເປັນເຄື່ອງມືຂອງພຣະອົງ. ຊາວບາບີໂລນເປັນນັກຮົບທີ່ຮ້າຍກາດແລະບໍ່ໄວ້ໜ້າໃຜ. ກຸງບາບີໂລນພຍາຍາມທີ່ຈະຄຸ້ມຄອງໂລກໃນສມັຍນັ້ນ. ທຸກໆປະເທດທີ່ພວກເຂົາຍຶດຄອງ, ບາບີໂລນຈະອອກກົດໝາຍປົກຄອງບັງຄັບປະຊາຊົນ. ຂໍ້ 1:8 ບັລຍາຍເຖິງຄວາມຍິ່ງໃຫຍ່ຂອງທະຫານມ້າຂອງກອງທັບບາບີໂລນ, "ມ້າຂອງເຂົາຊຶ່ງພວມອຶດຫິວເຫຍື່ອກໍແລ່ນໄວກວ່າເສືອດາວ ທັງຮ້າຍກາດກວ່າໝາ... ພວກມັນເຈີດລົງກິນເຫຍື່ອດັ່ງນົກອິນຊີ."

ທະຫານບາບີໂລນເປັນນັກສົງຄາມທີ່ສ້າງຄວາມຢ້ານກົວໃຫ້ກັບສັດຕຣູ ເພາະຄວາມວ່ອງໄວຂອງພວກເຂົາ. ພຣະເຈົ້າປຽບທຽບກອງທັບບາບີໂລນໃສ່ພະຍຸຊີ້ຊາຍທີ່ພັດເອົາທຸກຢ່າງທີ່ຢູ່ເສັ້ນທາງຂອງມັນ; "ເຂົາໃຊ້ຍຸດທະວິທີຍຶດເອົາປ້ອມ... ແລ້ວກໍກວາດເອົາສິ່ງຂອງເໝືອນລົມພັດເອົາໄປ ຄົນພວກນີ້ນັບຖືອໍານາດຂອງຕົນເປັນພຣະເຈົ້າ" (1:11). ບໍ່ມີໃຜທີ່ຈະສາມາດຢຸດຢັ້ງກອງທັບບາບີໂລນໄດ້. ພວກເຂົາຈະຍຶດຢູດາຍ ແລະເຮັດໃຫ້ການພິພາກສາຂອງພຣະເຈົ້າສໍາເຣັດ.

**<u>ການຮ້ອງທຸກເທື່ອທີສອງຂອງຮາບາກຸກ</u>** <u>(1:12--2:1)</u>
ການພິພາກສາຂອງພຣະເຈົ້າທີ່ຈະມາເຖິງຢູດາຍ ໂດຍຜ່ານຊາວບາບີໂລນໄດ້ສ້າງຄວາມຫວາດກົວໃຫ້ກັບຮາບາກຸກຢ່າງຫລວງຫລາຍ. ຜູ້ປະກາດພຣະທັມຮ້ອງທຸກກັບພຣະເຈົ້າວ່າ, "ພຣະເຈົ້າແລະພຣະຜູ້ປົກປ້ອງຄຸ້ມຄອງຂອງຂ້າພະອົງ; ພຣະອົງໄດ້ເລືອກເອົາພວກບາບີໂລນ ແລະໄດ້ເຮັດໃຫ້ພວກເຂົາແຂງແຮງເພື່ອວ່າພວກເຂົາຈະລົງໂທດພວກຂ້າ

ພຣະອົງໄດ້. ແຕ່ພຣະອົງທົນເບິ່ງຄົນເລັວຫລົ່ນທີ່ຫລອກລວງ ຄືຄົນຊົ່ວຊ້າເຫລົ່ານີ້ໄດ້ຢ່າງໃດ?" ຮາບາກຸກຄິດບໍ່ເຖິງວ່າພຣະເຈົ້າອົງບໍຣິສຸດ ແລະອົງເປັນຢູ່ສືບໄປຈະໃຊ້ພວກບາບີໂລນເພື່ອລົງໂທດຄວາມຜິດບາບຂອງຢູດາຍ. ຜູ້ປະກາດພຣະທັມເປັນຫ່ວງວ່າການລົງໂທດດ້ວຍມືຂອງບາບີໂລນນັ້ນ ຈະເກີນກວ່າຄວາມຜິດບາບຂອງພວກເຂົາ (1:13-17). ຮາບາກຸກປຽບທຽບຊັຍຊະນະຂອງບາບີໂລນຕໍ່ຢູດາຍໃນຕອນນີ້ວ່າ, "ພວກບາບີໂລນຈັບເອົາປະຊາຊົນໂດຍໃຊ້ຂໍເກາະເອົາ ດັ່ງຕຶກເບັດເອົາປາ. ເຂົາຕ່າງກໍໃຊ້ມອງກວາດເອົາປະຊາຊົນ ດ້ວຍສຽງໂຮຮ້ອງຍິນດີເພາະຈັບໄດ້..." ຜູ້ປະກາດພຣະທັມວາດພາບວ່າ ພວກບາບີໂລນເປັນເໝືອນຄົນຫາປາ ແລະຊາວຢູດາຍເປັນເໝືອນໂຕປາ. ພໍຕຶກປາໄດ້ຄົນຫາປາກໍມີຊີວິດຢູ່ຢ່າງສນຸກສນານ ໂດຍບໍ່ໄດ້ຄຳນຶ່ງເຖິງຄວາມເສັຽຫາຍຂອງໂຕປາທີ່ປ້ອງກັນຕົວເອງບໍ່ໄດ້.

ຄຳຮ້ອງທຸກຂອງຮາບາກຸກປະກອບດ້ວຍຄວາມໝັ້ນໃຈ ແລະຄວາມຫວັງວ່າພຣະຜູ້ເປັນເຈົ້າຈະຊົງອະທິບາຍການກະທຳຂອງພຣະອົງ ຕາມເວລາຂອງພຣະອົງເອງ. ຄຳຖາມໃນຂໍ້ 13 ເປັນການຢ້ຳຄຳຖາມໃນຂໍ້ 2 ທີ່ວ່າ "ອີກດົນປານໃດ." ແຕ່ໃນທີ່ນີ້ແມ່ນຄຳຖາມໃໝ່ຄື, <u>ຊາວຢູດາຈະຕ້ອງຖືກລົງໂທດຈາກພຣະເຈົ້າອີກດົນປານໃດ</u>?

## <u>ຄວາມຕັ້ງໃຈຂອງຮາບາກຸກ (2:1)</u>

ຜູ້ປະກາດພຣະທັມໄດ້ຕັດສິນໃຈແລ້ວວ່າເຂົາຈະເຮັດແນວໃດ. ຮາບາກຸກຕັ້ງໃຈທີ່ຈະລໍຄອຍພຣະເຈົ້າ. ທ່ານມີຄວາມໝັ້ນໃຈວ່າພຣະອົງຈະຊົງໃຫ້ຄຳຕອບອີກເທື່ອນຶ່ງ. ທ່ານໄດ້ປຽບຕົວເອງໃສ່ຄົນຍາມຢູ່ເທິງຫໍຄອຍ ຫລຽວອອກໄປສຸດຂອບຟ້າ ແລະຕຽມພ້ອມທີ່ຈະປະກາດພັຍທີ່ຈະມາເຖິງ. ຜູ້ປະກາດພຣະທັມມີນິສັຍໃນການອອກໄປຢູ່ດ່ຽວເພື່ອສະມາທິ ແລະອ້ອນວອນ. ຫລາຍໆຄັ້ງພວກເຂົາເຈົ້າຈະແຍກຕົວອອກຈາກຄວາມວຸ້ນວາຍໃນຊີວິດປະຈຳວັນເພື່ອໄປພິຈາຣະນາເຫດການທີ່ຫຍຸ້ງຍາກ ແລະໄປຮັບພຣະຄຳຈາກພຣະຜູ້ເປັນເຈົ້າສຳລັບພວກເຂົາ.

## <u>ຄຳຕອບຂອງພຣະເຈົ້າ (2:2-20)</u>

ເມື່ອເຖິງເວລາພຣະເຈົ້າກໍຊົງຕອບ. ພຣະອົງຊົງບອກຮາບາກຸກໃຫ້ຂຽນນິມິດ (ຄຳທຳນວາຍ) ໃສ່ແຜ່ນປ້າຍເພື່ອພວກປະຊາຊົນທຸກຄົນຈະໄດ້ເຫັນ. ເນື້ອໃນຂອງນິມິດຄື: ສິ່ງທີ່ພຣະເຈົ້າໄດ້ຊົງບອກນັ້ນຈະບໍ່ເກີດຂຶ້ນເທື່ອ (2:3) ແລະຄົນທີ່ຊອບທັມຈະມີຊີວິດຢູ່ (2:4). ຄວາມໝາຍກໍຄືວ່າເຖິງພຣະເຈົ້າຈະລົງໂທດຊາວຢູດາໂດຍໃຊ້ຄົນໂຫດຮ້າຍ ແຕ່ຄົນຊອບທັມ ຄືຜູ້ທີ່ຮັກແລະເຊື່ອຟັງພຣະເຈົ້າຈະມີຊີວິດຢູ່ລອດ. ພຣະຄຳຂອງພຣະເຈົ້າໃນຕອນນີ້ກົງກັບຄຳສອນໃນພຣະ ສັນຍາໃໝ່ທີ່ວ່າ, "ຜູ້ທີ່ຖືວ່າເປັນຄົນຊອບທັມເພາະດ້ວຍຄວາມເຊື່ອ ຜູ້ນັ້ນແຫລະ, ຈະໄດ້ຊີວິດ" (ໂຣມ 1:17; ຄາລາເຕັຽ 3:11; ເຮັບເຣີ 10:38). ຄົນຊອບທັມຈະມີຊີວິດຢູ່ໃນເວລາພຣະຄຣິດກັບມາພິພາກສາໂລກ.

## <u>ເຄາະກັມຫ້າຢ່າງຂອງຜູ້ຄອບຄອງ (2:6-20)</u>

ຜູ້ປະກາດອາດຈະໃຊ້ສຸພາສິດ, ເຣື່ອງສົມມຸດ, ຫລືກາບກອນ ເພື່ອບັລຍາເຄາະກັມແລະຄຳສາບແຊ່ງ. ໃນຕອນນີ້, ຜູ້ປະກາດພຣະທັມຮາບາກຸກກັບຜູ້ຄອບຄອງແລະຂົ່ມເຫງຄົນອື່ນໆ. ພຣະທັມຂໍ້ 2:15-16, ອະທິບາຍໂທດກັມທີ່ຈະມາເຖິງພວກບາບີໂລນຜູ້ຄອງອຳນາດໃນສມັຍນັ້ນ. ພວກເຂົາຈະດື່ມເຫລົ້າຈາກຈອກແຫ່ງການລົງໂທດຂອງພຣະເຈົ້າ: ພວກເຂົາຈະໄດ້ຮັບຄວາມອັບອາຍ; ພວກເຂົາຈະຍ່າງໂຊເຊເໝືອນຄົນເມົາເຫລົ້າ; ພວກເຂົາຈະເສັຽກຽດຕິຍົດ; ພວກເຂົາຈະຖືກປ້ຳລົງ; ພວກເຂົາຈະເກີດຄວາມສະທ້ານຢ້ານກົວ. ພວກບາບີໂລນຈະໄດ້ຮັບຄວາມອັບອາຍຫລາຍກວ່າຄວາມອັບອາຍທີ່ພວກເຂົາໄດ້ເຮັດໃຫ້ກັບຊົນຊາດອື່ນໆທີ່ເຄີຍຄອບຄອງ.

## <u>ບົດຮຽນສຳລັບຊີວິດ</u>

ປະສົບການຂອງຜູ້ປະກາດພຣະທັມຮາບາກຸກສະແດງໃຫ້ຮູ້ວ່າພຣະຜູ້ເປັນເຈົ້າຍັງຄວບຄຸມຊີວິດຂອງມະນຸດຢູ່; ພຣະອົງບໍ່ໄດ້ເມີນເສີຍຕໍ່ສິ່ງຕ່າງໆທີ່ເກີດຂຶ້ນກັບພວກເຮົາ. ພຣະເຈົ້າເປັນຜູ້ເຮັດໃຫ້ອານາຈັກທັງຫລາຍຍິ່ງໃຫຍ່ຂຶ້ນ ຫລືໝົດອຳນາດລົງ; ສະນັ້ນພວກເຮົາຈຶ່ງສາມາດໄວ້ວາງໃຈພຣະອົງສຳລັບຊີວິດຂອງພວກເຮົາ ໃນປັດຈຸບັນແລະໃນອະນາຄົດ. ບາງຄັ້ງຄວາມບໍ່ຍຸດຕິທັມ ຫລືສິ່ງຊົ່ວຮ້າຍອາດຈະຄຸ້ມຄອງຢູ່, ແຕ່ສິ່ງທີ່ແນ່ນອນກໍຄືຄວາມຍຸດຕິທັມຂອງພຣະເຈົ້າຈະຕ້ອງມີຊັຍຊະນະໃນທີ່ສຸດ.

**<u>ຄຳຖາມ</u>:**

1. ທ່ານສາມາດຈົດຈຳໄດ້ບໍ່ ຕອນທີ່ທ່ານ ຫລືຄົນທີ່ທ່ານຮູ້ໄດ້ອ້ອນວອນແລະອ້ອນວອນ ແຕ່ປາກົດວ່າພຣະເຈົ້າບໍ່ໄດ້ຊົງຕອບຄຳອ້ອນວອນໃນທັນທີທັນໃດນັ້ນເລີຍ?

2. ທ່ານເຄີຍໝົດຄວາມອົດທົນລໍຖ້າພຣະເຈົ້າໃຫ້ຕອບຄຳອ້ອນວອນ ແລະໄດ້ເຮັດຕາມໃຈຕົວເອງບໍ່? ມີຫຍັງແດ່ທີ່ເກີດຂຶ້ນຈາກການຕັດສິນໃຈຂອງທ່ານໃນຕອນນັ້ນ?

3. ເປັນຫຍັງການລໍຄອຍພຣະເຈົ້າຈຶ່ງເປັນເຣື່ອງຍາກສຳລັບພວກເຮົາ?

*ດຣ. ສິດນີ ຄານ*

# ບົດຮຽນບົດທີ 11
# ວ່າດ້ວຍຄວາມເຊື່ອ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ຮາບາກຸກ 3:1-2, 12-19
**ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:** ຮາບາກຸກ 3
**ຈຸດສໍາຄັນຂອງບົດຮຽນນີ້:** ຄວາມເຊື່ອສາມາດສູ້ທົນຕໍ່ມີບັນຫາຕ່າງໆ
**ຄໍາຖາມເພື່ອການສໍາຣວດ:** ຄວາມເຊື່ອຊ່ອຍທ່ານແນວໃດເມື່ອພົບກັບບັນຫາ
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສອນໃຫ້ເຮົາລໍຖ້າການຊ່ອຍເຫລືອທີ່ມາຈາກພຣະເຈົ້າ

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນໍາ

ຮາບາກຸກແມ່ນຜູ້ທໍານວາຍຜູ້ນຶ່ງໃນສັດຕະວັດທີ 7, ພຣະທັມຮາບາກຸກໄດ້ໃຫ້ຮູບພາບຢ່າງແຈ່ມແຈ້ງກ່ຽວກັບເຣື່ອງຂອງພວກຜູ້ທໍານວາຍຊຶ່ງພຣະທັມຮາບາກຸກນີ້ສາມາດຈັດໄດ້ເປັນສາມໝວດດ້ວຍກັນຄື;

1. ພວກຜູ້ທໍານວາຍຖາມແລະພຣະເຈົ້າ ຕອບ ບົດ1:--2:5.
2. ເຣື່ອງເຄາະກັມຂອງຄົນຊົ່ວ ບົດ2:6-20 ແລະ
3. ເຣື່ອງຄໍາອ້ອນວອນຂອງຮາບາກຸກ ບົດ 3:1-19.

## ຄໍາອ້ອນວອນຂອງຮາບາກຸກ 3:1-2

ຜູ້ປະກາດພຣະທັມຮາບາກຸກລົງທ້າຍບົດບັນທຶກຂອງເພິ່ນດ້ວຍຄໍາອ້ອນວອນ ເປັນສຽງເພງກາບກອນຂອງຊາວເຮັບເຣີທີ່ມີຊື່ວ່າ shigionoth ແປວ່າ (ຜູ້ຕ້ອງການ)ເພາະວ່າປີນີ້ເປັນປີທີ່ຮາບາກຸກພົບກັບບັນຫານາງປະການ, ເພິ່ນໄດ້ເວົ້າຈາກັບພຣະເຈົ້າດ້ວຍສຽງເພງເປັນຄໍາກອນໃນຍາມຍາກລໍາບາກວ່າ *"ໂອພຣະຜູ້ເປັນເຈົ້າ ຂ້ານ້ອຍໄດ້ຍິນກ່ຽວກັບສິ່ງພຣະອົງໄດ້ຊົງເຮັດ ແລະຂ້ານ້ອຍເຕັມໄປດ້ວຍຄວາມເກງກົວ ບັດນີ້ຂໍຊົງຮື້ຟື້ນພຣະຣາຊກິດຂອງພຣະອົງຂຶ້ນໃໝ່ໃນເວລາທີ່ຂ້ານ້ອຍຍັງມີຊີວິດຢູ່ຄືການກະທໍາອັນຍິ່ງໃຫຍ່ ທີ່ພຣະອົງໄດ້ເຄີຍເຮັດແຕ່ໃນສມັຍກ່ອນແມ່ນວ່າຍາມພຣະອົງພຣະພິໂຣດ ຂໍຊົງເມດຕາແດ່ທ້ອນ "* (ຂໍ້ 2).

ຮາບາກຸກເວົ້າວ່າ *ຂ້ານ້ອຍໄດ້ຍິນກ່ຽວກັບ ສິ່ງພຣະອົງໄດ້ຊົງເຮັດ* ອີງຕາມພວກສາສນາສາດເວົ້າວ່າຮາບາກຸກໄດ້ຍິນເຣື່ອງພຣະເຈົ້າຊົງລົງໂທດກຸງບາບີໂລນແລ້ວເຮັດໃຫ້ເພິ່ນມີຄວາມຢໍາເກງພຣະເຈົ້າຫລາຍຂຶ້ນໂດຍສະເພາະແມ່ນເຣື່ອງໃນພຣະທັມດານີເອນບົດທີ 5. ປະຫວັດສາດຍັງບອກອີກວ່າ ກຸງບາບີໂລນໃນສມັຍນີ້ແມ່ນປະເທດອີຣັກນັ້ນເອງ. ໃນສມັຍອິສຣາເອນບໍ່ຟັງຄວາມພຣະເຈົ້າ, ພຣະເຈົ້າໄດ້ເລືອກເອົາບາບີໂລນໃຫ້ມາກົດຂີ່ຂົ່ມເຫັງຊາວອິສຣາເອນທົ່ວປະເທດ, ຄົນດີແລະຄົນຊົ່ວກໍຖືກຂົ່ມເຫັງຄືກັນ ຈົນໃນທີ່ສຸດພຣະເຈົ້າກໍທໍາລາຍກຸງບາບີໂລນດ້ວຍວ່າພວກຜູ້ນໍາບາບີໂລນໄດ້ເຮັດເກີນຂອບເຂດຈົນເຖິງຂັ້ນໝິ່ນປມາດພຣະເຈົ້າ. ຕໍ່ມາເຖິງສມັຍຂອງຜູ້ປະກາດພຣະທັມຮາບາກຸກເພິ່ນກໍເຫັນຄົນຊົ່ວຮ້າຍທີ່ມີອໍານາດທາງການ ໄດ້ໃຊ້ອໍານາດຂອງເຂົາກົດຂີ່ຂົ່ມເຫງຄົນດີມີສິນທັມຢ່າງໂຫດຮ້າຍທາຣຸນຈຶ່ງ

ເປັນຕົ້ນເຫດໃຫ້ຜູ້ປະກາດພຣະທັມຮາບາກຸກຮ້ອງທູນຂໍຄວາມເມດຕາສົງສານຄົນສົນທັມ ໂດຍລົງໂທດພວກໂຫດຮ້າຍ ເພິ່ນກ່າວກັບພຣະເຈົ້າວ່າ *ບັດນີ້ຂໍຊົງຮື້ຟື້ນພຣະຣາຊກິດຂອງພຣະອົງຂຶ້ນໃໝ່* ຊຶ່ງແປວ່າເພິ່ນໄດ້ຂໍໃຫ້ພຣະອົງຊົງທຳລາຍຄົນຊົ່ວຮ້າຍຄືພຣະອົງໄດ້ທຳລາຍກຸງບາບີໂລນມາແລ້ວນັ້ນ. *ຍາມພຣະອົງພຣະພິໂຣດ ຂໍຊົງເມດຕາແດ່ທ້ອນ* ອາດໝາຍຄວາມວ່າຫາກຂ້ານ້ອຍຂໍຜິດແລະພຣະອົງຊົງໃຈຮ້າຍ ຂ້ານ້ອຍກໍຂໍໃຫ້ພຣະອົງອາພັຍດ້ວຍ ເພາະວ່າຜູ້ປະກາດພຣະທັມຮາບາກຸກໄດ້ຮ້ອງຂໍພຣະເຈົ້າໃຫ້ທຳລາຍຄົນຊົ່ວ. ຂ້າພະເຈົ້າເຂົ້າໃຈວ່າລາງເທື່ອເຮົາກໍຢາກອ້ອນວອນຄືຜູ້ປະກາດພຣະທັມຮາບາກຸກຄືກັນ ແຕ່ກໍບໍ່ຄວນອ້ອນວອນດັ່ງນັ້ນ.

## <u>ພຣະເຈົ້າຈະສະເດັດມາ</u> 3:3-15

ຜູ້ປະກາດຮາບາກຸກໄດ້ພັນລະນາເຣື່ອງພຣະເຈົ້າຈະກັບມາເມືອງເອໂດມອີກ, ຄຳວ່າກັບມາອີກແປວ່າພຣະອົງໄດ້ມາກ່ອນແລ້ວ. ດ້ວຍວ່າພຣະເຈົ້າເຄີຍສະເດັດມາກ່ອນແລ້ວແລະມີຜູ້ຄົນພົບເຫັນພຣະອົງດັ່ງນັ້ນຮາບາກຸກຜູ້ປະກາດຈຶ່ງສາມາດພັນລະນາເຖິງພຣະລັກສະນະຂອງພຣະເຈົ້າຈະສະເດັດມາວ່າ "*ພຣະເຈົ້າຈະກັບມາເມືອງເອໂດມອີກ ພຣະເຈົ້າອົງບໍຣິສຸດຈະມາແຕ່ພູປາຣານຄວາມສະຫງ່າຣາສີຂອງພຣະອົງປົກຄຸມທົ່ວຟ້າສວັນ ທົ່ວໂລກກໍເຕັມໄປດ້ວຍການສັຣເສີນພຣະອົງ ພຣະອົງສະເດັດມາພ້ອມແສງສວ່າງຂອງຟ້າແມບເຫລື້ອມ ພຣະຫັດຂອງພຣະອົງເຫລື້ອມ ມາບໆຊຶ່ງຣິດທານຸພາບຂອງພຣະອົງໄດ້ເຊື່ອງໄວ້ທີ່ນັ້ນ*" (ຂໍ້ 3-4). ຜູ້ປະກາດຮາບາກຸກຍັງບອກວ່າພຣະເຈົ້າຈະສະເດັດມາແຕ່ພູປຣານຊຶ່ງເປັນເຂດແດນທີ່ພຣະອົງຊົງໃຫ້ບັນຍັດແກ່ໂມເຊໃນສມັຍບູຮານ. ຫາກເຮົາຢ້ອນຄືນແລະ ສຶກສາເບິ່ງຄຳອ້ອນວອນຂອງຮາບາກຸກທີ່ກ່າວວ່າ *ບັດນີ້ຂໍຊົງຮື້ຟື້ນພຣະຣາຊກິດຂອງພຣະອົງຂຶ້ນໃໝ່* ແປວ່າເພິ່ນໄດ້ຂໍໃຫ້ພຣະອົງຊົງທຳລາຍຄົນຊົ່ວຮ້າຍເມື່ອມາປຽບທຽບໃສ່ຄຳວ່າ "*ພຣະອົງຈະໃຫ້ໂລກລະບາດມາກ່ອນ ແລະໃຫ້ຄວາມຕາຍມາຕາມຫລັງ*" (ຂໍ້ 5) ເຮົາຈະເຫັນວ່າຄຳອ້ອນວອນຂອງຮາບາກຸກນັ້ນຈະເປັນຈິງໃນວັນທີ່ພຣະເຈົ້າຈະສະເດັດມາ. ການສະເດັດມາຂອງພຣະເຈົ້າເປັນໜ້າຢ້ານແລະສຍອງຂວັນດັ່ງທີ່ຮາບາກຸກໄດ້ກ່າວໃນຂໍ້ 5 ເຖິງ 15 ແຕ່ພຣະອົງຈະຊົງຊ່ອຍໄພ່ພົນຂອງພຣະອົງໃຫ້ພົ້ນຈາກອັນຕະລາຍເຫລົ່ານີ້ "*ພຣະອົງສະເດັດອອກໄປຊ່ອຍໄພ່ພົນ ແລະເຈົ້າຊີວິດທີ່ພຣະອົງຊົງເລືອກໄວ້*" (ຂໍ້ 13).

## <u>ຄວາມແນ່ໃຈຂອງຮາບາກຸກ</u> 3:16-19

ຮາບາກຸກເລົ່າເຖິງຄວາມຢ້ານຢຳເກງພຣະເຈົ້າຈົນຕົວສັ່ນຂວັນເສັຽ ຊຶ່ງສະແດງເຖິງຄວາມຢ້ານຢຳເກງຈົນເຖິງຂັ້ນສຸດ ຂີດ ແຕ່ບໍ່ໄດ້ໝາຍຄວາມວ່າຢ້ານເພາະວ່າພຣະເຈົ້າເປັນພຣະເຈົ້າທີ່ໂຫດຮ້າຍແຕ່ຢ່າງໃດ ແຕ່ແມ່ນຢຳເກງດ້ວຍວ່າພຣະອົງມີຣິດອຳນາດອັນມະຫາສານທີ່ບໍ່ມີອຳນາດໃດໆມາທຽບທັນໄດ້. ຮາບາກຸກຍັງກ່າວອີກວ່າເພິ່ນຈະລໍຄອຍວັນທີ່ອົງພຣະຜູ້ເປັນເຈົ້າຈະສະເດັດມາ, ການລໍຄອຍຂອງຮາບາກຸກນີ້ເພິ່ນມີຄວາມຫວັງຢູ່ສອງປະການຄື;

1. ເພິ່ນລໍຄອຍວັນຊຶ່ງພຣະເຈົ້າຈະລົງໂທດຜູ້ທີ່ໂຈມຕີພວກເພິ່ນ. "*ຂ້ານ້ອຍຈະລໍຄອຍວັນແຫ່ງພຣະອົງຈະມາເຖິງຢ່າງມິດໆ ວັນຊຶ່ງພຣະເຈົ້າຈະລົງໂທດຜູ້ທີ່ໂຈມຕີພວກຂ້ານ້ອຍ*" (ຂໍ້ 16ຂ). ຫາກເຮົາທວນຄືນຄຳອ້ອນວອນຂອງຮາບາກຸກທີ່ອ້ອນວອນວ່າ "*ບັດນີ້ຂໍຊົງຮື້ຟື້ນພຣະຣາຊກິດຂອງພຣະອົງຂຶ້ນໃໝ່ ໃນເວລາທີ່ຂ້ານ້ອຍຍັງມີຊີວິດຢູ່*" *(ຂໍ້ 2ຂ).* ແລ້ວມາສົມທຽບກັບການລໍຄອຍຂອງເພິ່ນກໍຈະສລຸບໄດ້ວ່າ ໃນຂະນະທີ່ເພິ່ນມີຊີວິດຢູ່ ເພິ່ນຢາກເຫັນພຣະເຈົ້າລົງໂທດຄົນຊົ່ວຮ້າຍພ້ອມທັງພວກທີ່ໂຈມຕີເພິ່ນ.

2. ເພິ່ນລໍຄອຍວັນຊຶ່ງພຣະເຈົ້າວັນທີ່ພຣະຜູ້ເປັນເຈົ້າຈະມາຊ່ອຍ "*ເຖິງແມ່ນວ່າຕົ້ນໝາກເດື່ອບໍ່ມີໝາກ ຕົ້ນອະງຸ່ນບໍ່ມີຮວງ ກົກໝາກກອກເຫດບໍ່ມີຜົນ ແລະທົ່ງນາບໍ່ມີເຂົ້າ ເຖິງແມ່ນວ່າແກະໃນຝູງຈະຕາຍໝົດ ແລະຄອກງົວເປົ່າວ່າງ ຂ້ານ້ອຍຍັງຈະຊົມຊື່ນປິຕິຍິນດີ ເພາະວ່າພຣະເຈົ້າເປັນພຣະຜູ້ຊ່ອຍຂອງຂ້ານ້ອຍ ພຣະຜູ້ເປັນເຈົ້າຊົງປະທານເຣື່ອແຮງໃຫ້ຂ້ານ້ອຍ ພຣະອົງຊົງເຮັດໃຫ້ຂ້ານ້ອຍແລ່ນໄວເໝືອນກວາງ ແລະໃຫ້ຂ້ານ້ອຍຍ່າງເທິງພູຢ່າງປອດພັຍ*" (ຂໍ້ 17-19). ຮາບາກຸກກວ່າເປັນສາຣະຄະດີທີ່ຍືດຍາວຕາມພາສາຜູ້ປະກາດພຣະທັມຢ່າງນັກກະວີທີ່ພໍໃຈໃນການພິພາກ

ສາຂອງອົງພຣະຜູ້ເປັນເຈົ້າ, ດັ່ງນັ້ນຄົນຊົ່ວຮ້າຍແລະຄົນທັງຫຼາຍທີ່ໂຈມຕີພວກຜູ້ປະກາດພຣະທັມຈະບໍ່ຖືກລົງໂທດຈົນກວ່າວັນທີ່ພຣະຜູ້ເປັນເຈົ້າຈະສະເດັດມາ.

**<u>ຄໍາຖາມ;</u>**

1. ຮາບາກຸກແມ່ນໃຜ? ໃນສມັຍໃດ?

2. ຮາບາກຸກໄດ້ຍິນເຣື່ອງອັນໃດຈຶ່ງເກງກົວພຣະເຈົ້າເອົາແທ້ເອົາວ່າ?

3. ເພິ່ນໄດ້ອ້ອນວອນຂໍໃຫ້ພຣະເຈົ້າເຮັດຫຍັງ?

4. ຮາບາກຸກເວົ້າວ່າ ພຣະເຈົ້າຈະສະເດັດມາແຕ່ໃສ?

5. ຮາບາກຸກໄດ້ລໍຄອຍພຣະເຈົ້າຢ່າງໃດ?

6. ຮາບາກຸກລໍຄອຍພຣະເຈົ້າມາເຮັດຫຍັງແດ່?

7. ຄວາມຊົມຊື່ນຍິນດີຂອງຮາບາກຸກໃນຂໍ້ 18-19 ເພີ້ມຄວາມເຊື່ອທ່ານແນວໃດ?

8. ທ່ານຕຽມພ້ອມໃນການທີ່ພຣະເຈົ້າຈະສະເດັດມາບໍ່?

*ດຣ. ທູມພັນ ວົງສຸຣິດທ໌*

## ບົດຮຽນທີ 12

## ສຽງຄວນເຢຣູຊາເລັມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງຄໍ່າຄວນ 1:1-5, 12-22

**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** ເພງຄໍ່າຄວນ 1-2

**ຈຸດສຳຄັນຂອງບົດຮຽນນີ້:** ຄົນທີ່ໂສກເສົ້າກັບຄວາມຜິດບາບຂອງຕົນເອງ.

**ຄຳຖາມເພື່ອການສຳຣວດ:** ຈະເຮັດຜິດອີກບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າການໂສກເສົ້າໄດ້ເກີດຂຶ້ນເທົ່າທຸກວັນນີ້.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ເພງຄໍ່າຄວນເປັນການຄໍ່າຄວນຂອງກະສັດຊະໂລໂມນໃນນາມຂອງກຸງເຢຣູຊາເລັມ ປຽບເໝືອນຍິງໝ້າຍທີ່ຂາດຜູ້ອຸປະຖັມຄໍ້າຊູໃດໆ. ພຣະທັມເພງຄໍ່າຄວນນີ້ຂາດຈາກພຣະຄັມພີລາວສະບັບສີດຳ ແລະຍັງເປັນພຣະຄັມພີທີ່ບໍ່ຄ່ອຍມີຜູ້ຄົນຮູ້ຈັກກັນດີເທົ່າໃດ. ດັ່ງນັ້ນເພື່ອເປັນການຮຽນຮູ້ຂ້າພະເຈົ້າໄດ້ນຳ ເອົາພຣະທັມເພງຄໍ່າຄວນນີ້ມາຈາກພຣະຄັມພີສະບັບສີຟ້າເຂັ້ມທີ່ມີແຕ່ພຣະຄັມພີເດີມ ເທົ່ານັ້ນມາສູ່ທ່ານ ແລະກໍຍັງຢ້ານວ່າທ່ານຈະບໍ່ມີພຣະຄັມພີສະບັບນີ້. ດັ່ງນັ້ນຂ້າພະເຈົ້າຈະພິມທຸກຂໍ້ຄວາມລົງໃນບົດຮຽນນີ້.

*ຂໍ້1 ກຸງເຢລູຊາເລັມເອີຍ ບັດນີ້ເຈົ້ານອນຢຽດຢູ່ຢ່າງເປົ່າປ່ຽວທີ່ສຸດ ຄັ້ງໜຶ່ງເຈົ້າໄດ້ເປັນນະຄອນທີ່ມີຝູງຊົນໜາແໜ້ນ ແລະຄັ້ງໜຶ່ງນັ້ນກໍໄດ້ຮັບກຽດຈາກຊາວໂລກາ ແຕ່ມາບັດນີ້ເຈົ້າຊໍ້າພັດເປັນເໝືອນດັ່ງແມ່ໝ້າຍ ທີ່ຜ່ານມານັ້ນເຈົ້າໄດ້ເປັນເຈົ້າຍິງໃນທ່າມກາງເມືອງທັງຫລາຍ ແຕ່ບັດນີ້ຖືກລົດກຽດລົງ ຕົກເປັນທາດອອກແຮງງານສາແລ້ວ.*

*ຂໍ້2 ນາງຈຶ່ງຮ້ອງໄຫ້ຕລອດທັງຄືນ ນໍ້າຕາຫລັ່ງໄຫລນອງຖ້ວມລົງອາບແກ້ມ ບັນດາເພື່ອນຝູງໃນອະດີດກໍບໍ່ເຫລືອເພື່ອປອບໃຈນາງເລີຍ ບັດນີ້ພັນທະມິດຕ່າງກໍທັກຫລັງ ແລະຫັນມາຕໍ່ສູ້ນາງສາແລ້ວ.*

*ຂໍ້3 ປະຊາຊົນຊາວຢູດາຕົກເປັນທາດ ແລະຂາດຄວາມຊ່ອຍເຫລືອ ແລະທັງຖືກບັງຄັບໃຫ້ໜີຫ່າງໄກຈາກເມືອງບ້ານ ພວກເຂົາອາສັຍຢູ່ໃນດິນແດນອື່ນທີ່ບໍ່ມີສິດເອີ້ນເປັນຂອງຕົນເອງ ຖືກອ້ອມຮອບດ້ວຍສັດຕູໂດຍບໍ່ມີທາງຈະຫລົບໜີໄປໄດ້.*

*ຂໍ້4 ບັດນີ້ຈຶ່ງບໍ່ມີຜູ້ໃດມາເຝົ້າຍັງພະວິຫານເພື່ອນ້ອມນະມັສະການໃນມື້ສັກສິດຕ່າງໆ ຍິງສາວທີ່ເຄີຍໄດ້ຮ້ອງເພງຢູ່ທີ່ນັ້ນກໍທົນທຸກທໍຣະມານ ແລະບັນດາປະໂລຫິດກໍມີແຕ່ຮ້ອງຄວນຄາງທັງສິ້ນ ປະຕູທາງເຂົ້ານະຄອນກໍຫວ່າງເປົ່າ ແລະພູສີໂອນກໍໂສກເສົ້າເຈັບປວດໃນຊີວິດ.*

*ຂໍ້5 ພວກສັດຕູໄດ້ເປັນນາຍເໜືອນາງ ພວກເຂົາໄດ້ຍຶດເອົານາງໃຫ້ຢູ່ໃຕ້ອຳ ນາດຍ້ອນນາງເຮັດບາບຈຶ່ງໃຫ້ນາງທົນທຸກທໍຣະມານ ພວກລູກ ໆຂອງນາງຕ່າງກໍຖືກຈັບໄປຍັງຕ່າງຖິ່ນ.*

**ຜົນສະທ້ອນຂອງການເຮັດບາບ 1:1-5**

ເຮົາມັກຈະໄດ້ຍິນຄົນເວົ້າວ່າບາບຢູ່ໃສ?. ເປັນຮູບແນວໃດ? ມັນເປັນຄຳຖາມທີ່ຫາຕອບໄດ້ຍາກຫາກເຮົາບໍ່ເບິ່ງຜົນສະທ້ອນຂອງມັນ ດ້ວຍວ່າບາບບໍ່ມີຕົວຕົນທີ່ສາມາດເບິ່ງເຫັນດ້ວຍຕາເປົ່າຫລືຈັບບາຍໄດ້ແຕ່ຢ່າງໃດ, ເຖິງແມ່ນຄວາມບາບຈະບໍ່ສາມາດເບິ່ງດ້ວຍຕາເປົ່າກໍຕາມ ແຕ່ໝາກຜົນຂອງຄວາມບາບນັ້ນເຫັນກັບຕາແທ້ໆ. ຕົວຢ່າງວ່າມີຂະໂມຍຜູ້ນຶ່ງໄປລັກຂອງໃນຮ້ານຄ້າແລະກໍຖືກຈັບໄດ້ ຈຶ່ງເຂົ້າຄຸກແລະເສັຽເງິນຄ່າປະກັນອອກຈາກຄຸກ ແລະຍັງຝາກໂທດອີກ, ການລັກກໍເປັນບາບຢ່າງນຶ່ງ ແຕ່ໃນຂະນະທີ່ລາວເຮັດບາບນັ້ນລາວບໍ່ເຫັນບາບລົ້ມທັບລາວເປັນຕົນເປັນຕົວ ເມື່ອລາວຖືກຈັບຂັງຄຸກແລ້ວເສັຽເງິນຄ່າປະກັນແລະຝາກໂທດນັ້ນແຫລະເປັນໝາກຜົນຂອງຄວາມບາບ. ຂ້າພະເຈົ້າຂໍນຳທ່ານໄປສຶກສາຜົນສະທ້ອນຂອງຄວາມບາບໃນພຣະຄັມພີບາງຕອນດັ່ງນີ້;

ໃນຄຳອ້ອນວອນຂອງລູກຊາຍຂອງທ່ານໂຄຣາໄດ້ອ້ອນວອນພຣະເຈົ້າວ່າ *"ເປັນຫຍັງຂ້ານ້ອຍຈຶ່ງໂສກເສົ້າ? ເປັນຫຍັງຂ້ານ້ອຍຈຶ່ງລຳບາກ"* (ເພງສັຣເສີນ 42:5ກ). ເປັນຄຳຖາມທີ່ເຮົາທຸກຄົນຄວນຈະຖາມວ່າເປັນຫຍັງເຮົາຈຶ່ງໂສກເສົ້າ? ແລະລຳບາກ? ອາດເປັນເພາະເຮົາໄດ້ເຮັດຜິດແລະເຮັດບາບໂດຍບໍ່ເຊື່ອຟັງແລະລະເມີດຄຳສັ່ງສອນຂອງອົງພຣະຜູ້ເປັນເຈົ້າ. ລູກຊາຍຂອງທ່ານໂຄຣາເພິ່ນໄດ້ອ້ອນວອນຖາມພຣະເຈົ້າ ແລະຕໍ່ມາເພິ່ນກໍສະແດງຄວາມຖ່ອມໃຈລົງເພາະເພິ່ນຮູ້ວ່າເປັນຍ້ອນຄວາມບາບຂອງເພິ່ນເອງເພິ່ນຈຶ່ງໂສກເສົ້າແລະລຳບາກ, ດັ່ງນັ້ນເພິ່ນຈຶ່ງກ່າວຕໍ່ໄປວ່າ *"ຂ້ານ້ອຍຈະມອບຄວາມຫວັງໄວ້ກັບພຣະເຈົ້າ ແລະຂ້ານ້ອຍຍັງຈະສັຣເສີນພຣະອົງພະຜູ້ຊ່ອຍໃຫ້ພົ້ນພັຍແລະພຣະເຈົ້າຂອງຂ້ານ້ອຍ"* (ເພງ ສັຣເສີນ 42:5ຂ). ໃນບົດເພງຄ່ຳຄວນນີ້ກໍເຊັ່ນດຽວກັນ ເພິ່ນໄດ້ຄ່ຳຄວນເຣື່ອງກຸງເຢຣູຊາເລັມໄດ້ເປົ່າປ່ຽວເໝືອນດັ່ງຍິງແມ່ໝ້າຍ, ກຽດແລະສັກສີຖືກລົດລົງ, ຕົກເປັນທາດອອກແຮງງານ, ຮ້ອງໄຫ້ຈົນນ້ຳຕາໄຫລອາບແກ້ມ ຫາເພື່ອນຈະມາປອບໃຈກໍບໍ່ມີ, ເພື່ອນຝູງໃນອະດີດກໍຫ່າງຫາຍແລະຫັກຫລັງເສັຍອີກ, ຖືກບີບບັງຄັບໃຫ້ໜີຈາກບ້ານເມືອງແລະໄປຢູ່ໃນວົງລ້ອມຂອງສັດຕຣູ, ພຣະວິຫານກໍຫວ່າງເປົ່າຂາດຄົນເຝົ້າດູແລ ແລະຂາດຄົນນະມັສການ. ພວກສັດຕຣູໄດ້ເປັນນາຍທັງໝົດນີ້ໄດ້ສລູບໃນຂໍ້5 ດັ່ງນີ້; *ຍ້ອນນາງເຮັດບາບຈຶ່ງໃຫ້ນາງທົນທຸກທໍຣະມານ.* ຄຳວ່ານາງໃນຕອນນີ້ບໍ່ໄດ້ໝາຍຄວາມວ່າຜູ້ໃດຜູ້ນຶ່ງ ແຕ່ໝາຍເຖິງກຸງເຢຣູຊາເລັມກຳລັງອ່ອນແອ ຂາດຄົນເບິ່ງແຍງຄ້າຍຄືຍິງໝ້າຍຄົນນຶ່ງນັ້ນເອງ, ແລະການເຮັດບາບທີ່ກ່າວມານີ້ແມ່ນບາບທີ່ບໍ່ເຮັດຕາມບັດຍັດຂອງພຣະອົງຢ່າງແທ້ຈິງ.

## <u>ຮ້ອງໄຫ້ຂໍຄວາມເຫັນໃຈ</u> 1:12-16

<u>ຂໍ້12.</u> *"ຫລຽວເບິ່ງຂ້ອຍແດ່ ນາງຮ້ອງໃສ່ທຸກຄົນທີ່ຜ່ານໄປມາວ່າບໍ່ມີຜູ້ໃດເລີຍທີ່ເຈັບປວດເໝືອນດັ່ງຂ້ອຍ ນີ້ເປັນຄວາມເຈັບປວດທີ່ພຣະຜູ້ເປັນເຈົ້າໄດ້ນຳມາໃຫ້ຂ້ອຍໄດ້ຮັບຄາວທີ່ພຣະອົງໂກດຮ້າຍ.*

<u>ຂໍ້13</u> *ພຣະອົງໄດ້ສົ່ງໄຟຈາກເບື້ອງເທິງ ລົງມາເປັນ ໄຟທີ່ລຸກໄໝ້ຮ້ອນໜັກໜາຢູ່ພາຍໃນຈິດໃຈຂອງຂ້ອຍ ພຣະອົງຊຶງຫ້າງແຮ້ວໃສ່ຂ້ອຍ ແລະເຮັດໃຫ້ຂ້ອຍລົ້ມລົງກັບພື້ນດິນແລ້ວພຣະອົງກໍປະຖິ້ມຂ້ອຍໄປທັງປ່ອຍໃຫ້ເຈັບປວດຢູ່ຕລອດ*

<u>ຂໍ້14</u> *ພຣະອົງໄດ້ບັນທຶກບາບທັງ ໝົດທີ່ຂ້ອຍໄດ້ເຮັດມາ ແລ້ວກໍມັດບາບນັ້ນທັງໝົດຮວມເຂົ້າໃສ່ກັນໄວ້ ພຣະອົງຫ້ອຍບາບເຫລົ່ານັ້ນໃສ່ໄວ້ເທິງຄໍຂ້ອຍ ຈຶ່ງອ່ອນເພັຽລົງ ເພາະນ້ຳໜັກຂອງບາບເຫລົ່ານັ້ນ ພຣະຜູ້ເປັນເຈົ້າມອບຂ້ອຍໃຫ້ສັດຕູແລະຂ້ອຍກໍບໍ່ມີຜູ້ໃດທີ່ຈະຊ່ອຍຕໍ່ສູ້ພວກເຂົາໄດ້.*

<u>ຂໍ້15</u> *ພຣະຜູ້ເປັນເຈົ້າໄດ້ຫົວເຍາະເຍີ້ຍໃສ່ທະຫານໆຂອງຂ້ອຍທັງໝົດ ພຣະອົງໄດ້ສົ່ງກອງທັບມາທຳລາຍພວກຊາຍໜຸ່ມຂອງຂ້ອຍ ພຣະອົງໄດ້ຢຽບຢ່ຳທຳລາຍປະຊາຊົນຂອງຂ້ອຍລົງເໝືອນດັ່ງໝາກອະງຸ່ນຢູ່ໃນໂຮງບີບ ເຫລົ້າອະງຸ່ນນັ້ນ.*

<u>ຂໍ້16</u> *ເພາະຄວາມທຸກລຳບາກນີ້ແຫລະ ຂ້ອຍຈຶ່ງຮ້ອງໄຫ້ອອກມາ ຈົນເບົ້າຕາທັງສອງນອງໄປດ້ວຍນ້ຳຕາທັງສິ້ນ ບໍ່ມີໃຜອອຍໃຈຂ້ອຍໄດ້ ບໍ່ມີໃຜໃຫ້ກຳລັງໃຈຂ້ອຍໄດ້ເລີຍ ເຫລົ່າສັດຕຣູໄດ້ຊະນະປະຊາຊົນຂ້ອຍຈຶ່ງບໍ່ມີຫຍັງເຫລືອຢູ່ຈັກດີ້"* (ຂໍ້ 12-16).

ເມື່ອໄດ້ອ່ານຄຳຮ້ອງໄຫ້ຄຳຄວນຂອງຊະໂລໂມນແລ້ວ ເຮັດໃຫ້ຂ້າພະເຈົ້າຄິດເຫັນຕອນພຣະເຢຊູຮ້ອງໄຫ້ສົງສານກຸງເຢຣູຊາເລັມໃນພຣະທັມລູກາວ່າ *"ເມື່ອພຣະອົງສະເດັດມາໃກ້ແລະເຫັນກຸງແລ້ວ ກໍຊົງພຣະກັນແສງ* (ຮ້ອງໄຫ້) *ເພາະ*

*ສົງສານກຸງນັ້ນ* " (ລູກາ 19:41). ຊາໂລໂມນໄດ້ແຕ່ງກາບກອນແບບຊາວເຮັບເຣີແລະເປັນເພງຄໍ່າຄວນເຖິງຄວາມທຸກໃຈ

ຂອງເພິ່ນໃນຖານະເປັນກະສັດຂອງເຢຣູຊາເລັມ, ໃນຍາມຍາກລໍາບາກຫາໃຜຈະມາເປັນເພື່ອນເພື່ອເລົ້າໂລມໃຈກໍບໍ່ມີຄວາມໜັກອົກໜັກໃຈຂອງເພິ່ນແທນກຸງເຢຣູຊາເລັມ ປຽບເໝືອນພຣະເຈົ້າເອົາຄວາມຜິດບາບທັງໝົດມາມັດໃສ່ກັນແລ້ວແຂນໄວ້ທີ່ຄໍຂອງເພິ່ນເປັນເໝືອນສາຍສ້ອຍເສັ້ນໃຫຍ່ທີ່ມີນໍ້າໜັກເກີນກວ່າກໍາລັງ. ຄວາມທຸກໃຈແລະຄວາມໂສກເສົ້ານີ້ເພິ່ນໄດ້ບອກແຈ້ງແລ້ວວ່າເປັນຄວາມຜິດບາບຂອງເຢຣູຊາເລັມເອງ " *ພຣະອົງໄດ້ບັນທຶກບາບທັງໝົດທີ່ຂ້ອຍໄດ້ເຮັດມາແລ້ວກໍມັດບາບນັ້ນທັງໝົດຮວມເຂົ້າໃສ່ກັນໄວ້* " (ຂໍ້ 14). ທ່ານແລະຂ້າພະເຈົ້າອາດແມ່ນຜູ້ນຶ່ງທີ່ໄດ້ເຮັດຜິດບາບໂດຍການຂັດພຣະບັນຊາຂອງພຣະເຈົ້າ ເຮົາຈຶ່ງມີຄວາມທຸກຍາກລໍາບາກຕ່າງ ໆເກີດຂຶ້ນໃນຊີວິດເຮົາ ເພາະວ່າ " *ພຣະອົງກໍປະຖິ້ມຂ້ອຍໄປທັງປ່ອຍໃຫ້ເຈັບປວດຢູ່ຕລອດ* " (ຂໍ້ 13).

## <u>ໃນທີ່ສຸດກໍສາຣະພາບ</u> 1:17-22

<u>ຂໍ້17</u> *"ຂ້ອຍເດ່ມືອອກເພື່ອວິງວອນໃຫ້ຄົນຊ່ອຍເຫລືອ ແຕ່ກໍບໍ່ມີຜູ້ໃດທີ່ຈະຊ່ອຍເຫລືອຂ້ອຍໄດ້ ພຣະຜູ້ເປັນເຈົ້າໄດ້ເອີ້ນເອົາເຫລົ່າສັດຕຣູມາຕໍ່ສູ້ຂ້ອຍທຸກທິດທາງ ພວກເຂົາປະຕິບັດຕໍ່ຂ້ອຍເໝືອນດັ່ງກັບສິ່ງທີ່ເປິະເປື້ອນ.*

<u>ຂໍ້18</u> *ພຣະຜູ້ເປັນເຈົ້າຊົງສັດຊື່ ແຕ່ຂ້ອຍບໍ່ໄດ້ເຊື່ອຟັງພຣະອົງເລີຍ ປະຊາຊົນຢູ່ທຸກບ່ອນເອີຍຈົ່ງຟັງຂ້ອຍເທີ້ນຈົ່ງຫລຽວເບິ່ງໃນຄວາມເຈັບປວດຂອງຂ້ອຍແດ່ແມ ຊາຍໜຸ່ມແລະຍິງສາວທີ່ຂ້ອຍມີກໍຖືກຈັບໄປເປັນຊະເລີຍທັງສິ້ນ.*

<u>ຂໍ້ 19</u> *ຂ້ອຍໄດ້ເອີ້ນຫາໝູ່ຄູ່ທີ່ເຄີຍຮັກແພງກັນ ແຕ່ພວກເຂົາບໍ່ຍອມໃຫ້ຄວາມຊ່ອຍເຫລືອແກ່ຂ້ອຍ ປະໂລຫິດກັບພວກຜູ້ນໍານັ້ນກໍລົ້ມຕາຍທີ່ຖນົນຫົນທາງໃນເມືອງໃນຂະນະທີ່ພວກເຂົາຊອກຫາອາຫານເພື່ອໃຫ້ພວກຕົນມີຊີວິດຢູ່.*

<u>ຂໍ້ 20</u> *ໂຜດຫລຽວເບິ່ງຄວາມທຸກຂອງຂ້າພຣະອົງດ້ວຍ ພຣະຜູ້ເປັນເຈົ້າຂ້າໂຜດຫລຽວເບິ່ງຈິດໃຈອັນແສນປວດຂອງຂ້າພຣະອົງແດ່ທ້ອນ ຂ້າພຣະອົງແສນເຈັບປວດ ຍ້ອນໂສກເສົ້າເພາະມີບາບໜາ ຕາມຖນົນກໍມີການຂ້າກັນແມ່ນແຕ່ໃນເຮືອນກໍມີຄົນຕາຍດ້ວຍ.*

<u>ຂໍ້21</u> *ໂຜດຟັງຄໍາຄໍ່າຄວນຂອງຂ້າພຣະອົງດ້ວຍເພາະບໍ່ມີໃຜອອຍໃຈຂ້າພຣະອົງເລີຍ ພວກສັດຕູຂອງຂ້າພຣະອົງດີໃຈທີ່ພຣະອົງໄດ້ນໍາພັຍວິບັດມາສູ່ຂ້າພຣະອົງແລ້ວ ຂໍໂຜດນໍາເອົາມື້ທີ່ພຣະອົງໄດ້ສັນຍານັ້ນມາສາ ແລະໂຜດໃຫ້ພວກສັດຕູຂ້າພຣະອົງຖືກທໍຣະມານດັ່ງດຽວກັບຂ້າພຣະອົງດ້ວຍ.*

***<u>ຂໍ້22</u>*** *ໂຜດປະນາມຄວາມຊົ່ວຮ້າຍຂອງພວກເຂົາແດ່ແມ ໂຜດລົງໂທດພວກເຂົາດັ່ງທີ່ພຣະອົງໄດ້ລົງໂທດຂ້າພຣະອົງນັ້ນ ເພາະຍ້ອນການບາບທີ່ຂ້າພຣະອົງກະທໍາ ຂ້າພຣະອົງຈຶ່ງເປັນທຸກຮ້ອນຫລາຍແລະຄໍ່າຄວນຢ່າງເຈັບປວດ* " (ຂໍ້ 17-22).

ຂ້ອຍເດ່ມືອອກເພື່ອຂໍວິງວອນໃຫ້ຄົນຊ່ອຍເຫລືອ ທີ່ໂຊໂລໂມນພັນລະນາແມ່ນເພິ່ນໄດ້ຮ້ອງຫາປະເທດເພື່ອນບ້ານໃກ້ຄຽງກໍບໍ່ມີປະເທດໃດ ໆມາຍື່ນມືຊ່ອຍເພິ່ນຈົນໃນທີ່ສຸດເພິ່ນກໍຮູ້ວ່າເປັນຍ້ອນເພິ່ນບໍ່ເຊື່ອຟັງພຣະເຈົ້າ ຂໍ້ 18. ເພິ່ນພະຍາມຍາມເອີ້ນຜູ້ຄົນທັງຫລາຍຫລຽວເບິ່ງຄວາມທຸກຍາກລໍາບາກຂອງເພິ່ນ ເພື່ອຄົນທັງຫລາຍຈະໄດ້ເຫັນໃຈພ້ອມທັງຮຽນຮູ້ຜົນວ່າຄວາມທຸກຕ່າງ ໆນັ້ນແມ່ນມາຈາກການບໍ່ເຊື່ອຟັງພຣະເຈົ້າ, ພັຍວິບັດທີ່ເກີດຂຶ້ນແມ່ນໝາກຜົນຂອງການບໍ່ເຊື່ອຟັງທັງນັ້ນ. ໃນຂໍ້ 21-22 ເພິ່ນສາຣະພາບຄວາມຜິດບາບແລະໄດ້ຂໍໃຫ້ພຣະເຈົ້າຊົງເມດຕາສົງສານ ຂໍອະພັຍຄວາມຜິດບາບຂອງກຸງເຢຣູຊາເລັມ. ເຮົາທັງຫລາຍສົມຄວນຈະຮຽນເອົາແບບຢ່າງນີ້ມາປະຕິບັດໃນຊີວິດ ຂອງເຮົາເພື່ອເຮົາຈະໄດ້ຮູ້ວ່າ ສິ່ງທີ່ເກີດຂຶ້ນກັບເຮົານັ້ນເປັນຍ້ອນຄວາມບາບຂອງເຮົາ ແລະເຮົາຈະໄດ້ຮຽນຮູ້ຈັກການສາຣະພາບຄວາມຜິດບາບ ເພື່ອພຣະເຈົ້າຈະໄດ້ຊໍາຣະລ້າງໃຫ້ຂາວສອາດ.

<u>ຄໍາຖາມ:</u>

1. ເປັນຫຍັງພຣະເຈົ້າຈຶ່ງລົງໂທດເຢຣູຊາເລັມ?

2. ຄວາມບາບຂອງເຢຣູຊາເລັມໄດ້ມີຄວາມຄ້າຍຄືຄວາມບາບຂອງເຮົາຢ່າງໃດ?

3. ການບໍ່ເຊື່ອພຣະເຈົ້າມີຜົນສະທ້ອນໃນຊີວິດຂອງເຮົາຢ່າງໃດ?

4. ເຮົາຮູ້ແລ້ວວ່າການບໍ່ເຊື່ອຟັງນໍາໄປສູ່ການລົງໂທດ. ວັນນີ້ເຮົາຈະປ່ຽນຈຸດໃດໃນຊີວິດເຮົາ?

5. ເຮົາຈະນໍາຄອບຄົວເຮົາໃຫ້ພົ້ນຈາກການລົງໂທດຢ່າງໃດ?

6. ເຢຣູຊາເລັມແມ່ນແຜ່ນດິນພຣະເຈົ້າຊົງຮັກ, ເຮົາກໍແມ່ນຄົນທີ່ພຣະເຈົ້າຊົງຮັກ ແຕ່ເປັນຫຍັງພຣະອົງຈຶ່ງລົງໂທດ?

7. ໂທດກັມຂອງເຢຣູຊາເລັມເປັນເຄື່ອງເຕືອນໃຈເຮົາຢ່າງໃດ?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນທີ 13
# ຊົງຮັກຢ່າງໝັ້ນຄົງ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ເພງຄໍ່າຄວນ 3:1-9, 19-41
**ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:** ເພງຄໍ່າຄວນ 3
**ຈຸດສໍາຄັນຂອງບົດຮຽນນີ້:** ພຣະເຈົ້າຊົງຮັກແລະອະພັຍຫາກເຮົາຄືນມາຫາພຣະອົງ.
**ຄໍາຖາມເພື່ອການສໍາຮວດ:** ເຮົາຈະກັບຄືນແລະຊັກຊວນຄົນອື່ນໃຫ້ກັບໃຈແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີຄືນມາຫາພຣະເຈົ້າ

## ບົດນໍາ

ເພງຄໍ່າຄວນເປັນການຄໍ່າຄວນຂອງເຢເຣມີຢາຄໍ່າຄວນໃນນາມຂອງກຸງເຢຣູຊາເລັມ ປຽບເໝືອນຍິງໝ້າຍທີ່ຂາດຜູ້ອຸປະຖັມຄໍ້າຊູໃດ ໆ. ພຣະທັມເພງຄໍ່າຄວນນີ້ຂາດຈາກພຣະຄັມພີລາວສະບັບສີດໍາແລະຍັງເປັນພຣະຄັມພີທີ່ບໍ່ຄ່ອຍມີຜູ້ຄົນຮູ້ຈັກກັນດີເທົ່າໃດ. ດັ່ງນັ້ນເພື່ອເປັນການຮຽນຮູ້ຂ້າພະເຈົ້າໄດ້ນໍາເອົາພຣະທັມເພງຄໍ່າຄວນນີ້ມາຈາກພຣະຄັມພີສະບັບສີຟ້າເຂັ້ມທີ່ມີແຕ່ພຣະຄັມພີເດີມເທົ່ານັ້ນມາສູ່ທ່ານ ແລະກໍຍັງຢ້ານວ່າທ່ານຈະບໍ່ມີພຣະຄັມພີສບັບນີ້. ດັ່ງນັ້ນຂ້າພະເຈົ້າ ຈະພິມທຸກຂໍ້ຄວາມລົງໃນບົດຮຽນນີ້.

<u>ເພງຄໍ່າຄວນ 3:1-9</u>

1 *ຂ້າພະເຈົ້າເປັນຄົນທີ່ໄດ້ເຫັນຄວາມທຸກໃຈ ໂດຍໄມ້ແສ້ແຫ່ງພຣະພິໂຣດຂອງພຣະອົງ*
2 *ພຣະອົງຊົງນໍາ ແລະພາຂ້າພະເຈົ້າມາໃນຄວາມມືດແລະບໍ່ແມ່ນໃນຄວາມສວ່າງ*
3 *ແທ້ຈິງພຣະອົງຊົງພຶກພຣະຫັດຂອງພຣະອົງ ຕໍ່ສູ້ຂ້າພະເຈົ້າຢູ່ຕລອດວັນ*
4 *ເນື້ອແລະໜັງຂ້າພະເຈົ້າ ພຣະອົງຊົງກະທໍາໃຫ້ຊູບຊີດລົງ ພຣະອົງຊົງຫັກກະດູກຂ້າພະເຈົ້າແລ້ວ*
5 *ພຣະອົງຊົງສ້າງຮົ້ວຂັງຂ້າພະເຈົ້າ ຊົງເອົາຄວາມຂົມຂື່ນແລະຄວາມທຸກຍາກລໍາບາກລ້ອມຂ້າພະເຈົ້າໄວ້*
6 *ພຣະອົງໄດ້ຊົງບັງຄັບຂ້າພະເຈົ້າ ໃຫ້ຢູ່ໃນທີ່ມືດ ດັ່ງຄົນທີ່ຕາຍນານແລ້ວ*
7 *ພຣະອົງຊົງກະທໍາຮົ້ວລ້ອມຂ້າພະເຈົ້າ ໄວ້ເພື່ອຈະກັກຂັງບໍ່ໃຫ້ອອກໄປໄດ້ ພຣະອົງຊົງຕີໂຊ່ລ່າມຂ້າພະເຈົ້າໄວ້*
8 *ເມື່ອຂ້າພະເຈົ້າຮ້ອງກາບທູນຂໍຄວາມຊ່ວຍເຫລືອ ພຣະອົງບໍ່ຊົງຟັງຄໍາອ້ອນວອນຂອງຂ້າພະເຈົ້າ*
9 *ພຣະອົງຊົງລ້ອມຂ້າພະເຈົ້າດ້ວຍກ້ອນຫີນທີ່ສະກັດ ພຣະອົງຊົງກະທໍາໃຫ້ຫົນທາງຂ້າພະເຈົ້າຄົດລ້ຽວໄປ*

## <u>ເລົ່າເຣື່ອງໂສກເສົ້າ</u> 3:1-9

ໃນພຣະທັມເພງຄໍ່າຄວນນີ້ຫາກເຮົາຈະເວົ້າກັນວ່າຈົ່ມທຸກກໍວ່າໄດ້ ເບິ່ງຄ້າຍກັບວ່າເປັນການຈົ່ມທຸກໃຫ້ພຣະເຈົ້າຕໍ່ຄົນທັງຫລາຍເພື່ອຂໍຄວາມເຫັນອົກເຫັນໃຈ ອີກປະການນຶ່ງຍັງເປັນບົດຮຽນອັນລໍ້າຄ່າແກ່ຜູ້ອ່ານ. ການບໍ່ເຊື່ອຟັງພຣະເຈົ້າເປັນຫົນທາງແຫ່ງຄວາມຫາຍຍະນະແທ້ ແລະຜູ້ອ່ານກໍຈະຮຽນເຊື່ອຟັງພຣະເຈົ້າເພື່ອຈະໄດ້ພົ້ນຈາກການລະເລີຍຂອງພຣະເຈົ້າ. ເມື່ອເຮົາພິຈາຣະນາເບິ່ງຂໍ້1 ທີ່ກ່າວວ່າ *"ຂ້າພະເຈົ້າເປັນຄົນທີ່ໄດ້ເຫັນຄວາມທຸກໃຈ ໂດຍໄມ້ແສ້ແຫ່ງ ພຣະພິໂຣດຂອງພຣະອົງ"* ເຮົາສາມາດຮູ້ໄດ້ວ່າເປັນການລົງໂທດຈາກເບື້ອງເທິງ ເພາະວ່າຫລາຍເທື່ອເຮົາມັກຈະຄິດວ່າ ສິ່ງບໍ່ດີເກີດຂຶ້ນກັບຄົນດີ ແຕ່ເຮົາລືມຄິດໄປວ່າສິ່ງບໍ່ດີເກີດຂຶ້ນໃນຊີວິດຂອງເຮົານັ້ນອາດເປັນເພາະບາບຂອງເຮົາກໍເປັນໄດ້ເມື່ອມີບາບ ໆນັ້ນກໍນໍາໄປສູ່ຄວາມມືດ, ໃນຂະນະທີ່ຢູ່ໃນຄວາມມືດນັ້ນຈະບໍ່ຮູ້ວ່າຕົນເອງເຮັດອັນໃດຖືກ ແລະອັນໃດຜິດ. ເມື່ອເວົ້າເຖິງເຣື່ອງນີ້ຂ້າພະເຈົ້າຄິດເຫັນຄຣິສຕຽນຫລາຍຄົນຫລົງທາງກັບຄືນໄປໃຊ້ຊີວິດໃນຄວາມມືດຕຶບໜາ ກິນເຫລົ້າເມົາສຸຣາ, ເຮັດການຊົ່ວຊ້າຫລາຍກວ່າແຕ່ກ່ອນກໍມີຫລວງຫລາຍ ຄຣິສຕຽນປະເພດນີ້ທ່ານກໍອາດພົບເຫັນເຊັ່ນດຽວກັນ. ການທີ່ຄຣິສຕຽນເຫລົ່ານີ້ເປັນເຊັ່ນນີ້ບໍ່ໄດ້ໝາຍຄວາມວ່າເຂົາບໍ່ຮູ້ຈັກພຣະເຈົ້າດອກ ແຕ່ເປັນເພາະວ່າພຣະ

ເຈົ້າຊົງພຣະພິໂຣດທີ່ເຂົາບໍ່ຟັງຄວາມ ຈຶ່ງປ່ອຍປະໃຫ້ເຂົາຕົກໃນສະພາບເຊັ່ນນັ້ນ   ແຕ່ຫາກເມື່ອໃດເຂົາຫາກຄິດຫລົບລ່າວຕາວຄືນຫາພຣະເຈົ້າພຣະອົງກໍຈະຊົງເປີດແຂນຕ້ອນຮັບເຂົາເໝືອນພໍ່ເປີດແຂນຕ້ອນຮັບລູກເໝືອນ  ດັ່ງເຣື່ອງບຸດຫລົງຫາຍໃນພຣະທັມລູການັ້ນ.

ເວລາຂ້າພະເຈົ້າຍັງເປັນເດັກນັ້ນ ຂ້າພະເຈົ້າບໍ່ຄ່ອຍເປັນຄົນຟັງຄວາມພໍ່ຄວາມແມ່ເທົ່າໃດ ຈົນລາງເທື່ອເພິ່ນກໍຈົ່ມວ່າບໍ່ຟັງຄວາມປານນີ້ຈະປະໃຫ້ມັນອຶດຢາກສາບໍ່? ແລະລາງເທື່ອກໍຖືກໄມ້ແສ້ຊ້ຳເພາະບໍ່ຟັງຄວາມ.   ຂ້າພະເຈົ້າເປັນເດັກນ້ອຍມັກງອຍຫົວຂັ້ນໄດເຮືອນ, ພໍ່ແລະແມ່ສັ່ງວ່າ "ລູກຢ່າງອຍຫົວຂັ້ນໄດຫລາຍຈັກໜ່ອຍຈະຕົກແລ້ວ" ຂ້າພະເຈົ້າກໍຕອບວ່າບໍ່ຕົກດອກ ເວົ້າບໍ່ນານເທົ່າໃດກໍຕົກຂັ້ນໄດແທ້ ໆ   ເມື່ອຕົກແລ້ວກໍໃຫ້ຢາກໃຫ້ພໍ່ແມ່ມາອອຍເອົາ ແຕ່ກໍກົງກັນຂ້າມເພິ່ນຊ້ຳຕີອີກຊ້ຳເພາະເວົ້າບໍ່ຟັງ.  ຂ້າພະເຈົ້າຄິດວ່າພຣະເຈົ້າກໍຮັກເຮົາຄືລູກແທ້ ໆຂອງພຣະອົງເມື່ອບໍ່ຟັງຄວາມເພິ່ນກໍຕີສອນ ເພື່ອເທື່ອໜ້າຈະບໍ່ເຮັດຄືເກົ່າອີກ. ໃນບົດເພງຄ່ຳຄວນທີ່ເຮົາກຳລັງເວົ້າກັນນີ້ກໍເປັນດັ່ງນັ້ນແທ້.

<u>ເພງຄ່ຳຄວນ 3:19-25</u>

19 *ຂໍຊົງຈຳຄວາມທຸກໃຈ ແລະຄວາມຖືກບັບຄັ້ນຂອງຂ້າພະເຈົ້າກໍເຕັມດ້ວຍຢາພິດອັນຂົມຂື່ນ*
20 *ຈິດວິນຍານຂອງຂ້າພະເຈົ້າຍັງນຶກເຖິງຢ່າງບໍ່ສິ້ນສຸດ ແລະຕ້ອງກົ້ມລົງພາຍໃນຕົວຂ້າພະເຈົ້າ*
21 *ຂ້າພະເຈົ້າຫວນຄິດຂຶ້ນມາໄດ້ ຂ້າພະເຈົ້າມີຄວາມຫວັງຂຶ້ນເມື່ອຄິດໄດ້ວ່າ*
22 *ຄວາມຮັກໝັ້ນຄົງຂອງພຣະເຈົ້າບໍ່ເຄີຍຢຸດຢັ້ງ ແລະພຣະເມດຕາຂອງພຣະເຈົ້າບໍ່ມີສິ້ນສຸດ*
23 *ເປັນຂອງໃໝ່ຢູ່ທຸກເວລາເຊົ້າ ຄວາມທ່ຽງຕົງຂອງພຣະອົງຍິ່ງໃຫຍ່ນັກ*
24 *ຈິດໃຈຂອງຂ້າພະເຈົ້າວ່າ, "ພຣະເຈົ້າຊົງເປັນສ່ວນຂອງຂ້າພະເຈົ້າເຫດສັນນີ້ຂ້າພະເຈົ້າຈະຫວັງໃນພຣະອົງ"*
25 *ພຣະເຈົ້າຊົງດີຕໍ່ຄົນທັງປວງທີ່ຄອຍຖ້າພຣະອົງຢູ່ ແລະຊົງດີຕໍ່ຄົນທີ່ສແວງຫາພຣະອົງ*

## <u>ຄິດໄດ້ໃນທາງດີ</u> 3:19-25

ການຮູ້ຈັກຄິດໃນທາງບວກເປັນການຄິດທີ່ດີ ເພາະມັນເປັນການໃຫ້ກຳລັງໃຈຕົນເອງ, ການໃຫ້ກຳລັງໃຈຕົນເອງນີ້ເປັນການສຳຄັນທີ່ສຸດ ດ້ວຍວ່າຫາກບໍ່ມີກຳລັງໃຈແລ້ວເຮັດຫຍັງກະບໍ່ໄດ້,  ທ່ານໝໍແນະນຳຄົນທີ່ເປັນສະໂຕຣກວ່າຫາກໃຈສູ້ຮ່າງກາຍທີ່ເປັ້ຍລ່ອຍກໍຈະຄືນມາແຕ່ບໍ່ແມ່ນຮ້ອຍເປີເຊັນ.  ຄຳວ່າໃຈສູ້ທີ່ເພິ່ນກ່າວແປວ່າໝັ້ນທັດກາຍເພື່ອໃຫ້ເລືອດທີ່ມັນກ້າມໃນສມອງນັ້ນລະລາຍ ເມື່ອເລືອດທີ່ກ້າມລະລາຍຮ່າງກາຍກໍຈະດີຄືນມາ.   ຜູ້ປະພັນເພງຄ່ຳຄວນໄດ້ຈົ່ມໃນຕອນທຳອິດ ມາເຖິງບັດນີ້ເພິ່ນຄິດໄດ້ວ່າ   "*ຂ້າພະເຈົ້າຫວນຄິດຂຶ້ນມາໄດ້ ຂ້າພະເຈົ້າມີຄວາມຫວັງຂຶ້ນເມື່ອຄິດໄດ້ວ່າຄວາມຮັກໝັ້ນຄົງຂອງພຣະເຈົ້າບໍ່ເຄີຍຢຸດຢັ້ງ*" ຄຳວ່າຫວນຄິດໄດ້ມັນເປັນຄືຊວດຮູ້ເມື່ອຄິງຄືບຸດຫລົງຫາຍທີ່ຊວດຮູ້ເມື່ອຄິງວ່າຕົນເອງໄດ້ເຮັດຕໍ່ພໍ່, ຕໍ່ສວັນວັນແລ້ວຈຶ່ງຄິດກັບຄືນຫາພໍ່ເພື່ອຈະພົ້ນຈາກການອຶດຫິວ.   ມັນເປັນການຄິດທີ່ຖືກຕ້ອງທີ່ຮູ້ວ່າຕົນເອງເປັນຄົນຜິດຕໍ່ຄຳສອນຂອງພຣະເຈົ້າເພື່ອຈະໄດ້ກັບຄືນສູ່ທາງເດີມ. ຫລາຍຄົນໃນສມັຍນີ້ໄດ້ຄິດໃນທາງລົບໃນເມື່ອພົບກັບອຸປສັກຕ່າງ ໆແລ້ວຄິດວ່າພຣະເຈົ້າບໍ່ເບິ່ງແຍງ ການຄິດດັ່ງນີ້ເຮັດໃຫ້ຫລາຍຄົນໜີຈາກພຣະເຈົ້າໄປແລ້ວ. ບົດເພງຄ່ຳຄວນທີ່ກຳລັງສຶກສາກັນໃນວັນນີ້ອາດຊ່ອຍເຮົາທັງຫລາຍບໍ່ໃຫ້ຫລົງທາງ ແລະອາດສາມາດຊ່ອຍຄົນທີ່ຫລົງທາງແລ້ວກັບຄືນຫາພຣະເຈົ້າກໍເປັນໄດ້ຫາກເພິ່ນເຂົ້າໃຈວ່າພຣະເຈົ້າຊົງເປັນຄວາມຫວັງ  ດັ່ງບົດເພງຄ່ຳຄວນກ່າວວ່າ "*ພຣະເຈົ້າຊົງເປັນສ່ວນຂອງຂ້າພະເຈົ້າ ເຫດສັນນີ້ຂ້າພະເຈົ້າຈະຫວັງໃນພຣະອົງ ພຣະເຈົ້າຊົງດີຕໍ່ຄົນທັງປວງທີ່ຄອຍຖ້າພຣະອົງຢູ່ ແລະຊົງດີຕໍ່ຄົນທີ່ສແວງຫາພຣະອົງ*" (ຂໍ້ 24-25)

ຂ້າພະເຈົ້າມີໂອກາດໄດ້ໂອ້ລົມກັບຄອບຄົວນຶ່ງທີ່ຜິດຖຽງກັນເພາະຄິດໃນທາງລົບດັ່ງນີ້;   ຫລັງຈາກມາຕັ້ງຖິ່ນຖານຢູ່ຕ່າງປະເທດເປັນເວລາດົນນານກໍສາມາດນຳເອົາພໍ່ແມ່ແລະອ້າຍເອື້ອຍນ້ອງມາຢູ່ນຳກັນ,   ເມື່ອມາຢູ່ໃກ້ກັນກໍມີປາກມີສຽງກັນຕາມພາສາອ້າຍເອື້ອຍນ້ອງ,   ຜູ້ທີ່ມາຕາມຫລັງຈົ່ມວ່າຮູ້ວ່າເປັນແນວນີ້ບໍ່ມາຊ້ຳດອກ, ຜູ້ມາກ່ອນພັດຈົ່ມ

ວ່າຮູ້ວ່າເປັນແນວນີ້ຈ້າງກະບໍ່ເອົາມາດອກ. ທັງສອງຝ່າຍໄດ້ເບິ່ງທາງລົບຂອງກັນແລະກັນຈົນລືມໄປວ່າພຣະພອນນັ້ນແມ່ນໄດ້ມາຢູ່ຮ່ວມກັນ, ມີການງານອັນໃດໜັກຫລືເບົາກໍສາມາດແບ່ງພາຣະກັນໄດ້ ແລະກໍລືມໄປວ່າພໍ່ແມ່ກໍາລັງຮ້ອງໄຫ້ເຫັນລູກຜິດຖຽງກັນ, ການຈະມາຢູ່ດ້ວຍກັນກໍບໍ່ແມ່ນຂອງງ່າຍ ໃຊ້ຈ່າຍເງິນຄໍາຕັ້ງຫລວງຫລາຍ ຜູ້ຈະມາກໍເວົ້າວ່າຂໍແຕ່ໃຫ້ໄດ້ມາຈະບໍ່ລືມບຸນລືມຄຸນດອກ. ເມື່ອເລົ່າເຖິງຕອນນີ້ທັງສອງກໍຄິດໄດ້ຊວດຮູ້ເມື່ອຈຶ່ງຂໍໂທດກັນ.

## <u>ຫວັງໃຈໃນພຣະເຈົ້າ</u> 3:26-30

*26 ເປັນການດີທີ່ຈະຫວັງໃຈ ແລະລໍຄອຍຄວາມລອດຈາກພຣະຜູ້ເປັນເຈົ້າ*

*27 ເປັນການດີທີ່ຄົນເຮົາຈະແບກແອກໃນປະຖົມວັຍ*

*28 ໃຫ້ເຂົານັ່ງງຽບໆ ຢູ່ແຕ່ລໍາພັງ ເພາະພຣະອົງຊົງວາງແອກນັ້ນເອງ*

*29 ໃຫ້ເຂົາເອົາປາກຈົດໄວ້ໃນຝຸ່ນຂີ້ດິນ (ຖ້າທໍາດັ່ງນັ້ນຍັງຈະມີຫວັງ)*

*30 ໃຫ້ເຂົາອ່ຽງແກ້ມໃຫ້ຜູ້ທີ່ຕີບເຂົາ ໃຫ້ເຂົາຍອມຮັບຄວາມອັບອາຍຢ່າງເຕັມປ່ຽມເຖີດ*

ເພງຄໍ່າຄວນຕອນນີ້ເປັນໜົນທາງນໍາໄປສູ່ອະນາຄົດອັນສົດໃສ ເພາະເປັນຕອນນຶ່ງທີ່ບອກກັບຜູ້ອ່ານໃຫ້ລໍຄອຍຢ່າງສງົບເພື່ອພຣະເຈົ້າຈະນໍາໄປສູ່ຄວາມຫວັງ. ມັນເປັນຂອງທັມມະດາທີ່ຄົນເຮົາມັກຈົ່ມເລັກຈົ່ມນ້ອຍໃນເຣື່ອງຕ່າງ ໆ ຈົນລາງເທື່ອກໍຈົ່ມໃຫ້ພຣະເຈົ້າຄ້າຍຄືລູກເຮົາຈົ່ມໃຫ້ເຮົາທຸກວັນນີ້ ວ່າພໍ່ແມ່ບໍ່ຊື້ອັນນັ້ນອັນນີ້ໃຫ້ເໝືອນດັ່ງພໍ່ແມ່ຜູ້ອື່ນ. ວັນນຶ່ງຂ້າພະເຈົ້ານັ່ງລົມກັບລູກວ່າ ສົມມຸດວ່າຄອບຄົວນຶ່ງມີລູກສອງຄົນ ຜູ້ທີນຶ່ງເປັນຄົນມັກຈົ່ມໃຫ້ພໍ່ແມ່ເລື້ອຍ ໆວ່າບໍ່ຊື້ໃຫ້ລູກພຽງພໍທຸກຢ່າງແລະຍັງບອກພໍ່ແມ່ວ່າພໍ່ແມ່ບໍ່ຮັກແລະບໍ່ດີນໍາລູກ, ສ່ວນຜູ້ທີສອງເປັນລູກຟັງຄວາມແລະຮູ້ຈັກຍ້ອງພໍ່ແມ່ເລື້ອຍ ໆວ່າພໍ່ແມ່ດີຫລາຍ ລູກຮູ້ສຶກວ່າເປັນຄົນທີ່ໄດ້ຮັບພຣະພອນຫລາຍທີ່ມີພໍ່ມີແມ່ແນວນີ້. ຫລັງຈາກນັ້ນຂ້າພະເຈົ້າກໍຖາມລູກວ່າຫາກລູກເປັນພໍ່ລູກຈະຊື້ໃຫ້ຜູ້ໃດ? ລູກກໍຕອບວ່າຈະຊື້ໃຫ້ຜູ້ຍ້ອງພໍ່ແມ່ນັ້ນແຫລະ. ຄຣິສຕຽນເຮົາລາງເທື່ອກໍຈົ່ມຫລາຍໂພດຈົນພຣະເຈົ້າບໍ່ຟັງຮອດຄໍາອ້ອນວອນ. ບົດຮຽນນີ້ສອນເຮົາໃຫ້ເປັນລູກຟັງຄວາມເພື່ອຈະໄດ້ພຣະພອນ.

## <u>ຮູ້ວ່າເປັນນໍ້າພຣະທັຍ</u> 3:31-41

*31 ດ້ວຍວ່າພຣະເຈົ້າຈະບໍ່ຊົງປະຖິ້ມເປັນນິດດອກ*

*32 ແຕ່ວ່າຖ້າພຣະອົງຊົງກະທໍາໃຫ້ເກີດຄວາມເສົ້າໂສກ ພຣະອົງຈະຊົງພຣະກະຣຸນາຕາມຄວາມຮັກໝັ້ນຄົງອັນລົ້ນເຫລືອຂອງພຣະອົງ*

*33 ເພາະພຣະອົງບໍ່ຊົງພໍພຣະທັຍທີ່ໄດ້ທໍາໃຫ້ເກີດຄວາມທຸກໃຈ ຫລືລູກຫລານມະນຸດມີຄວາມໂສກ*

*34 ການຢຽບຢໍ່າ ບັນດາຊະເລີຍແຫ່ງແຜ່ນດິນໂລກໄວ້ໃຕ້ຕີນກໍດີ*

*35 ການຕັດສິດຂອງມະນຸດຜູ້ນຶ່ງຜູ້ໃດຕໍ່ພຣະພັກຜູ້ຍິ່ງໃຫຍ່ສູງສຸດກໍດີ*

*36 ຖ້າເຂົາທໍາຜິດຕໍ່ຜູ້ນຶ່ງຜູ້ໃດໃນຄະດີແຫ່ງຕົນ ພຣະເຈົ້າບໍ່ຊົງພໍພຣະທັຍເລີຍ*

*37 ຜູ້ໃດຈະສັ່ງແລະໃຫ້ເປັນໄປໄດ້ນອກຈາກເມື່ອພຣະເຈົ້າຊົງສະຖາປະນາໃຫ້ເປັນໄປ*

*38 ນອກຈາກພຣະໂອດຂອງພຣະຜູ້ສູງສຸດນັ້ນບໍ່ແມ່ນມີມາທັງຮ້າຍແລະດີ ຍາກແລະສະບາຍຫລື*

*39 ມະນຸດເປັນ ໆຈະໄປຈົ່ມເອົາກັບໃຜ ຄືມະນຸດທີ່ຖືກທໍາໂທດເພາະບາບຂອງຕົນ*

*40 ໃຫ້ພວກເຮົາທົດສອບ ແລະພິຈາຣະນາວິຖີຂອງພວກເຮົາ ແລະກັບມາຫາພຣະຜູ້ເປັນເຈົ້າເຖີດ*

*41 ໃຫ້ພວກເຮົາຍົກຈິດໃຈ ແລະມືຂອງພວກເຮົາຂຶ້ນຕໍ່ພຣະເຈົ້າໃນຟ້າສວັນ*

ແມ່ນຫຍັງຄືຈຸດປະສົງຂອງການຮຽນພຣະຄັມພີ? ເປັນຄໍາຖາມຂອງມະຫາວິທະຍາລັຍພຣະຄັມພີທີ່ຖາມກັນມາເລື້ອຍໆ. ຄໍາຕອບມີຢູ່ວ່າ ຮຽນເພື່ອຈະຮູ້ຈັກນໍ້າພຣະທັຍພຣະເຈົ້າ, ຮູ້ຈັກແຜນການຂອງພຣະເຈົ້າ, ຮູ້ຈັກການເປັນ

ມາຂອງພຣະເຈົ້າ, ຮູ້ຈັກການເປັນມາຂອງຄົນເອງ, ຮ ູ້ຈັກເຫດການຂອງໂລກລ່ວງໜ້າ. ສລູບແລ້ວແມ່ນການຢາກຮູ້ຢາກເຫັນຫລືຢາກເຂົ້າໃຈນັ້ນເອງ ແຕ່ການຮຽນຮູ້ແລະເຂົ້າໃຈເປັນການເລີ້ມຕົ້ນເທົ່ານັ້ນ. ຫາກຈະເວົ້າກັນງ່າຍ ໆແລ້ວແມ່ນການຮຽນກໍເພື່ອຮູ້, ການຮູ້ກໍເພື່ອຈະເຮັດຖືກຕາມພຣະທັມ ຫລືຮູ້ຈັກນໍ້າພຣະທັຍ (ໃຈ) ພຣະເຈົ້າເພື່ອຈະໄດ້ປະຕິບັດໃຫ້ຖືກຕ້ອງຕາມນໍ້າພຣະທັຍພຣະເຈົ້າ ສ່ວນໝາກຜົນຂອງການປະຕິບັດຕາມນໍ້າພຣະທັຍແມ່ນພຣະພອນຈາກພຣະອົງໃນຫລາຍຮູບແບບ. ໃນພຣະທັມຕອນນີ້ໄດ້ບອກໃຫ້ເຮົາຮູ້ວ່າລາງເທື່ອນັ້ນພຣະເຈົ້າມີພຣະທັຍໃຫ້ພວກເຮົາທຸກໂສກເສົ້າ ເພື່ອເຮົາຈະໄດ້ກາຍເປັນຄົນຖ່ອມຕົວຢ່າງແທ້ຈິງ ແຕ່ຄວາມຮັກໝັ້ນຄົງແລະຄວາມເມດຕາສົງສານຂອງພຣະອົງຈະມີກັບບັນດາຜູ້ທີ່ເຊື່ອໃນພຣະອົງສເມີ ຄືພຣະອົງຈະບໍ່ປະປ່ອຍໃຫ້ເຮົາທຸກໂສກຈົນເກີນກວ່າກຳລັງຂອງເຮົາ, ແລະລາງເທື່ອຄວາມທຸກທີ່ເຮົາໄດ້ຮັບນັ້ນອາດເປັນຍ້ອນບາບຂອງເຮົາກໍເປັນໄປໄດ້ ໃນຕອນທ້າຍພຣະທັມເພງຄໍ່າຄວນໄດ້ກ່າວວ່າ *ໃຫ້ພວກເຮົາ ທົດສອບ ແລະພິຈາຣະນາວິຖີຂອງພວກເຮົາ ແລະກັບມາຫາພຣະຜູ້ເປັນເຈົ້າເຖີດໃຫ້ພວກເຮົາຍົກຈິດໃຈ ແລະມືຂອງ ພວກເຮົາຂຶ້ນຕໍ່ພຣະເຈົ້າໃນຟ້າສວັນ* (ຂໍ້ 40-41).

**<u>ຄຳຖາມ:</u>**

1. ຄຳວ່າ *ຂ້າພະເຈົ້າເປັນຄົນທີ່ໄດ້ເຫັນຄວາມທຸກໃຈ ໂດຍໄມ້ແສ້ແຫ່ງພຣະພິໂຣດຂອງພຣະອົງ* (ຂໍ້ 1) ທ່ານເຂົ້າໃຈແນວໃດ?
2. ເປັນຫຍັງພຣະອົງຈຶ່ງບໍ່ຟັງຄຳອ້ອນວອນຂອງລາວ? (ຂໍ້ ໘).

3. *ຂ້າພະເຈົ້າຫວນຄິດຂຶ້ນມາໄດ້ ຂ້າພະເຈົ້າມີຄວາມຫວັງຂຶ້ນ* (ຂໍ້ ໒1) ເປັນຫຍັງຈຶ່ງມີຄວາມຫວັງ?

4. ສຸດທ້າຍຂໍ້ 40-41 ເຢເຣມີຢາ ແນະນຳໃຫ້ເຮົາເຮັດຫຍັງ?

*ດຣ. ທຸມພັນ ວົງສຸຣິດທ໌*